# ກອງປະຊຸມໃຫຍ່ຄັ້ງທີ II

# ຂອງ

# ແມ່ຍິງລາວທົ່ວປະເທດ

13-14 ຕຸລາ 1988

# ບັນດາເອກະສານສຳຄັນ

ຂອງ

# ກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ II

ຈັດພິມໂດຍ ສູນກາງສະຫະພັນແມ່ຍິງລາວ

ອຸທິນ ບຸນຍາວົງ



* ຄະນະປະທານຂອງກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ II

(໑໓-໑໔/໑໐/໑໙໘໘ ທີ່ນະຄອນຫລວງວຽງຈັນ)



* ບັນດາຜູ້ແທນສົມບູນແລະແຂກທີ່ມີກຽດເຂົ້າຮ່ວມກອງປະຊຸມໃຫຍ່
ແມ່ຍິງລາວທົ່ວປະເທດຄັ້ງທີ II



*ບັນດາຜູ້ແທນສົມບູນເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ II



* ທ່ານນາງເພັດສະໜອນລາຊະສິມມາ ກຳມະການສູນກາງພັກ ຮອງປະທານ ສະຫະພັນແມ່ຍິງລາວ ກ່າວສູນທອນພິດໄຂກອງປະຊຸມໃຫຍ່ ແມ່ຍິງລາວທົ່ວປະເທດຄັ້ງທີ່ II

## ສູນທອນພິດ
## ໄຂພິທີກອງປະຊຸມໃຫຍ່ ສະຫະພັນແມ່ຍິງລາວ
## ຄັ້ງ ທີ່ II

-----+++++-----

ຮຽນ ສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ເຄົາລົບຮັກ

ຮຽນ ບັນດາທ່ານຜູ້ນຳ ພັກ-ລັດ ທີ່ນັບຖື

ຮຽນ ແຂກຜູ້ມີກຽດ ທີ່ນັບຖື

ບັນດາສະຫາຍ ຜູ້ແທນທີ່ຮັກແພງ

ມື້ນີ້ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ II ຂອງສະຫະພັນແມ່ຍິງລາວໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ, ໃຕ້ບັນຍາກາດທີ່ທົ່ວພັກ ທົ່ວປວງຊົນບັນດາເຜົ່າພວມອອກແຮງແຂ່ງຂັນກັນປະຕິບັດມະຕິຄັ້ງທີ III - IV ແລະ ມະຕິຕ່າງໆ ຂອງພັກ ແລະ ລັດ, ສູ້ຊົນຫັນປ່ຽນຈິນຕະນາການເກົ່າໄປສູ່ ຈິນຕະນາການໃໝ່, ຫັນປ່ຽນກົນໄກຄຸ້ມຄອງແບບບໍລິຫານອາດຍາສິດເກືອກູນໄປສູ່ກົນໄກໄລ່ລຽງເສດຖະກິດໃໝ່ສັງຄົມນິຍົມ, ປະຕິບັດ ສອງໜ້າທີ່ຍຸດທະສາດຂອງພັກຄື: ປົກປັກຮັກສາປະເທດຊາດ ແລະ ກໍ່ ສ້າງສັງຄົມນິຍົມ, ອັນໄດ້ເປັນຂີດໝາຍສຳຄັນຍິ່ງແຫ່ງການເຕີບໃຫຍ່ຂະ ຫຍາຍຕົວທາງດ້ານຈຳນວນ ແລະ ຄຸນນະພາບຂອງສະຫະພັນແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າ ໃນທຸກຂຸ້ນຄົນ.

ໃນວາລະ ອັນປຽມລົ້ນໄປດ້ວຍຄວາມເອກອ້າງທະນົງໃຈນີ້; ກອງປະຊຸມໃຫຍ່ຂອງພວກເຮົາຍິ່ງຮູ້ບຸນຄຸນ ແລະ ຄະນຶງເຖິງບັນດາສະຫາຍນັກ ຮົບປະຕິວັດ, ສະມາຊິກສະຫະພັນແມ່ຍິງທີ່ໄດ້ອຸທິດຊີວິດຂອງຕົນ ເພື່ອພາລະ

ກິດປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມຢ່າງພົລະອາດຫານ.

ຂ້າພະເຈົ້າຂໍສະເໜີບັນດາສະຫາຍ ລຸກຂຶ້ນກົ້ມຫົວໄວ້ອາໄລ 1 ນາທີ

ບັນດາທ່ານ ແລະ ບັນດາສະຫາຍ ,

ກອງປະຊຸມໃຫຍ່ຄັ້ງນີ້ຈະໄດ້ຮັບຟັງ ແລະ ຄົ້ນຄວ້າຄຳໂອວາດ ຕັກເຕືອນຂອງສະຫາຍ ເລຂາທິການໃຫຍ່ ໄກສອນ ພົມວິຫານ, ກ່ຽວກັບວຽກງານແມ່ຍິງລາວ ໃນໄລຍະໃໝ່, ຜ່ານ ແລະ ຮັບຮອງເອົາບົດລາຍງານການເມືອງ, ກົດລະບຽບດັດແປງ, ແລະ ເລືອກຕັ້ງຄະນະບໍລິຫານ ງານສູນກາງສະຫະພັນແມ່ຍິງລາວຊຸດໃໝ່.

ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງນີ້ ມີຜູ້ແທນສົມບູນ 225 ສະຫາຍ ທີ່ຖືກເລືອກຕັ້ງມາຈາກທຸກເຂດ, ແຂວງ, ຂະແໜງການ, ກົມກອງ ຕ່າງໆ ໃນທົ່ວປະເທດ, ເຊິ່ງເປັນຕົວແທນໃຫ້ແກ່ສະມາຊິກສະຫະພັນແມ່ຍິງ ຈຳນວນ 4 ແສນ 9 ໝື່ນ ກວ່າສະຫາຍ.

ກອງປະຊຸມໃຫຍ່ພວກເຮົາມີຄວາມປິຕິຊົມຊື່ນ, ເປັນກຽດຢ່າງສູງທີ່ໄດ້ຂ້ຳນັບຮັບຕ້ອນສະຫາຍ ເລຂາທິການໃຫຍ່ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກ, ຂ້ຳນັບຮັບຕ້ອນບັນດາທ່ານ ຜູ້ນຳພັກ-ລັດທີ່ໄດ້ນຳເອົາອາລົມຈິດປະຕິວັດອັນສູງສົ່ງ ແລະ ຄວາມຮັກແພງອັນສຸດຊຶ້ງມາຍັງ ກອງປະ ຊຸມໃຫຍ່, ພວກເຮົາຂໍສະແດງຄວາມເຄົາລົບ ແລະ ຊົມເຊີຍຢ່າງສຸດອົກສຸດໃຈ

ຮັບຄຳເຊີນເຂົ້າຮ່ວມເປັນກຽດແກ່ກອງປະຊຸມໃຫຍ່ຄັ້ງນີ້ຍັງມີທ່ານ ຜູ້ແທນວິລະສະຕີ, ນັກຮົບປະຕິວັດອາວຸໂສ, ຜູ້ແທນໃນວົງການຕ່າງໆ ຂອງພັກ, ລັດ ແລະ ບັນດາອົງການຈັດຕັ້ງມະຫາຊົນແຕ່ຂັ້ນສູນກາງ ເຖິງ ທ້ອງຖິ່ນ ໃນທົ່ວປະເທດ.

ກອງປະຊຸມໃຫຍ່ພວກເຮົາ ຂໍສະແດງຄວາມຈິງໃຈຂ້ຳນັບຮັບຕ້ອນ ຄະນະຜູ້ແທນບັນດາປະເທດສັງຄົມນິຍົມອ້າຍນ້ອງ ແລະ ເພື່ອນມິດສາກົນ ທີ່ໄດ້

ນຳເອົາອາລົມຈິດ, ມິດຕະພາບອັນດູດດື່ມມາສູ່ກອງປະຊຸມໃຫຍ່ພວກເຮົາ.

- ຊົມເຊີຍຄະນະຜູ້ແທນ ສະຫະພັນແມ່ຍິງຫວຽດນາມ ນຳໂດຍ ສະຫາຍນາງ ຫງວຽນ ທິເຫີນ ກຳມະການສູນກາງພັກ, ຮອງປະທານ ທັງເປັນເລຂາທິການໃຫຍ່ສູນກາງສະຫະພັນແມ່ຍິງຫວຽດນາມ.

- ຊົມເຊີຍຄະນະຜູ້ແທນ ຄະນະກຳມະການແມ່ຍິງໂຊວຽດ ນຳໂດຍ ສະຫາຍ ນາງ ເນນເລັຽ ປາໂວບນາ ກິລອົກ, ເລຂາຄະນະປະທານຂອງໂຊວຽດສູງສຸດ ຂອງໂມນູດາວີ, ປະທານສະພາແມ່ຍິງຂອງໂມນດາວີ.

- ຊົມເຊີຍຄະນະຜູ້ແທນ ສະມາຄົມແມ່ຍິງປະຕິວັດກຳປູເຈຍ ນຳໂດຍ ສະຫາຍ ນາງ ມຸດ ກິມລາຍ ຮອງປະທານສະມາຄົມແມ່ຍິງປະຕິວັດ ກຳປູເຈຍ.

- ຊົມເຊີຍຄະນະຜູ້ແທນ ສະຫະພັນແມ່ຍິງຮົງກາລີ ນຳໂດຍ ສະຫາຍ ນາງ ເວວາ ເອີດເຊັດ, ປະທານສະພາແມ່ຍິງຊົນຊາດ ຮົງກາລີ.

- ຊົມເຊີຍຄະນະຜູ້ແທນ ຄະນະແມ່ຍິງປະຊາທິປະໄຕ ເກົາຫຼີ ນຳໂດຍ ສະຫາຍ ນາງ ທັນເກັຽໂອກ ຄະນະປະຈຳສູນກາງແມ່ຍິງ ປະຊາທິປະໄຕ ເກົາຫຼີ.

- ຊົມເຊີຍຄະນະຜູ້ແທນ ສະພາສັດຕິໄທ ນຳໂດຍ ນາງ ເຮືອນແກ້ວ ກູຢາກາ-ກາມົນບັຮນ.

- ຊົມເຊີຍຄະນະຜູ້ແທນ ສະຫະພັນແມ່ຍິງປະຊາທິປະໄຕ ເຢຍລະມັນ ນຳໂດຍສະຫາຍ ນາງ ດຣ ເຣີນາຕາຢາກ ພັນລະຍາທູດ ສ.ປ.ຢ ປະຈຳ ສ.ປ.ປ.ລ.

- ຊົມເຊີຍຄະນະຜູ້ແທນສະພາແມ່ຍິງ ໂປໂລຍ ນຳໂດຍສະຫາຍນາງ ກີສຕິນ ຟົ້ງເຊັກ ພັນລະຍາທູດ ໂປໂລຍ ປະຈຳ ສ ປ ປ ລ.

- ຊົມເຊີຍຄະນະຜູ້ແທນ ສະຫະພັນແມ່ຍິງເຊັກໂກສະໂລວາກີ ນຳໂດຍ ສະຫາຍ ນາງ ເອວາ ມີສລີວັກໂກວາ ພັນລະຍາທູດ ເຊັກໂກ ສະ

ໂລວາກີ ປະຈຳ ສ ປ ປ ລ .

- ຊົມເຊີຍຄະນະຜູ້ແທນ ຄະນະກຳມະການຂະບວນການ ບູນກາລີ ນຳໂດຍ ສະຫາຍ ນາງ ວິກຕໍລິກ ໂຊລາໂກວາ ພັນລະຍາ ອຸບປະທູດ ບູນກາລີ ປະຈຳ ສ ປ ປ ລ .

- ຊົມເຊີຍຄະນະຜູ້ແທນ ຄະນະສະຫະພັນແມ່ຍິງ ກູບາ ນຳໂດຍ ສະຫາຍ ນາງ ມີເກີລີນາ ອີວາເດີ ປວງເຕີ ພັນລະຍາ ອຸບປະທູດ ກູບາ ປະຈຳ ສ ປ ປ ລ .

ໃນໂອກາດອັນສະຫງ່າລາສີນີ້ ໃນນາມຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ສະໄຫມທີ I ຂ້າພະເຈົ້າຂໍປະກາດໄຂກອງປະຊຸມໃຫຍ່ຄັ້ງທີ II ເປັນທາງການ .

* ຂໍ ຂອບ ໃຈ *

-÷÷÷÷-






* ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ ປະທານສະພາລັດຖະມົນຕີ ໄດ້ໂອ້ລົມຕໍ່ກອງປະຊຸມໃຫຍ່ ແມ່ຍິງລາວທົ່ວປະເທດ ຄັ້ງທີ່ II

## ສູນທອນພິດ

### ຂອງ ສະຫາຍ ໄກສອນ ພົມວິຫານ

ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານສະພາລັດຖະມົນຕີແຫ່ງ ສປປລ ຕໍ່ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງລາວ. (ໃນວັນທີ 13 ຕຸລາ 1988 ທີ່ນະ ຄອນຫຼວງ ວຽງຈັນ )

---

ຮຽນ ຄະນະປະທານ ,

ສະຫາຍ ແລະ ເພື່ອນມິດທີ່ຮັກແພງທັງຫຼາຍ !

ຂ້າພະເຈົ້າມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ໄດ້ມາຮ່ວມກອງປະ ຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງລາວ. ກອງປະຊຸມໃຫຍ່ຄັ້ງນີ້ ເປັນເຫດການ ການເມືອງອັນໜຶ່ງທີ່ສຳຄັນ ແລະ ເປັນຂີດໝາຍແຫ່ງການເຕີບໃຫຍ່ຂອງຂະບວນການແມ່ຍິງລາວເຮົາ, ພ້ອມກັນນັ້ນມັນກໍ່ເປັນການຕອບສະໜອງຢ່າງທັນການຕໍ່ຄວາມເລັ່ງທວງແຫ່ງການປ່ຽນແປງໃໝ່ຂອງພັກ ແລະ ລັດເຮົາ ເພື່ອເລັ່ງລັດການຂະຫຍາຍຕົວໃນທຸກດ້ານຂອງປະເທດ, ເຊິ່ງແມ່ຍິງເຜົ່າຕ່າງໆ ມີຄວາມຮັບຜິດຊອບອັນໜັກໜ່ວງ ແລະ ກໍ່ເປັນເພດທີ່ມີຄວາມສາມາດອັນໃຫຍ່ຫຼວງທີ່ສຸດ .

ໃນນາມຄະນະບໍລິຫານງານສູນກາງພັກ ແລະ ສະພາ ລັດຖະມົນຕີ, ຂ້າພະເຈົ້າຂໍສະແດງຄວາມຄຳນັບຊົມເຊີຍກອງປະຊຸມໃຫຍ່ຄັ້ງນີ້ຢ່າງສຸດ ອົກສຸດໃຈ. ໂດຍຜ່ານບັນດາຜູ້ແທນ, ຂ້າພະເຈົ້າຂໍສົ່ງຄວາມຮັກໄຄ່ ອັນ ສະ

ຫມິດສະຫນົມ ແລະ ຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ໄປຍັງແມ່ຍິງ ເຜົ່າຕ່າງໆ ໃນທົ່ວປະເທດມານະໂອກາດນີ້ດ້ວຍ .

ຂ້າພະເຈົ້າກໍ່ຂໍສະແດງຄວາມຊົມເຊີຍຄະນະຜູ້ແທນຂອງແມ່ຍິງຕ່າງປະເທດ ທີ່ໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມ, ການສະຫນັບສະຫນູນ ແລະ ການໃຫ້ກຳລັງໃຈອັນໃຫຍ່ຫຼວງມາສູ່ແມ່ຍິງລາວກໍ່ຄື ປະຊາຊົນ ລາວຂອງພວກເຮົາຢ່າງສຸດອົກ ສຸດໃຈ.

ສະຫາຍ ແລະ ເພື່ອນມິດທັງຫຼາຍ ,

ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ່ I ຂອງສະຫະພັນແມ່ຍິງມານີ້, ແມ່ຍິງເຜົ່າຕ່າງໆ ຂອງພວກເຮົາໄດ້ມີຄວາມບາກບັ່ນບຸກບືນໃນຫຼາຍດ້ານ, ສ້າງຜົນງານອັນໃຫຍ່ຫຼາຍປະການ ອັນເປັນການປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ການຟື້ນຟູ , ຂະຫຍາຍເສດຖະກິດ-ສັງຄົມຂອງ ປະເທດເຮົາ.

ໂດຍສະຫນອງຕອບຢ່າງແຂງແຮງຕໍ່ແນວທາງແຫ່ງການປ່ຽນແປງໃຫມ່ຂອງພັກ, ແມ່ຍິງເຜົ່າຕ່າງໆ ທີ່ມີມູນເຊື້ອຮັກຊາດອັນດູດດື່ມ ໄດ້ເສີມຂະຫຍາຍຄຸນນະທຳອັນດີງາມ, ນຳໃຊ້ຫົວຄິດປັນຍາ ແລະ ສີມືລາຍມືອັນ ປານີດຂອງຕົນ ປະກອບສ່ວນຢ່າງສຳຄັນເຂົ້າໃນການເຄື່ອນໄຫວທາງດ້ານເສດຖະກິດ, ໂດຍສະເພາະໃນແນວຮົບການຜະລິດກະສິກຳ-ປ່າໄມ້ ເຊິ່ງເປັນແນວຮົບອັນດັບຫນຶ່ງຂອງເສດຖະກິດແຫ່ງຊາດເຮົາ ແລະ ໃນການຂະຫຍາຍເສດຖະກິດຄອບຄົວ. ໃນຊຸມປີຫຼັງມານີ້, ແມ່ຍິງເຮົາໄດ້ມີບົດບາດອັນສຳຄັນຕໍ່ ການປະຕິບັດກົນໄກ ຄຸ້ມຄອງເສດຖະກິດໃຫມ່ ນຳໃຊ້ຄວາມກ້າວຫນ້າທາງດ້ານວິທະຍາສາດ-ເຕັກນິກ ເຂົ້າສູ່ການຜະລິດ, ສິ່ງເຫລົ່ານັ້ນໄດ້ ນຳເອົາຜົນປະໂຫຍດຕົວຈິງມາສູ່ຕົນເອງ, ມາສູ່ຄອບຄົວ ແລະ ປະກອບສ່ວນເຮັດໃຫ້ລາຍຮັບຂອງລວມຫມູ່ ຜູ້ອອກແຮງງານເພີ່ມຂຶ້ນ, ທັງເປັນການສ້າງ

ຄວາມຮັ່ງມີໃຫ້ແກ່ ປະເທດຊາດອີກດ້ວຍ.

ແມ່ຍິງລາວເຮົາບໍ່ພຽງແຕ່ເຂົ້າຮ່ວມໃນການຜະລິດ, ໃນການເຮັດວຽກງານ ແລະ ຮັບພາລະວຽກບ້ານການເຮືອນເທົ່ານັ້ນ ແຕ່ກໍຍັງມີຄວາມມານະອົດທົນສຶກສາຮ່ຳຮຽນ ເພື່ອຍົກລະດັບທາງດ້ານການເມືອງ, ວັດທະນະທຳ, ວິທະຍາສາດ-ເຕັກນິກ ແລະ ວິຊາການຂອງຕົນອີກດ້ວຍ. ອັດຕາສ່ວນນັກຮຽນເພດຍິງຢູ່ໃນໂຮງຮຽນຕ່າງໆ ໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ສະເພາະແມ່ຍິງທີ່ມີລະດັບການສຶກສາຂັ້ນມະຫາວິທະຍາໄລໃນປະຈຸບັນກໍນັບເປັນຈຳນວນພັນໆ ຄົນ ເຊິ່ງເປັນອັນ ແຕກຕ່າງຢ່າງສິ້ນເຊີງກັບ ຄວາມເກົ່າຄວາມຫລັງທີ່ເຄີຍເວົ້າວ່າ "ແມ່ຍິງລາວວຽນຄືໄຟກໍບໍ່ຮອບ" ພ້ອມກັນນັ້ນຈຳນວນພະນັກງານເພດຍິງຢູ່ໃນອົງການນຳ ຂອງພັກ, ຂອງລັດ ແລະ ອົງການເສດຖະກິດນັບແຕ່ຂັ້ນຮາກຖານຂຶ້ນເຖິງຂັ້ນສູນກາງກໍ ນັບມື້ນັບຫຼາຍຂຶ້ນ. ...ທັງໝົດເຫລົ່ານັ້ນ ໄດ້ຍົກໃຫ້ເຫັນຄວາມພະຍາຍາມບີນຕົວຂຶ້ນ ຢ່າງບໍ່ຮູ້ອິດເມື່ອຍ ຂອງແມ່ຍິງເຮົາ ເພື່ອປະກອບສ່ວນເຂົ້າໃນໜ້າວຽກງານຂອງສັງຄົມ, ທັງເປັນການປະຕິບັດຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະການປົດປ່ອຍແມ່ຍິງເທື່ອລະກ້າວ .

ການນຳຂອງພັກ ແລະ ລັດເຮົາມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຮູ້ວ່າ ແມ່ຍິງແຂວງອັດຕະປື ໄດ້ອົດທົນໝັ່ນໜຽວໃຫ້ການສຶກສາອົບຮົມ,ຂົນຂວາຍພີ່ນ້ອງເຜົ່າແຍະ ໃຫ້ຕື່ນຕົວປະລະ ຮີດຄອງເກົ່າທີ່ຈຳໃຫ້ແມ່ຍິງ ຕ້ອງໄປເກີດລູກເກີດເຕົ້າຢູ່ໃນປ່າ ໃນດົງ, ແມ່ຍິງແຂວງຫຼວງນ້ຳທາ ໄດ້ ຕັ້ງໜ້າຕໍ່ສູ້ ຕ້ານຮີດຄອງຂອງບາງເຜົ່າທີ່ເຄີຍ ຂ້າເດັກເກີດໃໝ່ ທີ່ເປັນ ຝາແຝດ; ແມ່ຍິງເມືອງນາຊາຍທອງ ກຳແພງນະຄອນວຽງຈັນ ໄດ້ຕໍ່ສູ້ ຕ້ານກັບການເຊື່ອຖືແບບງົມງວາຍ ໃນເລື່ອງແຕ່ງດອງ " ເອົາຜົວຜີ " ແລະອື່ນໆ . ນອກຈາກນັ້ນແມ່ຍິງຢູ່ໃນຫຼາຍໆ ບ່ອນກໍໄດ້ປະກອບສ່ວນ ຢ່າງຕັ້ງໜ້າເຂົ້າໃນການກໍ່ສ້າງຄອບຄົວແບບໃໝ່, ໃນການເບິ່ງແຍງດູແລ ຜູ້ເປັນ

ແມ່ ແລະ ເດັກ.

ຜົນງານ ແລະ ຄວາມກ້າວໜ້າເຫຼົ່ານັ້ນແມ່ນ ຕິດພັນຢ່າງສະໜິດແໜ້ນກັບ ການເຄື່ອນໄຫວຂອງສະຫະພັນແມ່ຍິງລາວ. ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ I ມານີ້, ການຈັດຕັ້ງຂອງສະຫະພັນແມ່ຍິງຂັ້ນຕ່າງໆ ໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວຕື່ມກ້າວໜຶ່ງ, ການເຄື່ອນໄຫວໄດ້ຮັບການເປີດກວ້າງອອກ ແລະ ຄຸນນະພາບຂອງຂະບວນການແມ່ຍິງກໍ່ນັບມື້ນັບດີຂຶ້ນ.

ອັນນັ້ນກໍ່ແມ່ນ ໝາກຜົນແຫ່ງການນຳພາ ອັນຖືກຕ້ອງຂອງພັກເຮົາ ແມ່ນການຊ່ວຍເຫຼືອຂອງອຳນາດການປົກຄອງ ແລະ ອົງການຈັດຕັ້ງ ມະຫາຊົນອື່ນໆ. ຜົນງານດັ່ງກ່າວກໍ່ບໍ່ສາມາດຕັດແຍກອອກຈາກການຊ່ວຍເຫຼືອ ແລະ ການສະໜັບສະໜູນ ອັນປະເສີດຂອງຂະບວນການແມ່ຍິງສາກົນ .

ສູນກາງພັກ ແລະ ລັດຖະບານຕີລາຄາວ່າ ຜົນງານຂອງຂະບວນການແມ່ຍິງເຫຼົ່ານັ້ນ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນໄຊຊະນະລວມຂອງປະຊາຊົນເຮົາໃນໄລຍະໃໝ່ຂອງການປະຕິວັດ, ແມ່ຍິງລາວເຮົາສົມກຽດທີ່ເປັນແມ່ຍິງພິລະອາດຫານ, ແມ່ຍິງທີ່ດຸໝັ່ນ ພາກພຽນ, ຊື່ສັດບໍລິສຸດສະຫງ່ຽມຄຽມຄົມ, ເຮັດວຽກບ້ານກໍ່ເຮືອງ, ເຮັດວຽກເມືອງກໍ່ເດັ່ນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍສົມລະເສີນຜົນງານອັນໃຫຍ່ຫຼວງຂອງແມ່ຍິງເຮົາໃນທົ່ວປະເທດ ແລະຄວາມພະຍາຍາມກໍ່ຄື ຄວາມກ້າວໜ້າຂອງສະຫະພັນແມ່ຍິງລາວດັ່ງກ່າວນັ້ນ ຢ່າງສຸດອົກ ສຸດໃຈ .

ຂ້າພະເຈົ້າຂໍຕາງໜ້າພັກ ແລະ ລັດຖະບານລາວ ສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ຕໍ່ແມ່ຍິງ ແລະ ປະຊາຊົນຂອງບັນດາປະເທດ ອ້າຍນ້ອງ, ປະເທດເພື່ອນມິດທີ່ຢູ່ໃກ້ ແລະ ຢູ່ໄກກໍ່ຄື ສະຫະພັນແມ່ຍິງປະຊາທິປະໄຕສາກົນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ການຊ່ວຍເຫຼືອອັນ ປະເສີດໃນຫຼາຍດ້ານ ແກ່ແມ່ຍິງລາວ ແລະ ປະຊາຊົນລາວຕະຫຼອດມາ.

ບັນດາຜູ້ແທນທີ່ຮັກແພງ, ຂ້າພະເຈົ້າຫວັງວ່າ ດ້ວຍນ້ຳໃຈກົງໄປກົງມາ, ຊື່ສັດ, ກ້າເບິ່ງຄວາມຈິງ ແລະ ເວົ້າຖືກຕາມຄວາມເປັນຈິງນັ້ນ ບັນດາຜູ້ແທນຈະຕີລາຄາຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສາຍເຫດຂອງມັນ ຈາກນັ້ນ ພ້ອມກັນຖອດຖອນເອົາບົດຮຽນ ແລະ ວາງແຜນນະໂຍບາຍ, ວິທີການຕ່າງໆ ອອກເພື່ອເຮັດໃຫ້ຂະບວນການແມ່ຍິງ ນັບມື້ນັບເຕີບໃຫຍ່ຂຶ້ນ , ປະກອບສ່ວນຢ່າງຕັ້ງໜ້າກວ່າເກົ່າ ເຂົ້າໃນຂະບວນວິວັດແຫ່ງການ ປ່ຽນແປງໃໝ່ຢ່າງຮອບດ້ານຂອງປະຊາຊົນເຮົາ ທີ່ພວມດຳເນີນໃນຂະນະນີ້ .

ຂ້າພະເຈົ້າຂໍເນັ້ນໜັກບາງບັນຫາທີ່ຈຳເປັນ ສຳລັບຂະບວນການ ແມ່ຍິງຂອງປະເທດເຮົາ ໃນປະຈຸບັນ .

ລາຍງານການເມືອງຂອງສູນກາງພັກຕໍ່ກອງປະຊຸມໃຫຍ່ຄັ້ງທີ່ III ໄດ້ບົ່ງແຈ້ງວ່າ: " ໄປພ້ອມກັບ ການຫັນປ່ຽນປະຕິວັດຈາກສັງຄົມເມືອງຂຶ້ນ ແລະ ສັກດີນາໄປສູ່ການກ້າວລະບອບສັງຄົມໃໝ່, ແມ່ຍິງຂອງ ປະເທດເຮົາກໍ່ໄດ້ຮັບການປົດປ່ອຍອອກຈາກແອກແຫ່ງການກົດຂີ່ ຂູດຮີດ. ແຕ່ວ່າຍ້ອນຮ່ອງຮອຍເສດເຫຼືອຕ່າງໆ ຂອງສັງຄົມເກົ່າ, ຍ້ອນຮີດຄອງປະເພນີອັນລ້າຫຼັງ ຍັງໜັກໜ່ວງຢູ່ໃນຊີວິດຂອງສັງຄົມເຮົາ, ສະນັ້ນ ການປົດປ່ອຍແມ່ຍິງຢ່າງເຖິງຖອງ, ປະຕິບັດຄວາມສະເໝີພາບລະຫວ່າງຍິງ - ຊາຍຈຶ່ງເປັນບັນຫາທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ, ໃນນັ້ນສະຫະພັນແມ່ຍິງດຳລົງບົດບາດອັນສຳຄັນ ".

ຈາກທັດສະນະ ແລະ ຄວາມຮຽກຮ້ອງຕ້ອງການຂອງພັກ ຕໍ່ການຂົນຂວາຍແມ່ຍິງດັ່ງກ່າວນັ້ນ ພວກເຮົາຈຶ່ງບໍ່ອາດຈະເພິ່ງພໍໃຈຕໍ່ຜົນງານຂອງຂະບວນການແມ່ຍິງໃນຊຸມປີ ທີ່ຜ່ານມາ ແລະ ຍິ່ງບໍ່ອາດຈະເມີນເສີຍຕໍ່ ຄວາມເປັນຈິງທີ່ວ່າ ຢູ່ໃນຫຼາຍໆ ບ່ອນແມ່ຍິງເຮົາຍັງຕ້ອງຫາບແບກພາລະອັນໜັກໜາເກີນໄປ ໃນການດຳລົງຊີວິດ ແລະ ຍອມຮັບເອົາຄວາມບໍ່ຍຸດຕິທຳເຊິ່ງບໍ່ພຽງແຕ່ຢູ່ໃນສັງຄົມເທົ່ານັ້ນ, ກະທັ່ງເຖິງຢູ່ໃນຄອບຄົວອີກດ້ວຍ, ສະ

ເພາະຢ່າງຍິ່ງແມ່ນໃນໝູ່ແມ່ຍິງບັນດາເຜົ່າສ່ວນໜ້ອຍ. ແມ່ຍິງໃນຫຼາຍທ້ອງຖິ່ນຍັງບໍ່ໄດ້ຮ່ຳຮຽນສຶກສາຢ່າງພຽງພໍເທື່ອ, ຍັງອອກແຮງງານ ໃນເງື່ອນໄຂອັນລຳບາກ. ເມື່ອຖືພາຄາທ້ອງກໍບໍ່ໄດ້ຮັບການເອົາໃຈໃສ່ ດູແລເທົ່າທີ່ຄວນ, ຍັງຖືກດູໝິ່ນໃນສັງຄົມ ແລະ ຖືກຂົ່ມເຫັງໃນຄອບຄົວ ແລະອື່ນໆ. ທີ່ຜ່ານມາ, ພວກເຮົາໄດ້ຈັດຕັ້ງໂຮງຝາກເດັກ ແລະ ໂຮງຮຽນອານຸບານຂຶ້ນຢູ່ຫຼາຍແຫ່ງ, ແຕ່ທຽບໃສ່ຈຳນວນເດັກໃນໄວອາຍຸ ທີ່ ຈະຕ້ອງເອົາເຂົ້າໂຮງຝາກເດັກ ແລະ ອານຸບານແລ້ວແມ່ນ ຍັງໜ້ອຍເກີນໄປ, ສະພາບເກີດລູກຫຼາຍຄົນ ເກີນໄປ ແລະ ເກີດຖີ່ ກັນໂພດ ນັ້ນໄດ້ສົ່ງຜົນສະທ້ອນຫຼາຍພໍສົມຄວນເຖິງສຸຂະພາບຂອງຜູ້ເປັນແມ່ ແລະ ການລ້ຽງດູ ສິດສອນ ລູກເຕົ້າ .

ເບິ່ງທົ່ວໄປແລ້ວ ຂະບວນການແມ່ຍິງຍັງບໍ່ທັນກວ້າງຂວາງແລະເລິກເຊິ່ງ, ບໍ່ທັນຕິດແທ້ນກັບຮາກຖານ ແລະ ບໍ່ທັນສະໝ່ຳສະເໝີກັນ ລະຫວ່າງທ້ອງຖິ່ນ ແລະ ຂະແໜງການຕ່າງໆ, ຈຳນວນແມ່ຍິງທີ່ຢູ່ນອກການຈັດຕັ້ງຂອງສະຫະພັນ ຍັງກວມອັດຕາສ່ວນຫຼາຍພໍສົມຄວນ, ການຈັດຕັ້ງຂອງສະຫະພັນແມ່ຍິງຂັ້ນຕ່າງໆ ໂດຍສະເພາະຢູ່ຂັ້ນຮາກຖານຍັງອ່ອນແລະບໍ່ເຄື່ອນໄຫວພໍທີ່ໃດ, ຄວາມສາມັກຄີພາຍໃນຄະນະຮັບຜິດຊອບສະຫະ ພັນແມ່ຍິງໃນຫຼາຍບ່ອນກໍບໍ່ທັນແໜ້ນແຟ້ນ. ເນື້ອໃນ ແລະ ແບບວິທີເຄື່ອນໄຫວ ຍັງເກົ່າແກ່, ໜັກໄປໃນຮູບການບໍລິຫານ ແລະ ຈັດຕັ້ງປຸກລະດົມຄື ໃນປາງຕໍ່ຕ້ານ, ບໍ່ສົມທົບຢ່າງແໜ້ນແຟ້ນລະຫວ່າງການປຸກລະດົມ ໃຫ້ເຮັດພັນທະກັບ ການເບິ່ງແຍງດູແລ ທາງດ້ານຜົນປະໂຫຍດ.

ຄະນະພັກ ແລະ ອຳນາດການປົກຄອງຂັ້ນຕ່າງໆ ຍັງບໍ່ທັນ ເອົາໃຈໃສ່ເຖິງວຽກງານຂົນຂວາຍແມ່ຍິງຢ່າງເໝາະສົມ, ສ່ວນຫຼາຍຍັງຖືວ່ານັ້ນເປັນວຽກງານສະເພາະຂອງສະຫະພັນແມ່ຍິງເທົ່ານັ້ນ. ການປະສານສົມທົບ ແລະ ການຊ່ວຍເຫຼືອ ເຊິ່ງກັນ ແລະ ກັນລະຫວ່າງອົງການຈັດຕັ້ງມະຫາ

ຊົນອື່ນໆ ກັບ ສະຫະພັນແມ່ຍິງກ້ຽງບັ້ນທີ່ເທົ່າທຽມ.

ເພື່ອຊຸກຍູ້ຂະບວນການແມ່ຍິງຂອງປະເທດເຮົາໃຫ້ກ້າວຂຶ້ນທຽມທັນ ກັບ ຂະບວນການລວມຂອງທົ່ວປະເທດ ແລະ ເສີມຂະຫຍາຍບົດບາດຂອງແມ່ຍິງນັບມື້ນັບສູງຂຶ້ນນັ້ນ ຂ້າພະເຈົ້າເຫັນວ່າ :

ໜຶ່ງ : ແມ່ຍິງລາວເຮົາຕ້ອງປະກອບສ່ວນຢ່າງຕັ້ງໜ້າກວ່າ ເກົ່າ ເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ໃນການຕໍ່ສູ້ ເພື່ອສັນຕິພາບ ແລະ ຄວາມປອດໄພສາກົນ, ສະເພາະຢ່າງຍິ່ງແມ່ນຕ້ອງອອກແຮງເຕົ້າໂຮມສາມັກຄີ ແລະ ປະສານສົມທົບ ກັບ ແມ່ຍິງບັນດາປະເທດໃນພາກພື້ນ, ສູ້ຊົນ ເພື່ອບັນລຸເຖິງການສ້າງອາຊີ ອາຄະເນໃຫ້ເປັນພາກພື້ນແຫ່ງສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື, ເປັນເຂດປອດອາວຸດນິວເຄຼຍ, ບໍ່ປ່ອຍປະໃຫ້ອິດທິກຳລັງປະຕິການໃດໆ, ດຶງດູດເອົາລູກຜົວ ຂອງຕົນ ໄປເຂົ້າຮ່ວມໃນການເຄື່ອນໄຫວທີ່ເປັນການຕ້ານກັ້ງກັນ ເຊິ່ງມັນເປັນການຝືນກັບ ຜົນປະໂຫຍດອັນແທ້ຈິງ ສຳລັບແມ່ຍິງກໍຄື ຜົນປະໂຫຍດຂອງປະຊາຊົນປະເທດຕ່າງ ໆ.

ສະຫະພັນແມ່ຍິງຈິ່ງເພີ່ມທະວີການສຶກສາອົບຮົມແມ່ຍິງເຜົ່າຕ່າງໆ ໃຫ້ມີນ້ຳໃຈຮັກຊາດອັນໜັກແໜ້ນ, ເດັດດ່ຽວຕໍ່ສູ້ ຕ້ານກົນອຸບາຍ ມ້າງເພທຳລາຍໃນຫຼາຍດ້ານ ແລະ ການຫັນປ່ຽນ ໂດຍສັນຕິຂອງບັນດາອິດທິກຳລັງປໍລະປັກ, ຈຶ່ງເອົາໃຈໃສ່ໜູນໃຊ້ບົດຮຽນອັນອຸດົມຮັ່ງມີຂອງ ພີ່ປ້ານ້າອາ ທີ່ເປັນວິລະຊົນເຊັ່ນ ບົດຮຽນຂອງປ້າ ຍິ້ງກາຍ, ແມ່ພອງ ແລະ ຜູ້ອື່ນໆ ໃນການຂົນຂວາຍຊາຍລາວຜູ້ຫຼົງຜິດໃຫ້ປະລະການມີຊີວິດທີ່ເປັນລູກແຫຼ້ງຕີນມືໃຫ້ອິດທິກຳລັງປະຕິການ ເພື່ອກັບຄືນມາເຂົ້າຮ່ວມໃນການສ້າງສາບ້ານເມືອງ ແລະ ຊີວິດໃໝ່ກັບ ຄອບຄົວຂອງຕົນ ແລະ ກັບພີ່ນ້ອງຮ່ວມຊາດ.

ສອງ : ຕ້ອງປ່ຽນແປງໃໝ່ກ່ຽວກັບຈິນຕະນາການ ໃນວຽກງານ

ຂົນຂວາຍແມ່ຍິງ, ປ່ຽນແປງໃໝ່ ກ່ຽວກັບເນື້ອໃນ ແລະ ແບບວິທີເຄື່ອນໄຫວຂອງສະຫະພັນແມ່ຍິງ. ອັນນີ້ເປັນຄວາມເລັ່ງຫວງອັນຮີບດ່ວນ ສຳລັບຊຸກຍູ້ຂະບວນການແມ່ຍິງໄປສູ່ ຄຸນນະພາບໃໝ່ .

ກ່ອນອື່ນ ຕ້ອງເຂົ້າໃຈໃຫ້ຈະແຈ້ງວ່າ ວຽກງານຂົນຂວາຍແມ່ຍິງເປັນໜ້າທີ່ປະຕິວັດອັນຍາວນານອັນໜຶ່ງ, ມັນບໍ່ພຽງແຕ່ກ່ຽວພັນເຖິງເພດຍິງ ທີ່ກວມກວ່າເຄິ່ງໜຶ່ງຂອງປະຊາກອນເທົ່ານັ້ນ, ແຕ່ຍັງກ່ຽວພັນເຖິງໝົດທັງສັງຄົມເວົ້າລວມ ແລະ ແຕ່ລະຄອບຄົວເວົ້າສະເພາະ, ທັງຕິດພັນຢ່າງ ສະໜິດແໜ້ນເຖິງ ການປົກປັກຮັກສາ ແລະ ການຂະຫຍາຍເຊື້ອພັນ ຂອງຊາດອີກດ້ວຍ. ດັ່ງນັ້ນ, ວຽກງານຂົນຂວາຍແມ່ຍິງ ຈຶ່ງຕ້ອງກວມໝົດ ທຸກຂົງເຂດເຊັ່ນ ການເມືອງ, ເສດຖະກິດ, ສັງຄົມ ວັດທະນະທຳ ແລະ ເຜົ່າຊົນ. ໝາຍຄວາມວ່າ, ວຽກງານຂົນຂວາຍແມ່ຍິງມັນເປັນຄວາມ ຮັບຜິດຊອບຂອງທົ່ວພັກ ແລະ ທົ່ວປວງຊົນ, ແຕ່ຫາກບໍ່ແມ່ນຂອງສະຫະພັນແມ່ຍິງຜູ້ດຽວ, ຈິ່ງຢູ່ວ່າ ສະຫະພັນແມ່ຍິງເປັນອົງການຈັດຕັ້ງທີ່ພັກມອບໝາຍໃຫ້ເປັນທັງເສນາທິການ, ເປັນທັງອົງການຮັບຜິດຊອບການປຸກລະດົມ ແລະ ຈັດຕັ້ງຂະບວນການແມ່ຍິງ, ຕິດຕາມ ແລະ ກວດກາການປະຕິບັດທຸກແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະ ລັດກ່ຽວກັບແມ່ຍິງ.

ເພື່ອເຮັດຫຼອນຄວາມຮັບຜິດຊອບອັນມີກຽດຂອງຕົນດັ່ງກ່າວນັ້ນ, ສຳຄັນທີ່ສຸດແມ່ນສະຫະພັນແມ່ຍິງ ຕ້ອງກຳແໜ້ນແນວທາງ, ນະໂຍບາຍ ແລະ ໜ້າທີ່ການເມືອງທີ່ພັກ ແລະ ລັດວາງອອກໃນແຕ່ລະໄລຍະ, ຕ້ອງຕິດແໜ້ນກັບ ຮາກຖານ, ເຂົ້າສູ່ແມ່ຍິງຊຸນຄົນຕ່າງໆ, ເຜົ່າຕ່າງໆ ທີ່ຢູ່ໃນຂະແໜງການຂອງລັດ ແລະ ໃນທຸກພາກສ່ວນເສດຖະກິດ, ຜ່ານຂະບວນການເພື່ອສາງ ແລະ ປັບປຸງການຈັດຕັ້ງຂອງຕົນ ໃຫ້ໜັກແໜ້ນເຂັ້ມແຂງ ຢ່າງແທ້ຈິງ. ນັບແຕ່ນີ້ໄປ, ໃນໂຄງການເຄື່ອນໄຫວຂອງຕົນ, ສະຫະພັນແມ່ຍິງຕ້ອງເລັ່ງໃສ່ຕອນເອົາຂະບວນການແມ່ຍິງເຂົ້າຮັບໃຊ້ບັນດາໂຄງການ ໝື່

ຈຸດໝາຍເຊິ່ງກອງປະຊຸມໃຫຍ່ຄັ້ງທີ III ຂອງພັກວາງອອກ ແລະ ບັນດາມະຕິຂອງສູນກາງພັກ ຕາມຈິນຕະນາການໃໝ່ ແລະ ກົນໄກຄຸ້ມຄອງເສດຖະກິດໃໝ່ທີ່ເປັນກົນໄກໄລ່ລຽງທຸລະກິດ, ປະກອບສ່ວນຢ່າງ ຕັ້ງໜ້າເຂົ້າໃນການຫັນປ່ຽນເສດຖະກິດທຳມະຊາດໄປສູ່ ເສດຖະກິດສິນຄ້າຕາມທິດສັງຄົມນິຍົມ. ສິ່ງທີ່ຄວນເອົາໃຈໃສ່ໃນວຽກງານຂົນຂວາຍແມ່ຍິງແມ່ນ ຕ້ອງເອົາຄວາມຮັບຜິດຊອບ, ພັນທະ, ສິດ ແລະ ຜົນປະໂຫຍດຕິດພັນກັນ .

ແຕ່ໃດໆມາ, ແມ່ຍິງເປັນເພດທີ່ມີ ຄຸນງາມຄວາມດີອັນພິເສດ ໃນການເກີດ ແລະ ລ້ຽງດູ ສິດສອນລູກເຕົ້າ. ອັນນີ້ກໍເປັນຄຸນນະທຳ ແລະ ນ້ຳໃຈໂອບເອື້ອ ອາລີຂອງແມ່ຍິງລາວເຮົາ. ດັ່ງນັ້ນ ແມ່ຍິງລາວເຮົາ ຈຶ່ງເອົາໃຈໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຂອງຕົນທີ່ເປັນແມ່ ຜູ້ທີ່ດີ, ເປັນເມຍທີ່ຮອບຮູ້ ແລະ ຊື່ສັດສຸດຈະລິດ, ພ້ອມກັນນັ້ນ ກໍ່ຮູ້ຮັບເອົາຄວາມສີວິໄລຂອງແມ່ຍິງໃນໂລກ ຢ່າງມີການເລືອກເຟັ້ນ. ສະຫະພັນແມ່ຍິງ ຈຶ່ງອອກແຮງປະກອບສ່ວນຢ່າງຕັ້ງໜ້າກັບພັກ, ລັດ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອສ້າງເຍົາວະຊົນ, ອານຸຊົນ ແລະ ໄວໜຸ່ມລູກລາວໃຫ້ເປັນຄົນທີ່ຂະຫຍາຍຕົວຢ່າງກົມກຽວ, ມີສຸຂະພາບເຂັ້ມແຂງ ມີຄວາມຮູ້ດ້ານຕ່າງໆ, ມີນ້ຳໃຈຮັກຊາດອັນດູດດື່ມ ມີຄວາມສາມັກຄີ ປອງດອງກັນ ລະຫວ່າງເຜົ່າຊົນໃນຊາດ, ມີຄວາມອົງອາດກ້າຫານ ໃນການປົກປັກຮັກສາຄວາມເປັນເອກະລາດ ແລະ ອະທິປະໄຕຂອງຊາດກໍຄື ໝາກຜົນຂອງການປະຕິວັດ, ມີຄວາມຂະຫຍັນ ຫ້າວຫັນ ແລະ ມີ ຫົວຄິດປະດິດສ້າງໃນການສ້າງສາປະເທດຊາດ, ມີຄວາມຖືກຕ້ອງຄອງກັນ ໃນຊີວິດຄອບຄົວ, ມີຄວາມຊື່ສັດບໍລິສຸດ ແລະ ມີໄມຕີຈິດຕໍ່ ສະຫາຍອ້າຍນ້ອງ ແລະ ເພື່ອນມິດໃນໂລກ .

ສະຫະພັນແມ່ຍິງຕ້ອງຕັ້ງໜ້າປະສານສົມທົບ ແລະ ເຂົ້າຮ່ວມກັບ ບັນ

ດຳເນີນການທີ່ກ່ຽວຂ້ອງຂອງພັກ ແລະ ລັດໃນການສ້າງ ແລະ ປະຕິບັດ ກົດຫມາຍ, ນະໂຍບາຍ ແລະ ລະບອບການຕ່າງໆ ທີ່ມີສ່ວນກ່ຽວພັນເຖິງ ສິດ ແລະ ຜົນປະໂຫຍດຂອງແມ່ຍິງກໍ່ຄື ການປົກປັກຮັກສາແມ່ ແລະ ເດັກ, ການແກ້ໄຂວຽກເຮັດ ງານທຳໃຫ້ຜູ້ອອກແຮງງານເພດຍິງ, ການສ້າງກໍ່ຄື ການບຳລຸງຍົກລະດັບ, ການນຳໃຊ້ ແລະ ເລື່ອນຊັ້ນພະນັກງານເພດຍິງ.

ສາມ : ບັນຫາທີ່ມີລັກສະນະຕັດສິນແມ່ນ ຕ້ອງມີຖັນແຖວພະນັກງານທີ່ເຮັດວຽກງານແມ່ຍິງ ເປັນສະເພາະ ເຊິ່ງມີຈິນຕະນາການໃຫມ່, ມີຄຸນສົມບັດ ແລະ ຄວາມສາມາດທີ່ສົມຄູ່ ກັບ ໄລຍະໃຫມ່. ໃນປະຈຸບັນ, ພຸເປັນພະນັກງານແມ່ຍິງຕ້ອງມີນ້ຳໃຈຝຶກຝົນປະຕິວັດ, ເຊື່ອມຊຶມ ແນວທາງແຫ່ງການປ່ຽນແປງໃຫມ່ຢ່າງຮອບດ້ານຂອງພັກ ແລະ ລັດ, ພ້ອມກັນນັ້ນ ກໍຕ້ອງມີລະດັບຄວາມຮູ້ ອັນແນ່ນອນ, ມີຄວາມສະດຸ້ງໄວຕໍ່ອັນໃຫມ່, ສະເພາະຢ່າງຍິ່ງແມ່ນຕ້ອງມີຄວາມຮູ້ ກ່ຽວກັບຈິດຕະວິທະຍາຂອງແມ່ຍິງ ເວົ້າທົ່ວໄປ ແລະ ຈິດຕະວິທະຍາ ຂອງແມ່ຍິງໃນແຕ່ລະຂົງເຂດວຽກງານ, ໃນແຕ່ລະເຜົ່າ ແລະ ໃນແຕ່ລະໄວອາຍຸ ທີ່ຕ່າງກັນ.

ກົງຈັກການຈັດຕັ້ງຂອງສະຫະພັນແມ່ຍິງຂັ້ນຕ່າງໆ ຕ້ອງໄດ້ຮັບການປັບປຸງ ບູລະນະຕາມທິດ ກະທັດລັດເບົາບາງ, ແຕ່ເຂັ້ມແຂງ ແລະ ມີປະສິດທິພາບ. ອັນສຳຄັນທີ່ສຸດແມ່ນ ຄວນພະຍາຍາມປະກອບພະນັກງານຫນຸ່ມ ທີ່ຖືກມາດຖານເຂົ້າໃນກົງຈັກນຳພາ ແລະ ການຈັດຕັ້ງຂອງສະຫະພັນແມ່ຍິງຂັ້ນຕ່າງໆ ໃຫ້ນັບມື້ນັບຫຼາຍຂຶ້ນ; ສະຫະພັນແມ່ຍິງຕ້ອງມີແບບແຜນ ເຮັດວຽກແບບໃຫມ່ ເຊິ່ງຈຸດພິເສດພື້ນຖານຂອງມັນແມ່ນ ການສົມທົບຢ່າງແຫນ້ນແຟ້ນລະຫວ່າງທິດສະດີ ກັບ ພຶດຕິກຳ, ລະຫວ່າງຄວາມເວົ້າ ແລະ ການກະທຳ, ຍາມໃດກໍ່ຕິດແຫນ້ນກັບ ຮາກຖານ ແລະ ຂະບວນການ, ນຳເອົາຜົນປະໂຫຍດຕົວຈິງມາສູ່ແມ່ຍິງ ແລະ ມາໃຫ້ປະເທດຊາດ .

ຢາກເຮັດໄດ້ແນວນັ້ນ, ຖັນແຖວແມ່ຍິງເອງ ຕ້ອງເຊີດຊູ ຄວາມ

ເຊື່ອໝັ້ນຕໍ່ບົດບາດ ແລະ ຄວາມອາດສາມາດອັນໃຫຍ່ຫລວງຂອງຕົນ, ອອກແຮງຮ່ຳຮຽນຍົກລະດັບໃນທຸກດ້ານໃຫ້ສູງຂຶ້ນເລື້ອຍໆ , ແກ້ໄຂແນວຄິດຕິດຕົວຕ່ຳ, ບໍ່ເປັນເຈົ້າການ, ແນວຄິດເອື່ອຍອີງ ແລະ ແນວຄິດໃຈນ້ອຍ, ໃຈສັ້ນ. ຄະນະພັກ ອຳນາດການປົກຄອງຂັ້ນຕ່າງໆ ກໍ່ຕ້ອງເພີ່ມທະວີ ຄວາມຮັບຜິດຊອບຂອງຕົນຕໍ່ວຽກງານຂົນຂວາຍແມ່ຍິງ, ສ້າງເງື່ອນໄຂອຳນວຍໃຫ້ແມ່ຍິງໄດ້ເຂົ້າຮ່ວມ ນັບມື້ນັບຫລາຍຂຶ້ນ ໃນວຽກງານສັງຄົມ ແລະ ເປັນເຈົ້າຂອງປະເທດຊາດ. ສະເພາະຢ່າງຍິ່ງແມ່ນຕ້ອງມີແຜນກຳນົດ, ແຜນການ ແລະ ນະໂຍບາຍມີລະອຽດ ກ່ຽວກັບ ການສ້າງພະນັກງານເພດຍິງ, ກ່ຽວກັບການປົດປ່ອຍແມ່ຍິງໃຫ້ຫລຸດພົ້ນອອກຈາກຮີດຄອງປະເພນີອັນຫລ້າຫລັງ.

ສະຫາຍ ແລະ ເພື່ອນມິດທັງຫລາຍ ,

ແມ່ຍິງລາວເຮົາກໍ່ຄື ແມ່ຍິງໃນທົ່ວໂລກ ຕ່າງກໍ່ມີຄວາມ ປາດຖະໜາຢ່າງແຮງກ້າໃນສັນຕິພາບ. ແມ່ຍິງຂອງປະເທດເຮົາໄດ້ ເຮັດສຸດ ຄວາມສາມາດຂອງຕົນເພື່ອປະຕິບັດນະໂຍບາຍການຕ່າງປະເທດຂອງພັກ ແລະ ລັດ, ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ, ຄວາມປອດໄພສາກົນ ແລະ ເພີ່ມທະວີມິດຕະພາບລະຫວ່າງປະຊາຊາດ.

ປະຈຸບັນ ທ່າອ່ຽງແຫ່ງການຕໍ່ສູ້ ເພື່ອຄວາມຢູ່ລອດ ແລະ ຄວາມສີວິໄລຂອງມວນມະນຸດ, ຕາມການຊ່ວງເສັງປະກອບອາວຸດ, ສະເພາະຢ່າງຍິ່ງແມ່ນ ອາວຸດນິວຄະເລັຽນ ພວມຂະຫຍາຍຕົວຢ່າງກວ້າງຂວາງ ເຊິ່ງແມ່ຍິງໄດ້ມີການເຄື່ອນໄຫວດ້ວຍຫລາຍຮູບຫລາຍສີ, ປະກອບສ່ວນເຂົ້າ ໃນການຕໍ່ສູ້ດັ່ງກ່າວ.

ພັກ, ລັດ ແລະ ປະຊາຊົນເຮົາ ຊົມເຊີຍຢ່າງສຸດອົກສຸດໃຈຕໍ່ ຂໍ້ ສະເໜີສັນຕິພາບຄັ້ງໃໝ່ ຂອງສະຫະພາບໂຊວຽດ ທີ່ສະຫາຍ ມີຄາອິນ ແຊກເກເອິດ ກອກບາຊົບ ໄດ້ຖະແຫຼງອອກໃນວັນທີ 16 ກັນຍາແລ້ວ ຢູ່ ກະ

ລາດຊະນາຍຍາ, ອັນນັ້ນເປັນການສະແດງອອກຢ່າງມີຊີວິດຊີວາ ຂອງນະໂຍບາຍສັນຕິພາບ ເລິມມິດ ຂອງພັກ ແລະ ລັດຖະບານໂຊວຽດ, ເປັນການປະກອບສ່ວນຢ່າງສຳຄັນອີກຄັ້ງໃໝ່ ຂອງສະຫະພາບໂຊວຽດເຂົ້າ ໃນພາລະກິດສັນຕິພາບ, ຄວາມປອດໄພ ແລະ ການຮ່ວມມືລະຫວ່າງ ບັນດາລັດໃນພາກພື້ນອາຊີ - ປາຊີຟິກ .

ພວກເຮົາຍາມໃດກໍ່ມີ ຄວາມມຸ່ງຫວັງຢາກຮ່ວມກັນ ກັບ ປະເທດຕ່າງຕ່າງ ໃນອາຊີ ອາຄະເນ ເພື່ອເຮັດໃຫ້ພາກພື້ນນີ້ມີສັນຕິພາບ, ສະຖຽນລະພາບ ແລະ ຮ່ວມມືກັນ. ສປປລ ສະໜັບສະໜູນຢ່າງສົມບູນຕໍ່ ຫຼັກໝັ້ນຂອງສາທາລະນະລັດປະຊາຊົນກຳປູເຈຍ ກ່ຽວກັບວິທີການແກ້ໄຂບັນຫາກຳປູເຈຍ ໂດຍທາງການເມືອງ. ພວກເຮົາ ຈະເຮັດສຸດຄວາມສາມາດຂອງຕົນ ເພື່ອປະກອບສ່ວນເຂົ້າໃນຂະບວນວິວັດແຫ່ງການພົບປະ ຫາລືກັນທີ່ພວມດຳເນີນໃນຂະນະນີ້ ອັນແນໃສ່ບັນລຸເຖິງ ວິທີການແກ້ໄຂ ໂດຍທາງການເມືອງ ທີ່ຍຸດຕິທຳ ແລະ ຖືກຕ້ອງກ່ຽວກັບບັນຫາ ກຳປູເຈຍ.

ພວກເຮົາປາດຖະໜາໃຫ້ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ສາທາລະນະລັດປະຊາຊົນຈີນ ມີການພົວພັນອັນເປັນປົກກະຕິ ນຳກັນ ແລະ ຟື້ນຟູມິດຕະພາບທີ່ມີມາແຕ່ເຫິງນານແລ້ວ ລະຫວ່າງປະຊາຊົນປະເທດທັງສອງ ໂດຍໄວ, ອັນນັ້ນຈະເປັນການປະກອບສ່ວນຢ່າງສຳຄັນເຂົ້າ ໃນສັນຕິພາບ ແລະ ຄວາມປອດໄພ ໃນພາກພື້ນອາຊີ - ປາຊີຟິກ ແລະ ໃນການແກ້ໄຂບັນຫາ ກຳປູເຈຍ.

ສປປລ ຖືວ່າການປະຕິບັດຈິດໃຈຂອງຖະແຫຼງການຮ່ວມລາວ - ໄທສອງສະບັບປີ 1979 ຢ່າງຄົບຖ້ວນ ໃນການພົວພັນລະຫວ່າງປະເທດ ທັງສອງໃນປະຈຸບັນນີ້ ຈະເປັນການເພີ່ມທະວີ ຄວາມເຂົ້າອົກເຂົ້າໃຈກັນ ແລະຄວາມໄວ້ວາງໃຈກັນ, ພ້ອມກັນເສີມສ້າງ ແລະ ຂະຫຍາຍ ການພົວພັນຖານບ້ານໃກ້ ເຮືອນຄຽງ, ບ້ານພີ່ເມືອງນ້ອງ ລະຫວ່າງປະຊາຊົນ ສອງ

ຊາດລາວ ແລະ ໄທ. ອັນນັ້ນເປັນການສອດຄ່ອງ ກັບ ຜົນປະໂຫຍດ ອັນຊອບທຳ ຂອງປະຊາຊົນປະເທດທັງສອງ ກໍຄືຜົນປະໂຫຍດລວມຂອງ ພາກພື້ນນີ້ .

ສປປລ ຕີລາຄາສູງຕໍ່ບົດບາດອັນສຳຄັນຂອງ ຂະບວນການ ບໍ່ຮ່ວມກຸ່ມຕໍ່ ສັນຕິພາບ ແລະ ຄວາມປອດໄພສາກົນ, ຊົມເຊີຍຄວາມພະຍາຍາມ ຂອງຂະບວນການນີ້ ທີ່ປະກອບສ່ວນເຂົ້າໃນການແກ້ໄຂບັນຫາ ກຳປູເຈຍ ແລະ ບັນຫາສັນຕິພາບ, ສະຖຽນລະພາບຢູ່ ອາຊີ - ອາຄະເນ.

ສະຫາຍ ແລະ ເພື່ອນມິດທັງຫຼາຍ ,

ກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງຄັ້ງນີ້ ດຳເນີນໄປໃນ ສະພາບແວດລ້ອມ ທີ່ປະເທດຂອງພວກເຮົາພວມເລັ່ງລັດ ພາລະກິດແຫ່ງການ ປ່ຽນແປງໃໝ່ຢ່າງຮອບດ້ານ ເຊິ່ງກໍ່ໄດ້ຮັບໝາກຜົນອັນສຳຄັນ ໃນເບື້ອງຕົ້ນ . ສະພາບການພວມຂະຫຍາຍຕົວໄປຢ່າງອຳນວຍ. ໂລກກໍ່ພວມມີ ການຫັນປ່ຽນທີ່ເລິກເຊິ່ງ ອັນເປັນປະໂຫຍດແກ່ ບັນດາກຳລັງສັນຕິພາບ ແລະຄວາມກ້າວໜ້າທາງສັງຄົມ.

ຄະນະບໍລິຫານງານສູນກາງພັກ ເຊື່ອໝັ້ນວ່າ ແມ່ຍິງລາວເຜົ່າຕ່າງໆ ຈະເສີມຂະຫຍາຍມູນເຊື້ອອັນຈົບງາມ ແລະ ບົດບາດອັນໃຫຍ່ຫຼວງຂອງ ຕົນໃນໄລຍະໃໝ່ຂອງການປະຕິວັດ, ປະກອບສ່ວນຢ່າງຕັ້ງໜ້າ ກວ່າເກົ່າເຂົ້າໃນການບຳລຸງສ້າງຮຸ່ນຄົນ ສືບທອດໃຫ້ເປັນຄົນໃໝ່ ສັງຄົມນິຍົມ, ໃນການເຮັດໃຫ້ປະເທດເຮົາມີຄວາມຈະເລີນ ກ້າວໜ້າ ແລະ ປະຊາຊົນເຮົາມີຄວາມຢູ່ດີ ກິນດີຂຶ້ນ ໄປເລື້ອຍ ໆ.

ຂໍອວຍພອນໃຫ້ແມ່ຍິງລາວເຜົ່າຕ່າງໆ ຈົ່ງໄດ້ຮັບຜົນສຳເລັດ ໃໝ່ ແລະ ສະຫງ່າລາສີ ກວ່າເກົ່າ ໃນຂະບວນການແຂ່ງຂັນ " ສາມດີ ສອງໜ້າທີ່ " ຂອງຕົນ.

ອວຍພອນໃຫ້ແມ່ຍິງ ໃນທົ່ວທະວີບ ຈົ່ງສາມັກຄີກັນ ແໜ້ນແຟ້ນ ໃນ

ການຕໍ່ສູ້ ເພື່ອສັນຕິພາບ ແລະ ຄວາມປອດໄພສາກົນ, ເພື່ອ ອະນາຄົດ ແລະ ຄວາມຜາສຸກຂອງຜູ້ເປັນແມ່ ແລະ ເດັກ, ເພື່ອພາລະກິດປົດ ປ່ອຽ ຂອງແມ່ຍິງໃນທົ່ວໂລກ .

ອວຍພອນໃຫ້ ກອງປະຊຸມໃຫຍ່ສຳເລັດຜົນຢ່າງສະຫງ່າງາມ .





* ຜູ້ນຳພັກລັດໄດ້ຖ່າຍຮູບລວມກັບເອື້ອຍນ້ອງຜູ້ແທນສົມບູນທີ່ມາຈາກທຸກເຂດ
ແຂວງໃນທົ່ວປະເທດ.



24 / VII

* ຜູ້ນຳພັກລັດໂອ້ລົມກັບເອື້ອຍນ້ອງຕົວແທນຂອງກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ.

ຫ້າມຈຳໜ່າຍ



ກອງປະຊຸມໃຫຍ່ແຕ່ລະຄັ້ງ ໄດ້ເຮັດໃຫ້ຜູ້ແທນແມຍິງໃນທຸກເຂດແຂວງ, ສຳນັກງານອົງການ ແລະ ທ້ອງຖິ່ນຕ່າງໆ ໄດ້ມີໂອກາດພົບປະສັງສັນ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນ.



* ທ່ານນາງ ອ່ອນຈັນ ທຳມະວົງ ກຳມະການສູນກາງພັກ ສະເໜີບົດລາຍງານ
ການເມືອງຕໍ່ກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດ ຄັ້ງທີ II .

# ບົດລາຍງານການເມືອງ
## ຂອງຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ຕໍ່ກອງປະຊຸມໃຫຍ່ຄັ້ງທີ II ຂອງແມ່ຍິງລາວ ທົ່ວປະເທດ

-----++++++-----

ຮຽນ ສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ເຄົາລົບຮັກ !

ຮຽນ ບັນດາສະຫາຍຜູ້ນໍາພັກ-ລັດ ທີ່ເຄົາລົບ !

ຮຽນ ບັນດາທ່ານຜູ້ແທນຕ່າງປະເທດ ທີ່ນັບຖື !

ຮຽນ ບັນດາແຂກຜູ້ມີກຽດ ແລະ ເອື້ອຍນ້ອງຜູ້ແທນ ກອງປະຊຸມໃຫຍ່ ທີ່ຮັກແພງ !

ມື້ນີ້ ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງ ລາວທົ່ວປະເທດໄດ້ໄຂຂຶ້ນໃນທ່າມກາງບັນຍາກາດທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນເຮົາພວມອອກແຮງແຂ່ງຂັນ ຈັດຕັ້ງປະຕິບັດມະຕິ 5 ມະຕິ 6 (ສະໄໝທີ III) ຂອງສູນກາງພັກ ແລະ ແຜນການ 5 ປີແຫ່ງລັດຄັ້ງທີ II ພວມສຸມໃສ່ການຜະລິດນາປີ ເປັນຂະບວນຟົດຟື້ນໃນທົ່ວປະເທດ.

ກອງປະຊຸມໃຫຍ່ພວກເຮົາຖືເປັນກຽດອັນສູງສົ່ງທີ່ໄດ້ຂໍານັບຮັບຕ້ອນສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ ສູນກາງພັກປະຊາຊົນ ປະຕິວັດລາວ, ປະທານສະພາລັດຖະມົນຕີຜູ້ນໍາ ທີ່ເຄົາລົບຮັກ, ກອງປະຊຸມໃຫຍ່ໄດ້ຕ້ອນຮັບພະນັກງານຜູ້ອາວຸໂສ, ວິລະສະຕີແຫ່ງຊາດ ແລະ ເອື້ອຍນ້ອງຜູ້ແທນທີ່ເປັນຕົວແທນດີເດັ່ນໃນຂະບວນການ 3 ດີ 2 ໜ້າທີ່ ຂອງແມ່ຍິງ ໄດ້ນໍາເອົາຄວາມສາມັກຄີຮັກແພງອັນສະໜິດສະໜົມ ແລະ ຄວາມ

ເຊື່ອຫມັ້ນມາສູ່ກອງປະຊຸມພວກເຮົາ.

ກອງປະຊຸມໃຫຍ່ພວກເຮົາມີຄວາມເບີກບານມ່ວນຊື່ນຢ່າງລົ້ນເຫຼືອ ທີ່ໄດ້ຄຳນັບຮັບຕ້ອນບັນດາສະຫາຍ ເພື່ອນມິດຕ່າງປະເທດ ທີ່ໄດ້ນຳເອົາຄວາມສາມັກຄີມິດຕະພາບອັນດູດດື່ມ ມາສູ່ກອງປະຊຸມແມ່ຍິງລາວກໍຄື ປະຊາຊົນລາວພວກເຮົາ .

ຂ້າພະເຈົ້າຕາງຫນ້າ ຄະນະບໍລິຫານງານສູນກາງ ສະຫະພັນແມ່ຍິງລາວສະໄຫມທີ່ I ຂໍສະເຫນີບົດລາຍງານການເມືອງຕໍ່ ກອງປະຊຸມໃຫຍ່ດັ່ງລຸ່ມນີ້:

## <u>ພາກທີ່ I</u>

ສັງເກດຕີລາຄາຜົນງານຂອງຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ່ I ຂອງແມ່ຍິງລາວບັນດາເຜົ່າ (ແຕ່ປີ1984ເຖິງປີ1988)

I. <u>ຂະບວນການເຄື່ອນໄຫວຂອງສະຫະພັນ ແລະ ແມ່ຍິງລາວ ບັນດາເຜົ່າໃນຊຸມປີຜ່ານມາ</u> :

ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ III, ທີ IV ຂອງພັກ, ແຜນການ 5 ປີຄັ້ງທີ I ແລະ ທີ II ແຫ່ງລັດກໍຄື ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ I ຂອງແມ່ຍິງລາວທົ່ວປະເທດ ວາງອອກນັ້ນ ເຖິງວ່າຈະພົບຄວາມຫຍຸ້ງຍາກຫຼາຍປານໃດກໍຕາມ ແຕ່ພວກເອື້ອຍນ້ອງແມ່ຍິງເຮົາ ກໍໄດ້ພ້ອມກັນສູ້ຊົນບັນຕົວຂຶ້ນ ເພື່ອປະຕິບັດແລະໄດ້ມີຜົນງານບາງດ້ານດັ່ງລຸ່ມນີ້ :

<u>ວຽກງານອົບຮົມການເມືອງແນວຄິດ</u> : ພວກເຮົາໄດ້ຈັດຕັ້ງ ການສຶກສາອົບຮົມ ຮ່ຳຮຽນແນວທາງນະໂຍບາຍຂອງພັກ-ລັດ, ບັນດາ ມະຕິຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ I ຂອງສະຫະພັນແມ່ຍິງລາວ

ໃຫ້ເຊື່ອມຊຶມເຂົ້າໃນໝູ່ມະຫາຊົນ, ການຈັດຕັ້ງສຶກສາອົບຮົມ ພວກເຮົາໄດ້ສົມທົບທາງເລິກ ແລະ ທາງກວ້າງ ເພື່ອເຮັດໃຫ້ເອື້ອຍນ້ອງ ພະນັກງານສະມາຊິກ ແລະ ແມ່ຍິງບັນດາເຜົ່າ ເຊີດຊູນ້ຳໃຈຮັກຊາດ ຮັກສັງຄົມນິຍົມ ແລະ ເຕົ້າໂຮມກຳລັງອັນໃຫຍ່ຫຼວງຂອງແມ່ຍິງ ເຂົ້າຮ່ວມ ການເຄື່ອນໄຫວປະຕິວັດ ຂອງມະຫາຊົນຢ່າງກວ້າງຂວາງ.

ຜົນໄດ້ຮັບຂອງວຽກງານສຶກສາອົບຮົມໄດ້ເປັນການຍົກລະດັບ ຄວາມຮູ້ສຶກ ຕື່ນຕົວຂອງເອື້ອຍນ້ອງ ຊຶ່ງສະແດງອອກໃນການຫັນປ່ຽນການເຄື່ອນໄຫວຂອງແມ່ຍິງໃນເມື່ອກ່ອນນັ້ນ ມີລັກສະນະ ສະເພາະຕົວ ຂອງ ແມ່ຍິງເທົ່ານັ້ນ ໄດ້ຫັນມາຕິດແໜ້ນກັບ ບັນດາຈຸດໝາຍເສດຖະກິດ ສັງຄົມ, ຂະບວນການຂອງແມ່ຍິງໄດ້ປະກອບສ່ວນເຂົ້າໃນການປະຕິບັດສອງ ໜ້າທີ່ ຍຸດທະສາດຄື ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ ໄດ້ມີບາດກ້າວໃໝ່ ຫຼາຍປະການ.

ວຽກງານປຸກລະດົມຈັດຕັ້ງຂະບວນການແຂ່ງຂັນ ປະຕິບັດຄຳຂວັນ 3 ດີ 2 ໜ້າທີ່ :

ແມ່ຍິງພວກເຮົາໄດ້ຈັດຕັ້ງເປີດຂະບວນການແຂ່ງຂັນ 3 ດີ 2 ໜ້າທີ່ ເຮັດໃຫ້ເນື້ອໃນຂອງກອງປະຊຸມໃຫຍ່ຄັ້ງທີ I ກາຍເປັນ ພາກປະຕິບັດຕົວຈິງຂອງຂະບວນການ ແລະ ແທດເໝາະ ກັບ ສະພາບແມ່ຍິງແຕ່ລະພາກສ່ວນ ເຮັດໃຫ້ຂະບວນການດັ່ງກ່າວນັ້ນໄປເຖິງທ້ອງຖິ່ນ, ຂະແໜງການ ແລະ ແຕ່ລະຄອບຄົວ, ໄດ້ສ້າງສະພາບການຫັນປ່ຽນໃໝ່ຕື່ມອີກບາດກ້າວໜຶ່ງ ສຳຄັນໃນວົງການແມ່ຍິງພວກເຮົາ, ຊຶ່ງສະແດງອອກ ໃນການເຄື່ອນໄຫວຕົວຈິງຄື :

ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ

ແມ່ຍິງຫຼາຍທ້ອງຖິ່ນໄດ້ເຂົ້າຮ່ວມການລະດົມຊາວໜຸ່ມໃຫ້ສະໝັກໃຈອອກໄປເປັນທະຫານພົນທະ, ເຂົ້າຮ່ວມໜ່ວຍປ້ອງກັນຄວາມສະຫງົບສຸກ

ຢູ່ໃນສຳນັກງານ ອົງການ, ໂຮງໝໍ, ໂຮງຮຽນ ໂຮງຈັກ ໂຮງງານ ບັນດາຫົວໜ່ວຍຮາກຖານເສດຖະກິດ ແລະ ບ້ານຊ່ອງທ້ອງຖິ່ນຂອງຕົນ. ພິເສດແມ່ນ ການຮັບໃຊ້ຂັ້ນຮົບ 2 ຄັ້ງ ຢູ່ເມືອງປາກລາຍປີ 1984 ແລະ ຂັ້ນຮົບຕ້ານແສງນາບ້ານນ້ອຍ ເມືອງບໍ່ແຕນແຂວງໄຊຍະບູລີ ປີ 1987- 1988 ເອື້ອຍນ້ອງແມ່ຍິງຫຼາຍທ້ອງຖິ່ນໃນທົ່ວປະເທດຕ່າງກໍໄດ້ທ້ອນໂຮມ ນ້ຳໃຈ, ວັດຖຸ, ເຫື່ອແຮງເຂົ້າໃນການຕ້ານສັດຕູ ເພື່ອຮັກສາເຂດນ້ຳແດນດິນອັນສັກກາລະບູຊາຂອງປະຊາຊົນເຮົາ, ລວມວັດຖຸທັງໝົດທີ່ສົ່ງໃຫ້ແນວໜ້າເປັນມູນຄ່າ 7.200.000 ກີບ. ແມ່ຍິງກະຊວງປ້ອງກັນປະເທດໄດ້ອອກເຫື່ອ ເຫແຮງ ເຮັດໜ້າທີ່ຕິດຕໍ່ ສື່ສານ ແລະ ປຸງແຕ່ງອາຫານ ການກິນສົ່ງໃຫ້ແນວໜ້າຢ່າງເປັນປະຈຳ, ເອື້ອຍນ້ອງຍິງໜຸ່ມ ກຳແພງນະຄອນວຽງຈັນ ແລະ ບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ ໄດ້ສະໝັກໃຈ ຍືນຄຽງຂ້າງ ກັບ ຊາຍໜຸ່ມໄປຮັບໃຊ້ການສູ້ຮົບເປັນຈຳນວນຫຼວງຫຼາຍ .

ແມ່ຍິງເມືອງບໍ່ແຕນ ແລະ ເມືອງປາກລາຍ ແຂວງໄຊຍະບູລີ ກໍ່ໄດ້ຄຽງບ່າຄຽງໄຫຼ່ ກັບປະຊາຊົນ ລຳລຽງຂົນສົ່ງ, ຂຸດຂຸມຄອງສູ້ຮົບຊ່ວຍອ້າຍນ້ອງທະຫານ ແລະ ຂຸມຫຼົບໄພຢ່າງບໍ່ຮູ້ອິດ ຮູ້ເມື່ອຍ. ແມ່ຍິງ ແຂວງເຊກອງ ແລະ ແຂວງສາລະວັນກໍໄດ້ປະກອບສ່ວນອັນສຳຄັນເຂົ້າໃນ ຂັ້ນກວາດລ້າງດັບສູນພວກພັດຖິ່ນ ພາກໃຕ້ຫວຽດນາມ ທີ່ເລັດລອດເຂົ້າປະເທດເຮົາ. ນອກຈາກປະຕິບັດໜ້າທີ່ແນວໜ້າແລ້ວ ຄະນະສະຫະພັນແມ່ຍິງຫຼາຍທ້ອງຖິ່ນຍັງໄດ້ສົມທົບກັບອຳນາດການປົກຄອງ, ຄະນະ ສະຫວັດດີການ ສັງຄົມໃນຂັ້ນຂອງຕົນ ປະຕິບັດນະໂຍບາຍແນວຫລັງຕໍ່ຜູ້ ເສຍຊີວິດ, ເສຍອົງຄະ ແລະ ຖືກບາດເຈັບ ເບິ່ງແຍງຊ່ວຍເຫຼືອໃຫ້ຄວາມອົບອຸ່ນແກ່ພໍ່ແມ່ ຄອບຄົວລູກເມຍ ຂອງເຂົ້າເຈົ້າຕາມເງື່ອນໄຂຕົວຈິງ ຂອງທ້ອງຖິ່ນ .

Agriculture and livestock

## ວຽກງານກະສິກຳປູກຝັງ ແລະ ລ້ຽງສັດ

ແມ່ຍິງໄດ້ເປັນກຳລັງອັນໃຫຍ່ຫຼວງ ໃນການຜະລິດກະສິກຳ ກວມຈຳນວນ 60% ຂອງກຳລັງແຮງງານໃນປະຈຸບັນ. ເຂົາເຈົ້າໄດ້ ເປັນກຳລັງຕົ້ນຕໍ ໃນຂອດປັກດຳ, ເຮັດນາປີ, ນາແຊງ, ເຮັດຝຸ່ນຄອກ, ຝຸ່ນຂຽວໃສ່ນາ, ບຸກເບີກເນື້ອທີ່ປູກຝັງ, ປະຕິບັດກະເສດສຸມ ແບບງ່າຍດາຍ ປະກອບສ່ວນເຂົ້າໃນການສ້າງຊົນລະປະທານ, ສ້າງອ່າງເກັບນ້ຳ ແລະ ອື່ນໆ.

ແມ່ຍິງຊາວໄຮ່ນາ ເວລາໃດກໍ່ຕັ້ງໜ້າຜ່ານຜ່າ ຄວາມຫຍຸ້ງຍາກລຳບາກ ຫຼັງສູ້ຟ້າ ໜ້າສູ້ດິນ ຖືເອົາທົ່ງໄຮ່ ທົ່ງນາເປັນສະໜາມຮົບ ການຜະລິດ, ທຸກໆ ຄອງສາຍເໝືອງລ້ວນແຕ່ມີນ້ຳເຫື່ອ ນ້ຳແຮງຂອງ ແມ່ຍິງ ປະກອບສ່ວນສູ້ຊົນບັນລຸ ຕົວເລກຄາດໝາຍ ແຜນການ 5 ປີຄັ້ງທີ I ແຫ່ງລັດ ( 1981-1985 ) 2,5 ໂຕນ ຕໍ່ 1 ເຮັກຕາ, ປະກອບສ່ວນເຂົ້າໃນຍອດປະລິມານການຜະລິດເຂົ້າເປືອກປີ 1985 ລື່ນ ປີ1976 ສອງເທົ່າກວ່າ. ຕົວຢ່າງ: ເອື້ອຍນ້ອງແຂວງ ຈຳປາສັກ ຄື: ເມືອງໂພນທອງ, ເມືອງສຸຂຸມາ, ເມືອງຊະນະສົມບູນ, ເມືອງໂຂງ, ໄດ້ບົ່ມຝຸ່ນໃສ່ນາ ສາມາດຍົກສະມັດຖະພາບຈາກ 2,5 ໂຕນ ຂຶ້ນເປັນ 3,5 ໂຕນຕໍ່ 1 ເຮັກຕາ. ເອື້ອຍນ້ອງແມ່ຍິງເມືອງສີສັດຕະນາກ, ເມືອງສີໂຄດຕະບອງ, ກຳແພງນະຄອນວຽງຈັນ ເຮັດນາແຊງໄດ້ຍົກສະມັດຖະພາບ 5ເຖິງ 7 ໂຕນ ຕໍ່ 1 ເຮັກຕາ .

ພິເສດແມ່ຍິງເຂດພູດອຍກໍ່ ໄດ້ຫັນຈາກການເຮັດໄຮ່ ມາເຮັດນາ ຄື: ແມ່ຍິງບ້ານລ່ອງລັນ ແຂວງຫຼວງພະບາງ, ແມ່ຍິງບ້ານທົ່ງແປ ແຂວງບໍລິຄຳໄຊ ຄຽງບ່າຄຽງໄຫລ່ ກັບເພດຊາຍບຸກເບີກເນື້ອທີ່ປູກຝັງ, ສະເພາະບ້ານທົ່ງແປໄດ້ 30 ເຮັກຕາ, ທັງເປັນການປະກອບສ່ວນເຂົ້າໃນການປົກ-

ປົກຮັກສາ ສິ່ງແວດລ້ອມອີກດ້ວຍ. ນອກຈາກການປູກເຂົ້າແລ້ວ ແມ່ຍິງ ຍັງໄດ້ປະກອບສ່ວນປູກກາເຟ, ໝາກແໜ່ງ ແລະ ພືດສຳຮອງຕ່າງໆ, ພືດພັນຫຼາຍຊະນິດ ເດັ່ນກວ່າໝູ່ແມ່ນ ແມ່ຍິງເມືອງ ປາກຊ່ອງ ແຂວງ ຈຳປາສັກ, ແມ່ຍິງສະຫະກອນບ້ານ ຖ້ຳຫອຍໄຊ ແຂວງຊຽງຂວາງ, ແມ່ຍິງ ສະຫະກອນທ່າມ່ວງ ເມືອງຫາດຊາຍຟອງ ກຳແພງນະຄອນວຽງຈັນ. ນອກຈາກນີ້ ແມ່ຍິງຫຼາຍທ້ອງຖິ່ນ ຍັງໄດ້ຮັກສາມູນເຊື້ອ ການປູກມອນ ລ້ຽງມອນສາວໄໝ ເດັ່ນກວ່າໝູ່ແມ່ນ ແມ່ຍິງເມືອງຊຳໃຕ້ ແຂວງຫົວພັນ.

ການປະກອບສ່ວນໃນການລ້ຽງສັດໃຫຍ່ ສັດນ້ອຍ ຢູ່ໃນຄອບຄົວກໍ່ ໄດ້ເຮັດໃຫ້ຈຳນວນສັດລ້ຽງ ໄດ້ເພີ່ມຂຶ້ນໃນສະຖິຕິລວມແຫ່ງລັດ.

ເອື້ອຍນ້ອງແມ່ຍິງລາວ ບັນດາເຜົ່າບໍ່ພຽງແຕ່ ເປັນຜູ້ດຸໝັ່ນ ໃນການອອກແຮງງານ ທຳການຜະລິດເທົ່ານັ້ນ, ເຂົາເຈົ້າຍັງເປັນຜູ້ທ້າວທັນ ປະຕິບັດ ພັນທະຕໍ່ປະເທດຊາດ ເສຍເຂົ້າພາສີ ແລະ ຂາຍເຂົ້າໃຫ້ລັດເປັນຢ່າງດີ, ພ້ອມກັນນັ້ນຍັງເປັນຜູ້ຮູ້ຈັກປະຢັດ ເພື່ອສະສົມທຶນຮອນ ເຂົ້າໃນ ການສ້າງສາປະເທດຊາດ, ເອື້ອຍນ້ອງແມ່ຍິງບັນດາຊັ້ນຄົນຕ່າງໆ ໄດ້ສະໝັກໃຈໄປຝາກເງິນປະຫຍັດລວມທັງໝົດມີ 400.240.000 ກີບ .

<u>ໃນຂະແໜງຫັດຖະກຳ</u>

ແມ່ຍິງທີ່ເຮັດວຽກຢູ່ໃນຂະແໜງນີ້ກວມ 80% ຂອງຈຳນວນ ກຳມະກອນທັງໝົດ, ເອື້ອຍນ້ອງແມ່ຍິງໄດ້ເສີມຂະຫຍາຍນ້ຳໃຈ ດຸໝັ່ນຂະຫຍັນພຽນໃນການຈັກສານ, ຕ່ຳຫູກ, ທໍໄໝ, ຫຍິບຖັກປັກແສ່ວ ເກັບລວດລາຍຕ່າງໆ ດ້ວຍສີມືອັນປານີດ ຂອງຕົນສ້າງຜະລິດຕະພັນ ຫັດຖະກຳອອກຢ່າງອຸດົມຮ່ວມ ທີ່ສຸດຢູ່ໃນຫຼາຍທ້ອງຖິ່ນ ທີ່ມີລະດັບແຕກຕ່າງກັນ, ເດັ່ນກວ່າໝູ່ແມ່ນ ແມ່ຍິງກຳແພງນະຄອນວຽງຈັນ ແລະ ແຂວງຈຳປາສັກເຊັ່ນ ສະຫະກອນຫັດຖະກຳ ໂພນຕ້ອງ, ສະຫະກອນບ້ານສະພາຍ, ສະຫະກອນຜ້າໄໝລາວ, ສະຫະກອນລາວພັດທະນາ ແລະ ການຜະລິດຢູ່ແຕ່ລະຄອບຄົວ ໃນ

ຫຼາຍທ້ອງຖິ່ນໄດ້ພົ້ນເດັ່ນຂຶ້ນ ສາມາດສະໜອງການຊົມໃຊ້ໃນສັງຄົມ ແລະ ເປັນສິນຄ້າຂາອອກ, ນຳລາຍຮັບມາໃຫ້ແກ່ຄອບຄົວ ແລະ ມີພັນທະຕໍ່ ລັດ ເປັນຈຳນວນບໍ່ໜ້ອຍ, ພິເສດແມ່ນຜະລິດຕະພັນຫັດຖະກຳແມ່ຍິງລາວ ບາງ ຊະນິດຍັງໄດ້ນຳໄປວາງສະແດງຢູ່ຕະຫຼາດນັດສາກົນ ໄດ້ຮັບການຍົກ ຍ້ອງ ຈາກຊາວຕ່າງປະເທດ ເປັນຢ່າງດີ .

ໃນຂົງເຂດລັດວິສາຫະກິດ

ແມ່ຍິງກຳມະກອນ, ລັດຖະກອນກວມ 51,88% ໃນຈຳນວນ ແຮງ ງານທັງໝົດ, ໃນໄລຍະຜ່ານມາ ເຖິງວ່າມີຄວາມຫຍຸ້ງຍາກໃນດ້ານການ ເປັນຢູ່ ພຽງໃດກໍ່ຕາມ ແຕ່ເອື້ອຍນ້ອງກໍ່ໄດ້ຕັ້ງໜ້າຜ່ານຜ່າ ບຸກບືນ ເຮັດ ໜ້າທີ່ ວິຊາສະເພາະທີ່ຂັ້ນເທິງໄດ້ມອບໝາຍໃຫ້, ເອື້ອຍນ້ອງ ແມ່ຍິງ ກຳມະກອນໄດ້ປະກອບສ່ວນເຂົ້າໃນການຫັນເປັນທຸລະກິດ ຢ່າງແຂງແຮງ ຕົວຢ່າງ ເອື້ອຍນ້ອງແມ່ຍິງກຳມະກອນໂຮງງານຕັດຫຍິບວຽງຈັນ 4, ກຳ ມະກອນຍິງຢູ່ໂຮງງານຢາສູບເລກ 1 ແລະ ໂຮງງານຕໍ່າແພ່ຜືນ ໂສກປ່າ ຫຼວງໄດ້ປະກອບສ່ວນປະຕິບັດລື່ນຕົວເລກຄາດໝາຍ ເຮັດໃຫ້ລາຍຮັບ ລວມ ຂອງໂຮງງານ ແລະ ບໍລິສັດໄດ້ເພີ່ມຂຶ້ນ ແລະ ລາຍຮັບຂອງເອື້ອຍນ້ອງ ກໍ່ ໄດ້ເພີ່ມຂຶ້ນ ຕົວຢ່າງ: ໂຮງງານຕັດຫຍິບເລກ 4 ວຽງຈັນລາຍຮັບ ຂອງ ບໍລິສັດສະເພາະ 6 ເດືອນຕົ້ນປີ 1988 ໄດ້ເປັນເງິນກີບ 61.133.000 ກີບ, ເງິນຕາ 17.242 ໂດລາ, ລາຍຮັບກຳມະກອນຜູ້ທີ່ເຮັດລື່ນລະດັບ ຄາດໝາຍໄດ້ເພີ່ມຂຶ້ນ ແລະ ມີພັນທະຕໍ່ລັດ.

ວຽກງານຈໍລະຈອນແຈກຢາຍ

ໂດຍປະຕິບັດຕາມນະໂຍບາຍໃໝ່ຂອງພັກ-ລັດ ໃນຫວ່າງ 2 ປີ ມາ ນີ້, ເອື້ອຍນ້ອງແມ່ຄ້າ ຊາວຂາຍ ໄດ້ເປັນກຳລັງເຂົ້າຮ່ວມວຽກນີ້ 95 % ເຂົ້າເຈົ້າໄດ້ນຳເອົາສິນຄ້າ ອຸປະໂພກ ແລະ ບໍລິໂພກຈາກຕົວເມືອງ ໄປ ສູ່ຊົນນະບົດ, ນຳເອົາພືດພັນ ທັນຍາຫານ ຈາກຊົນນະບົດ ມາສູ່ຕົວເມືອງ

ເຮັດໃຫ້ການຊື້ - ຂາຍແລກປ່ຽນລະຫວ່າງປະຊາຊົນບັນດາເຜົ່າ ສະດວກ ສະບາຍຂຶ້ນກວ່າເກົ່າ .

ໃນຂະແໜງບໍລິການເຊັ່ນ: ຮ້ານຄ້າ, ທະນາຄານ, ການເງິນ ໂຮງແຮມ, ຮ້ານກິນດື່ມ ຢູ່ທຸກແຫ່ງ ໃນທົ່ວປະເທດກໍລ້ວນແຕ່ມີ ເອື້ອຍນ້ອງແມ່ຍິງປະກອບສ່ວນເຮັດການກໍ່ສ້າງເສດຖະກິດ ແລະ ແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນເຮົາ ນັບມື້ນັບດີຂຶ້ນ .

<u>ໃນຂະແໜງກໍ່ສ້າງ</u>

ເອື້ອຍນ້ອງແມ່ຍິງຫຼາຍທ້ອງຖິ່ນໄດ້ຄຽງບ່າຄຽງໄຫຼ່ກັບເພດຊາຍເຂົ້າຮ່ວມການສ້ອມແປງຖະໜົນຫົນທາງ ແລະ ກໍ່ສ້າງເສັ້ນທາງໃໝ່ໃນທ້ອງຖິ່ນຂອງຕົນ, ກໍ່ສ້າງ ແລະ ປົວແປງ ເຄຫາສະຖານ ເຮືອນຊານບ້ານພັກ , ສຳນັກງານອົງການ, ໂຮງໝໍ, ໂຮງຮຽນ ສະຖານທີ່ຕ່າງໆ, ເດັ່ນກວ່າໝູ່ແມ່ນ ແມ່ຍິງແຂວງສະຫວັນນະເຂດໄດ້ປະກອບສ່ວນ ສ້າງເສັ້ນທາງເລກ 9 ເລກ 11 ແລະ ເລກ 13 ລວມທັງໝົດ 13.200 ແຮງງານ .

<u>ຂະແໜງການສຶກສາ</u>

ແມ່ຍິງທີ່ເຮັດວຽກຢູ່ໃນຂະແໜງນີ້ ກວມ 50% ຂອງພະນັກງານສຶກສາທັງໝົດ. ໃນນັ້ນມີຄູຊັ້ນປະຖົມ 25,50% , ຄູຊັ້ນກາງກວມ 23,42%, ຄູຊັ້ນສູງກວມ 32,97% , ນັກຮຽນຍິງຈົບຊັ້ນອຸດົມ 32,97% , ຈຳນວນໜຶ່ງມີລະດັບເໜືອມະຫາວິທະຍາໄລ.

ສຳລັບພະນັກງານສະຫະພັນແມ່ຍິງ ໄດ້ບຳລຸງຍົກລະດັບ ຈາກຊັ້ນປະຖົມຂຶ້ນມັດທະຍົມມີ 15% ຈາກມັດທະຍົມຂຶ້ນອຸດົມມີ 5% , ສຳລັບເອື້ອຍນ້ອງແມ່ຍິງທີ່ໄດ້ເຂົ້າຮ່ວມການລົບລ້າງ ຄວາມບໍ່ຮູ້ໜັງສືກວມ 93,85%ໃນຈຳນວນປະຊາຊົນທີ່ໄດ້ລົບລ້າງແລ້ວ.

ສະເພາະ ນາງຄູ ອານຸບານ ໄດ້ສ້າງຂຶ້ນມີ 95,62% ທຽບໃສ່ ປີ 1984 ຄືນຫຼັງ ເຂົ້າເຈົ້າໄດ້ຍົກສູງນ້ຳໃຈຮັບຜິດຊອບຕໍ່ການລ້ຽງດູລູກຫຼານ

ໂດຍຖືເອົາວຽກນີ້ເປັນໜ້າທີ່ອັນມີກຽດສູງສົ່ງ ທີ່ສັງຄົມໄດ້ມອບໝາຍ ໃຫ້, ເຮືອນຝາກເດັກມີ 315 ແຫ່ງ, ໂຮງຮຽນອານຸບານ 588 ແຫ່ງ, ບ່ອນທີ່ເປັນແບບຢ່າງແມ່ນໂຮງຮຽນອານຸບານ, ເຮືອນຝາກເດັກ ຂອງກະຊວງສາທາລະນະສຸກ ແລະ ກຳແພງນະຄອນວຽງຈັນ.

ແມ່ຍິງຫຼາຍທ້ອງຖິ່ນ ໄດ້ປະກອບສ່ວນເຂົ້າໃນໂຄງການປະຕິຮູບ ການສຶກສາໃຫ້ມີຄຸນນະພາບ ປະກອບທຶນຮອນ ພ້ອມທັງແຮງງານເຂົ້າໃນ ການປົວແປງ ແລະ ກໍ່ສ້າງໂຮງຮຽນ, ຊຸກຍູ້ລູກຫຼານ ທີ່ຢູ່ໃນໄວຮຽນໄປເຂົ້າໂຮງຮຽນ ແລະ ເອົາໃຈໃສ່ຊ່ວຍເຫຼືອເບິ່ງແຍງການເປັນຢູ່ຂອງ ຄູອາຈານ ຊຸກຍູ້ເຂົາເຈົ້າເຮັດໜ້າທີ່ການສິດສອນ ລູກຫຼານຂອງຕົນເປັນຢ່າງດີ.

ຜ່ານຂະບວນການ 3 ດີ 2 ໜ້າທີ່ໄດ້ເປັນການ ຝຶກຝົນຫຼໍ່ຫຼອມ ນ້ຳໃຈມານະອົດທົນຂອງຄູ ອາຈານແມ່ຍິງ ຂັ້ນຕົ້ນກາວໜຶ່ງ ເປັນຕົ້ນ ແມ່ນເອື້ອຍນ້ອງຄູອາຈານ ທີ່ປະຈຳຢູ່ ເຂດຊົນນະບົດ ໄດ້ຕັ້ງໜ້າຜ່ານຜ່າຄວາມຫຍຸ້ງຍາກ ໄດ້ເຈັ້ຽລູກ ຂັ້ນທ້ອງສິດສອນ ເພື່ອຖ່າຍທອດຄວາມຮູ້ໃຫ້ແກ່ ຄົນລຸ້ນໃໝ່ ດ້ວຍມານະຈິດປະຕິວັດ ສົມກຽດທີ່ວ່າ ຄູເປັນຄົນຂອງພັກ.

<u>ໃນຂະແໜງສາທາລະນະສຸກ</u>

ແມ່ຍິງທີ່ຢູ່ໃນຂະແໜງການນີ້ກວມ 48,8% ຜ່ານຂະບວນການ ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ ຖັນແຖວແພດ ແມ່ຍິງໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານຈຳນວນ ແລະ ຄຸນນະພາບ ແພດຊັ້ນຕົ້ນມີ 71,54% ແພດຊັ້ນກາງມີ 41,79% ແພດຊັ້ນສູງມີ 57,05% ເຂົາເຈົ້າໄດ້ຮັບການບຳລຸງວິຊາສະເພາະ ແລະ ຄຸນສົມບັດປະຕິວັດ ນ້ຳໃຈຮັບໃຊ້ປິ່ນປົວຄົນເຈັບອັນໜ້າສັນລະເສີນທີ່ສຸດແມ່ນ ບັນໄຂ້ເລືອດອອກປີ 1985 ຫາ 1987 ບັນດາທ່ານໝໍ, ນາງພະຍາບານ ຕະຫຼອດເຖິງນັກສຶກສາກໍ່ໄດ້ສຸມຈິດໃຈທຸ່ມເທ ຄວາມຮູ້ຄວາມສາມາດ ຮັບໃຊ້ຄົນເຈັບຢ່າງບໍ່ຮູ້ອິດ ຮູ້ເມື່ອຍ ສົມກຽດທີ່ວ່າ ແພດເໝືອນແມ່ຜູ້ໃຈດີ.

ຂະແໜງວັດທະນະທຳ

ແມ່ຍິງພວກເຮົາໄດ້ເປັນກຳລັງປະກອບສ່ວນເຂົ້າລົບລ້າງວັດທະນະທຳອັນເຊື່ອມຊາມ ຂອງລັດທິລ່າເມືອງຂຶ້ນ ໄດ້ປະໄວ້, ອອກແຮງຟື້ນຟູ ສິນລະປະວັດທະນະທຳອັນມີລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນ. ບັນດານັກກະວີ ນັກປະພັນ ແລະ ນັກປະດິດຄິດແຕ່ງ ແມ່ຍິງໄດ້ນັບມື້ເພີ່ມຂຶ້ນ ນັກປະດິດຄິດແຕ່ງ ຍິ່ງໜຸ່ມຫຼາຍຄົນໄດ້ຖືກຮັບເຂົ້າເປັນສະມາຊິກຂອງສະມາຄົມນັກຂຽນໜຸ່ມ, ການກິລາກາຍຍະກຳ ເອື້ອຍນ້ອງຍິງໜຸ່ມຫຼາຍທ້ອງຖິ່ນ ກໍ່ໄດ້ສະໝັກໃຈເຂົ້າເປັນສິນລະປະອາຊີບ ແລະ ສະໝັກຫຼິ້ນ ເຂົາເຈົ້າ ໄດ້ເຂົ້າຮ່ວມໃນງານມະໂຫລານ ສິລະປະພື້ນເມືອງ, ບັ້ນກວດສອບ ເສັງເພງອັບລຳແຕ່ລະຄັ້ງໄດ້ປະກອບສ່ວນສ້າງບັນຍາກາດເບີກບານມ່ວນຊື່ນ ເຂົ້າໃນການຮັບໃຊ້ການສູ້ຮົບ ແລະ ການຜະລິດ ເຮັດໃຫ້ໂສມໜ້າ ຂອງ ສັງຄົມລາວ ມີຄວາມສົດຊື່ນ .

ຜ່ານຂະບວນການ 3 ດີ 2 ໜ້າທີ່ ໃນໄລຍະ 5 ປີຜ່ານມາເອື້ອຍນ້ອງແມ່ຍິງບັນດາເຜົ່າ ນັບເປັນໝື່ນເປັນແສນຄົນ ໄດ້ແຂ່ງຂັນກັນປະຕິບັດໜ້າທີ່ພົນລະເມືອງດີມີ 282.457 ຄົນ.

ການກໍ່ສ້າງຄອບຄົວວັດທະນະທຳໃໝ່

ໃນຂະບວນການແມ່ຍິງບໍ່ພຽງແຕ່ ປະຕິບັດໜ້າທີ່ການເມືອງ ແລະ ພັນທະ ພົນລະເມືອງດີເທົ່ານັ້ນ. ແມ່ຍິງພວກເຮົາຍັງມີພາລະອັນໜັກໜ່ວງຂອງຜູ້ເປັນເມຍ, ເປັນແມ່ ພາລະກິດຄອບຄົວ ລູກຜົວອີກດ້ວຍ, ເປັນຕົ້ນແມ່ນໜ້າທີ່ແມ່ບ້ານ ການເຮືອນ, ຄຸ້ມຄອງການເປັນຢູ່ ປະຈຳວັນ ຂອງຄອບຄົວ ສຶກສາອົບຮົມລູກຫຼານ ແລະ ວຽກບ້ານ ການເຮືອນອື່ນໆ.

ດ້ານເນື້ອໃນຂອງຄອບຄົວວັດທະນະທຳໃໝ່ພວກເຮົາໄດ້ ແນະນຳໃຫ້ມີການປັບປຸງການພົວພັນລະຫວ່າງ ຜົວເມຍໃຫ້ມີຄວາມສະເໝີພາບ, ມີຄວາມຊື່ສັດ ບໍລິສຸດ ຕໍ່ກັນ, ເຄົາລົບນັບຖື ຊ່ວຍກັນ ແລະ ກັນ ມີການ ປະ

ພຶດ ແລະ ການກະທຳອັນດີຕໍ່ກັນ, ພ້ອມກັນເຮັດໜ້າທີ່ພັນທະ ຂອງໃພ່ລາວຕໍ່ ປະເທດຊາດ, ຕໍ່ສັງຄົມ ແລະ ຄອບຄົວ.

ຜ່ານຂະບວນການດັ່ງກ່າວນັ້ນ ໄດ້ສົ່ງຜົນສະທ້ອນອັນດີ ຕໍ່ຄວາມຮູ້ສຶກຂອງພໍ່ເຮືອນ, ຜູ້ເປັນຜົວໄດ້ຫັນມາຊ່ວຍຜູ້ເປັນເມຍ ໃນວຽກບ້ານ ການເຮືອນ ແລະ ເບິ່ງແຍງລູກເຕົ້າ ມີຫຼາຍຄອບຄົວໄດ້ພາກັນຂຽນໃບຕັດສິນໃຈແຂ່ງຂັນເປັນຄອບຄົວຫ້າດີ : ຜູ້ຊາຍຈຳນວນໜຶ່ງຢູ່ແຂວງສະຫວັນນະເຂດ ຜູ້ຊາຍເມືອງສຸຂຸມາ ແຂວງຈຳປາສັກ ແລະ ຜູ້ຊາຍຢູ່ ກະຊວງປ້ອງກັນປະເທດ, ສະນັ້ນບັນຫາຄວາມຜິດຂ່ອງຕ່ອງຖຽງກັນ ຫຼື ການປະຮ້າງກັນລະຫວ່າງຜົວເມຍ ໄດ້ລຸດຜ່ອນລົງ. ຜ່ານຂະບວນການດັ່ງກ່າວ ເອື້ອຍນ້ອງແມ່ຍິງ ນັບເປັນໝື່ນໆ ຄົນໄດ້ປະຕິບັດໜ້າທີ່ເມຍທີ່ດີ ມີ 100.334 ຄົນ

ການສຶກສາອົບຮົມລູກຫຼານ ໄດ້ກາຍເປັນຄວາມຮັບຜິດຊອບລວມ ລະຫວ່າງຜູ້ເປັນພໍ່ ກັບແມ່ ຜົນຂອງການສຶກສາອົບຮົມໄດ້ສະແດງອອກຄື ລູກຫຼານຂອງພວກເຮົາ ສ່ວນຫຼາຍໄດ້ກາຍເປັນເດັກຄຳຮູ ດຸໝັ່ນຕໍ່ການຮ່ຳຮຽນ ແລະ ຫາວຫັນຕໍ່ການອອກແຮງງານ ສ້າງສາປະເທດຊາດ, ຕົວຢ່າງ: ນັກຮຽນຊັ້ນປະຖົມ ໄວເຍົາວະຊົນ ໄດ້ເຂົ້າຮ່ວມການແຂ່ງຂັນ ວັນນະຄະດີ ຮູບແຕ້ມກັບ ເຍົາວະຊົນສາກົນ ໄດ້ຮັບຫຼຽນຄຳສຸດຍອດ 1 ຫຼຽນ, ຫຼຽນຄຳທຳມະດາ, ຫຼຽນເງິນ ແລະ ຫຼຽນທອງຈຳນວນໜຶ່ງ, ພວກລູກຫຼານ ນັກຮຽນ ຈົບຊັ້ນມັດທະຍົມ ແລະ ອຸດົມກໍໄດ້ເພີ່ມຂຶ້ນ ແລະ ຖືກຄັດເລືອກໄປສຶກສາຕໍ່ ຢູ່ຕ່າງປະເທດ ແລະ ພາຍໃນປະເທດ ເປັນຈຳນວນຫຼວງຫຼາຍ , ຈຳນວນເດັກເສລີ ດື້ດ້ານ ບໍ່ຟັງຄຳບອກສອນຂອງພໍ່ແມ່ ໄດ້ລຸດຜ່ອນລົງ, ຜູ້ເປັນແມ່ຫຼາຍທ້ອງຖິ່ນນັບເປັນໝື່ນ ເປັນແສນຄົນ ໄດ້ແຂ່ງຂັນກັນ ປະຕິບັດໜ້າທີ່ແມ່ ທີ່ດີ ມີ 131.811 ຄົນ.

ວຽກງານສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ:

ຄະນະສະຫະພັນແມ່ຍິງທຸກຂັ້ນ ກໍໄດ້ເອົາໃຈໃສ່ກວດກາຊຸກຍູ້ການ ປະ

ຕິບັດນະໂຍບາຍຕ່າງໆ ທີ່ພັກ- ລັດໄດ້ກຳນົດອອກຕໍ່ແມ່ຍິງ ແລະ ເດັກນ້ອຍເຊັ່ນ: ນະໂຍບາຍປະກັນໄພ, ນະໂຍບາຍພັກຜ່ອນໃນຍາມເກີດລູກ, ນະໂຍບາຍສ້າງຄອບຄົວ, ນະໂຍບາຍກໍ່ສ້າງພະນັກງານເພດຍິງ. ການຍ້ອງຍໍສັນລະເສີນ ແລະ ການເລື່ອນຊັ້ນ ບັນຈຸໜ້າທີ່ໃຫ້ພະນັກງານແມ່ຍິງ, ນະໂຍບາຍພັກເບັ້ຍບຳນານ, ນະໂຍບາຍດູແລ ເບິ່ງແຍງເດັກນ້ອຍ ກໍ່ຄ່ອຍຄ່ອຍ ໄດ້ຮັບການປະຕິບັດເທື່ອລະກ້າວ ລະຫວ່າງຂະແໜງການ ແລະທ້ອງຖິ່ນ ມີລະດັບແຕກຕ່າງກັນ .

ສະເພາະເດັກກຳພ້າ ກຳພອຍ ບໍ່ມີທີ່ເພິ່ງພາອາໃສ, ສະຫະພັນແມ່ຍິງຂັ້ນຕ່າງໆ ກໍ່ໄດ້ສະເໜີໃຫ້ອຳນາດການປົກຄອງ ເພື່ອຮັບເອົາໄປລ້ຽງດູ ແລະ ໃຫ້ໄດ້ຮັບການສຶກສາຮ່ຳຮຽນເປັນຢ່າງດີ.

ໃນດ້ານສິດທິຂອງແມ່ຍິງ ຖ້າຫາກຖືກລ່ວງລະເມີດເຊັ່ນ: ຖືກຂົ່ມຂືນ, ຖືກຜົວຂົ່ມເຫັງ ທຸບຕີ ຫຼື ຖືກປະຮ້າງ ແລະ ອື່ນໆ ສະຫະພັນແມ່ຍິງກໍ່ ໄດ້ເປັນຕົວແທນໃນການຮ້ອງຂໍຕໍ່ວ່າ ນຳຄະນະສານ ຫຼື ອຳນາດການປົກຄອງໃນຂັ້ນຂອງຕົນແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນຄອບຄົວຜົວເມຍ ຢ່າງສົມເຫດ ສົມຜົນໃຫ້ມີຄວາມສະເໝີພາບ ແລະ ຍຸດຕິທຳ.

ການແກ້ໄຂຄວາມຫຍຸ້ງຍາກລຳບາກໃຫ້ແມ່ຍິງຊົນນະບົດ ແລະ ສ້າງວຽກເຮັດ ງານທຳໃຫ້ເອື້ອຍນ້ອງແມ່ຍິງ.

ສູນກາງສະຫະພັນແມ່ຍິງລາວ ໄດ້ຂໍການຊ່ວຍເຫຼືອຈາກອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງ ສາກົນອື່ນໆ ສົມທົບກັບ ທີມລັດຖະບານເຮົາ ຈັດຕັ້ງສູນຝຶກວິຊາຫັດຖະກຳ ຕ່ຳແຜ່ນຂຶ້ນແຫ່ງໜຶ່ງ ເພື່ອສ້າງວິຊາຊີບ ໃຫ້ແມ່ຍິງໄດ້ມີວຽກເຮັດງານທຳ, ພ້ອມກັນນັ້ນກໍ່ມີ ເຄື່ອງອຸປະ ກອນເຊັ່ນ ໂຮງສີເຂົ້າ, ໂຄງການນ້ຳລິນ, ເຄື່ອງອຸປະກອນສ້າງເຮືອນຝາກ- ເດັກ ແລະ ອື່ນໆ ...

ດ້ານການພົວພັນສາກົນ :

ໂດຍປະຕິບັດຕາມແນວທາງການຕ່າງປະເທດຂອງພັກ, ໃນ 5 ປີ ຜ່ານມາສະຫະພັນແມ່ຍິງລາວໄດ້ເພີ່ມທະວີ ຄວາມສາມັກຄີພິເສດ, ມິດຕະພາບ ແລະ ການຮ່ວມມືຮອບດ້ານກັບ ແມ່ຍິງຫວຽດນາມ, ແມ່ຍິງກຳປູເຈຍ ເຮັດໃຫ້ສາຍພົວພັນ ແລະ ການຮ່ວມມືລະຫວ່າງອົງການຈັດຕັ້ງແມ່ຍິງ 3 ປະເທດ ອິນດູຈີນ ນັບມື້ ນັບໜັກແໜ້ນຂຶ້ນ .

ພວກເຮົາໄດ້ເພີ່ມທະວີຄວາມສາມັກຄີ ແບບສູ້ຮົບ ມິດຕະພາບອັນ ຍິ່ງໃຫຍ່ ແລະ ການຮ່ວມມືຮອບດ້ານ ກັບ ແມ່ຍິງສະຫະພາບໂຊວຽດ ແລະ ແມ່ຍິງບັນດາປະເທດສັງຄົມນິຍົມອື່ນໆ ມີການຢ້ຽມຢາມ ປຶກສາຫາລື ແລະ ແລກປ່ຽນ ບົດຮຽນນຳກັນ .

ໃນຖານະເປັນສະມາຊິກ ສະຫະພັນແມ່ຍິງປະຊາທິປະໄຕສາກົນ ສະຫະພັນແມ່ຍິງລາວໄດ້ຕັ້ງໜ້າປະກອບສ່ວນໃນການຕໍ່ສູ້ ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມື, ຕ້ານການຊ່ວງເສັງປະກອບອາວຸດ, ຕ້ານໄພພິບັດແຫ່ງສົງຄາມນິວເຄຼຍ ທີ່ລ້າງຜານ, ຕ້ານລັດທິລ່າເມືອງຂຶ້ນ ແບບເກົ່າ ແລະ ແບບໃໝ່, ຕ້ານລັດທິຊີໂອນິດ, ລັດທິອາປາກທາຍ, ຕ້ານການຮຸກຮານຈຳແນກເຊື້ອຊາດຜິວພັນ ແລະ ຕ້ານທຸກການຈຳແນກອັນບໍ່ຖືກຕ້ອງຕໍ່ແມ່ຍິງ, ໂດຍສະເພາະສະຫະພັນແມ່ຍິງ ໃນຖານະຕາງໜ້າ ໃຫ້ລັດຖະບານ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ຮັບອະນຸຍາດເຊັນສົນທິສັນຍາ ກ່ຽວກັບການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ຊຶ່ງ ອົງການສະຫະປະຊາຊາດໄດ້ສະເໜີອອກ ແລະ ໃຫ້ການສະໜັບສະໜູນຢ່າງແຂງກ້າກັບ ແມ່ຍິງ ແລະ ປະຊາຊົນປະເທດຕ່າງໆ ທີ່ຕໍ່ສູ້ ເພື່ອເອກະລາດແຫ່ງຊາດ, ຄວາມສະເໝີພາບ ແລະ ການພັດທະນາ.

ສະຫະພັນແມ່ຍິງລາວ ເວລາໃດກໍ່ໄດ້ພະຍາຍາມ ເຄື່ອນໄຫວ ເພື່ອປະຕິບັດຂໍ້ສະເໜີ 7 ຂໍ້ ຂອງລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວ ກ່ຽວກັບການສ້າງຂົງເຂດອາຊີ ອາຄະເນ ໃຫ້ກາຍເປັນ ຂົງ

ເຂດແຫ່ງສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື, ພວກເຮົາໄດ້ເດັດດ່ຽວ ສະໜັບສະໜູນຖະແຫຼງການກ່ຽວກັບນະໂຍບາຍປອງດອງຊາດຂອງລັດຖະບານ ສາທາລະນະລັດປະຊາຊົນ ກຳປູເຈຍ ພ້ອມກັນນັ້ນກໍ່ ໄດ້ສ້າງສາຍພົວພັນອັນດີ ຖານບ້ານໃກ້ເຮືອນຄຽງ ເປັນຕົ້ນ ກັບ ແມ່ຍິງໄທແມ ໃສ່ເຣັດໃຫ້ການ ພົວພັນລະຫວ່າງປະຊາຊົນ ສອງຊາດ ລາວ - ໄທ ນັບ ມື້ ດີຂຶ້ນ .

<u>ການປັບປຸງການຈັດຕັ້ງກົງຈັກ ຂອງສະຫະພັນ, ການຂະຫຍາຍສະມາຊິກໃໝ່ ແລະ ກໍ່ສ້າງຖັນແຖວພະນັກງານແມ່ຍິງ</u>:

ໃນ 5 ປີ ທີ່ຜ່ານມາ ຂະບວນການ 3 ດີ 2 ໜ້າທີ່ ຕິດແໜ້ນ ກັບ ບັນດາ ຈຸດໝາຍກໍ່ສ້າງຮາກຖານ ການເມືອງເສດຖະກິດ ສັງຄົມຂອງ ພັກ ແລະ ລັດ, ມັນໄດ້ເປັນການປັບປຸງການຈັດຕັ້ງສະຫະພັນແມ່ຍິງ ນັບແຕ່ຂັ້ນ ຮາກຖານຂຶ້ນຮອດຂັ້ນສູນກາງ. ພວກເຮົາໄດ້ຮັບເອົາຜູ້ທາວໜັນດີເດັ່ນຈາກ ຂະບວນການຕ່າງໆ ເຂົ້າເປັນສະມາຊິກສະຫະພັນ ມີ 105.885 ຄົນ , ປະຈຸບັນສະມາຊິກທັງໝົດມີ 496.032 ຄົນ ກວມ 27,09% ຂອງ ແມ່ຍິງບັນດາເຜົ່າ, ມີຈຳນວນ 15.914 ໜ່ວຍ, ພະນັກງານ ຂັ້ນໜ່ວຍມີ 18.826 ຄົນ, ສະເພາະກຳແພງນະຄອນວຽງຈັນ ໄດ້ລົບລ້າງ ບ້ານຂາວໄດ້ 100% .

ຂັ້ນເມືອງໄດ້ດຳເນີນກອງປະຊຸມໃຫຍ່ສຳເລັດແລ້ວ 61 ເມືອງ ໃນ ຈຳນວນ 114 ເມືອງ, ພະນັກງານຂັ້ນເມືອງມີ 761 ຄົນ, ຂັ້ນແຂວງ ໄດ້ດຳເນີນກອງປະຊຸມໃຫຍ່ແລ້ວສ່ວນໃຫຍ່, ພະນັກງານຂັ້ນແຂວງມີ 203 ຄົນ. ການຈັດຕັ້ງສະຫະພັນແມ່ຍິງຂັ້ນແຂວງ ແລະ ອົງການທຽບເທົ່າ ໄດ້ ເປີດກອງປະຊຸມໃຫຍ່ແລ້ວ 38 ອົງການ ..

ການປັບປຸງການຈັດຕັ້ງ ແລະ ກົງຈັກສະຫະພັນແມ່ຍິງ ໄດ້ປະຕິບັດ ຕາມທິດທາງຂອງພັກ - ລັດ, ໃຫ້ກະທັດລັດເບົາບາງ ແລະ ມີຄຸນນະພາບ,

ພະນັກງານທີ່ບັນຈຸ ສັບຊ້ອນເຂົ້າໃນຄະນະສະຫະພັນແຕ່ລະຂັ້ນ ມີລັກສະນະໜຸ່ມແໜ້ນ, ມີຄວາມສາມາດ ແລະ ມີຄຸນສົມບັດ, ຈຳນວນໜຶ່ງໄດ້ ຜ່ານການບຳລຸງ ທິດສະດີການເມືອງ ແລະ ມີບົດຮຽນ ໃນການນຳພາຂະບວນການແມ່ຍິງມາແລວ.

ພະນັກງານ ແລະ ສະມາຊິກສະຫະພັນແມ່ຍິງໄດ້ຮັບການຍ້ອງຍໍສັນລະເສີນຈາກພັກ ແລະ ລັດຖະບານ ແລະ ຈາກສະຫະພັນແມ່ຍິງ ໃນຂະບວນການ 3 ດີ 2 ໜ້າທີ່ ມີ 3.791 ສະຫາຍ, ກົມກອງ ແລະ ໜ່ວຍດີເດັ່ນທີ່ໄດ້ຮັບການຍ້ອງຍໍມີ 273 ກົມກອງ. ນອກຈາກນີ້ ແມ່ຍິງພວກເຮົາໄດ້ຮັບກຽດເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວມີ 9,19% ເຂົ້າເປັນສະມາຊິກຊາວໜຸ່ມ 40% ແລະ ເປັນສະມາຊິກສະຫະພັນກຳມະບານລາວມີ 19,44% .

ພວກເຮົາໄດ້ປະຕິບັດພາລະບົດບາດ ອົງການຜູ້ເປັນແມ່ ປະກອບສ່ວນເຂົ້າໃນວຽກງານສັງຄົມ ແລະ ຄອບຄົວ ເປັນຢ່າງດີ .

ໃນໂອກາດນີ້ ກອງປະຊຸມໃຫຍ່ຂອງພວກເຮົາຂໍ ສະແດງຄວາມຮູ້ ບຸນຄຸນອັນເລິກເຊິ່ງຕໍ່ ຄວາມເອົາໃຈໃສ່ອັນອົບອຸ່ນ ແລະ ຄວາມຫ່ວງໄຍ ອັນຈົດຈໍ່ຂອງພັກ ອັນມີສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ເປັນ ຜູ້ນຳໜ້າ, ພວກເຮົາຈະພ້ອມກັນບຸກບືນກ້າວໄປ ຕາມເສັ້ນທາງເດີນຂອງພັກ ເພື່ອພັດທະນາ ປະເທດຊາດ ແລະ ພັດທະນາແມ່ຍິງເອງ.

ຂໍສະແດງຄວາມຂອບອົກຂອບໃຈຢ່າງລົ້ນເຫຼືອ ຕໍ່ອຳນາດການປົກຄອງທຸກຂັ້ນ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ບັນດາການຈັດຕັ້ງວິສາຫະກິດ, ບັນດາຫົວໜ່ວຍ ຮາກຖານການຜະລິດ, ບັນດາການຈັດຕັ້ງວິທະຍາສາດ-ເຕັກນິກ ແລະ ເພດຊາຍທົ່ວໄປ ໄດ້ອຳນວຍຄວາມສະດວກໃຫ້ແກ່ແມ່ຍິງໄດ້ສ້າງຜົນງານອັນໃຫຍ່ຫຼວງ ແກ່ພາລະກິດຂອງຊາດຢ່າງສຸດອົກ ສຸດໃຈ !

ພິເສດ: ກອງປະຊຸມໃຫຍ່ຂໍສະແດງຄວາມຊົມເຊີຍ ຜົນງານອັນ ດີເດັ່ນຂອງສະຫາຍ ນາງ ຄຳແພງ ບຸບຜາ ທີ່ເປັນຜູ້ນຳອົງການຈັດຕັ້ງແມ່ຍິງ ນັບແຕ່ສະໄໝການປະຕິວັດຊາດ ປະຊາທິປະໄຕ ເຖິງປະຈຸບັນ ສະຫາຍໄດ້ ອຸທິດຄວາມຮູ້ ຄວາມສາມາດເຫື່ອແຮງ ສະຕິປັນຍາ ປະກອບສ່ວນເຂົ້າ ໃນ ການນຳພາ ຂະບວນການແມ່ຍິງໄດ້ເຕີບໃຫຍ່ຂະຫຍາຍຕົວເປັນຂັ້ນໆ ມາ , ເອື້ອຍນ້ອງແມ່ຍິງລາວ ບັນດາເຜົ່າຂໍຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນອັນ ເລິກເຊິ່ງຕໍ່ສະຫາຍ ແລະ ຂໍຮ່ຳຮຽນເອົາແບບຢ່າງຂອງສະຫາຍເຂົ້າ ໃນ ການເຄື່ອນໄຫວວຽກງານຂອງຕົນ. ໃນຂັ້ນຕໍ່ໄປ ສະຫະພັນແມ່ຍິງລາວຫວັງ ວ່າຈະໄດ້ຮັບການຊ່ວຍເຫຼືອຊີ້ນຳຂະບວນການແມ່ຍິງຈາກສະຫາຍເປັນຢ່າງດີ.

ກອງປະຊຸມຂໍສະແດງຄວາມຊົມເຊີຍ ແລະ ຍ້ອງຍໍສັນລະເສີນ ເອື້ອຍນ້ອງຊາວກະສິກອນ ກຳມະກອນ, ພະນັກງານ ແລະ ລັດຖະກອນຍິງ ທີ່ສູ້ກັດລັດ ພ້ອມທັງເອື້ອຍນ້ອງແມ່ຍິງລາວ ທີ່ປະຕິບັດໜ້າທີ່ຢູ່ ນອກປະເທດໄດ້ ພ້ອມກັນຕັ້ງໜ້າປະຕິບັດໜ້າທີ່ຂອງຕົນ ປະກອບສ່ວນສະຕິປັນຍາ ວັດຖຸເຫື່ອ ແຮງ ໃຫ້ແກ່ພາລະກິດປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ ຢ່າງສຸດອົກ ສຸດໃຈ !

ພ້ອມກັນນີ້ ພວກເຮົາຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈ ຂອງແມ່ຍິງລາວພວກເຮົາຕໍ່ ການ ສະໜັບສະໜູນ ຊ່ວຍເຫຼືອອັນປະເສີດ ຂອງປະຊາຊົນ ແລະ ແມ່ຍິງທີ່ຮັກຫອມສັນຕິພາບ ເອກະລາດແຫ່ງຊາດ ປະຊາທິປະໄຕ ແລະ ສັງຄົມນິຍົມ, ບັນດາອົງການຈັດຕັ້ງ ສາກົນທີ່ມີຕໍ່ ພາລະກິດອັນເປັນທຳຂອງປະຊາຊົນລາວ. ພິເສດພວກເຮົາ ຂໍສະແດງຄວາມ ຮູ້ບຸນຄຸນຕໍ່ ແມ່ຍິງຫວຽດນາມ, ແມ່ຍິງກຳປູເຈຍ, ແມ່ຍິງສະຫະພາບໂຊວຽດ ແມ່ຍິງປະເທດສັງຄົມນິຍົມອື່ນໆ ທີ່ໄດ້ໃຫ້ການອຸ່ມຊູ ຊ່ວຍເຫຼືອຢ່າງ ຫຼວງຫຼາຍ ເປັນປັດໄຈທີ່ໜຶ່ງ ທີ່ຊ່ວຍໜູນໃຫ້ຂະບວນການແມ່ຍິງປະກອບສ່ວນຢ່າງ ສົມກຽດເຂົ້າໃນພາລະກິດລວມຂອງຊາດ ແລະ ພາລະກິດປົດປ່ອຍ ແມ່ຍິງ.

## II. ສັງເກດຕີລາຄາລວມຈຸດດີ ແລະ ຈຸດອ່ອນທີ່ຍັງຄົງຄ້າງ ແລະ ສາຍເຫດພາໃຫ້ມີຈຸດດີ ແລະ ຈຸດອ່ອນ:

ກ./ ດ້ານດີ :

ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ I ເປັນຕົ້ນມາ, ພວກເຮົາ ສາມາດຕີລາຄາໄດ້ວ່າ ຂະບວນການແມ່ຍິງໄດ້ຮັບໃຊ້ ສອງ ໜ້າທີ່ຍຸດທະສາດ ປົກປັກຮັກສາ ປະເທດຊາດ ປ້ອງກັນຄວາມສະຫງົບ ກໍ່ສ້າງ ເສດຖະກິດ ແລະ ຂະຫຍາຍວັດທະນະທຳ ແລະ ການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນເຮົາ ນັບມື້ນັບດີຂຶ້ນ ຈາກນັ້ນກໍ່ເປັນການປະກອບສ່ວນເຮັດໃຫ້ ສະພາບການລວມໃນທົ່ວປະເທດ ມີຄວາມສະຫງົບ .

+ ຜ່ານຂະບວນການປະຕິບັດໜ້າທີ່ ການເມືອງຂອງກົມກອງ ທ້ອງຖິ່ນ ມັນໄດ້ເປັນການປັບປຸງ ການຈັດຕັ້ງສະຫະພັນແມ່ຍິງເຕີບໃຫຍ່ຂະຫຍາຍຕົວທາງດ້ານແນວຄິດການເມືອງ ແລະ ການຈັດຕັ້ງມີທັງດ້ານຈຳນວນ ແລະ ຄຸນນະພາບ, ກຸ່ມແຖວພະນັກງານ ສະມາຊິກ ອົງການແມ່ຍິງແຕ່ລະຂັ້ນໄດ້ກາຍເປັນຫຼັກແຫຼ່ງ ໃນການນຳພາ ຂະບວນການແມ່ຍິງກ້າວຂຶ້ນ ຕາມ ແນວທາງນະໂຍບາຍຂອງພັກ ແລະ ລັດ .

+ ຄວາມສາມັກຄີແມ່ຍິງລາວ ບັນດາເຜົ່າໄດ້ຮັບການປັບປຸງໃຫ້ດີຂຶ້ນ ກ້າວໜຶ່ງ ສະແດງອອກໃນຄວາມເປັນເອກະພາບຈັດຕັ້ງປະຕິບັດ ບັນດາມະຕິ ຄຳສັ່ງຂອງຂັ້ນເທິງກໍ່ຄື ຂອງສະຫະພັນແມ່ຍິງ ມີຜົນງານຫຼາຍດ້ານ ປະກອບສ່ວນເຂົ້າໃນພາລະກິດລວມຂອງຊາດ .

+ ລະບຽບແບບແຜນວິທີເຮັດວຽກຂອງ ຄະນະສະຫະພັນແມ່ຍິງແຕ່ລະຂັ້ນໄດ້ເລີ່ມມີການຕິດແໜ້ນ ກັບ ຂະບວນການເຮັດໃຫ້ເນື້ອໃນຄຳຂວັນ 3 ດີ 2 ໜ້າທີ່ ກາຍເປັນວຽກລະອຽດຕົວຈິງ ໃນຂະບວນການປະຕິວັດ ຂອງມະຫາຊົນ.

ສາຍເຫດທີ່ພາໃຫ້ມີຈຸດດີ ແລະ ຜົນງານດີເດັ່ນແມ່ນ ຍ້ອນປັດໃຈ ພື້ນຖານດັ່ງລຸ່ມນີ້ :

1. ແມ່ຍິງລາວບັນດາເຜົ່າ ມີມູນເຊື້ອຮັກຊາດ ຮັກສັງຄົມນິຍົມ, ມີຄວາມຈົງຮັກພັກດີຕໍ່ພັກ - ລັດ ຕໍ່ພາລະກິດປະຕິວັດ, ມູນເຊື້ອອັນສະຫງ່າງົດງາມ? ອົງອາດ ໃນສະໄຫມສົງຄາມໄດ້ເສີມຂະຫຍາຍເຂົ້າໃນການຮັບໃຊ້ 2 ຫນ້າທີ່ ຍຸດທະສາດ ຊຶ່ງສະແດງອອກໃນຄຳຂວັນ 3 ດີ 2 ຫນ້າທີ່, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມໃຫ້ມີຄວາມຫນັກແຫນ້ນ ເຂັ້ມແຂງ .

ມູນເຊື້ອດຸຫມັ່ນຂະຫຍັນພຽນ, ນ້ຳໃຈອອກແຮງງານ, ນ້ຳໃຈ ຮ່ຳຮຽນ ເພື່ອຄວາມກ້າວຫນ້າ ນ້ຳໃຈຮັກຜົວ ແພງລູກຢ່າງບໍລິສຸດ ຜຸດຜ່ອງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການກໍ່ສ້າງຄອບຄົວວັດທະນະທຳໃຫມ່ ສ້າງແບບແຜນດຳລົງຊີວິດໃຫມ່ ແລະ ສ້າງຄົນໃຫມ່ສັງຄົມນິຍົມ .

2. ບັນດາຜົນງານທີ່ພວກເຮົາຍາດມາໄດ້ ຂ້າງເທິງນັ້ນ ສຳຄັນແມ່ນຍ້ອນມີການນຳພາຂອງ ສະຫະພັນແມ່ຍິງທຸກຂັ້ນ, ສະມາຊິກສະຫະພັນໄດ້ຕັ້ງຫນ້າປຸກລະດົມແມ່ຍິງ ບັນດາຊັ້ນຄົນ ເຂົ້າຮ່ວມການປະຕິບັດ ຫນ້າທີ່ການເມືອງຂອງ ກົມກອງທ້ອງຖິ່ນ ທັງສົມທົບແກ້ໄຂບັນຫາແມ່ຍິງ ແລະເດັກນ້ອຍ ຕາມນະໂຍບາຍຂອງພັກ ວາງອອກໄດ້ມີຜົນງານຕື່ມອີກບາດກ້າວຫນຶ່ງ, ນັ້ນແມ່ນຍ້ອນການສູ້ຊົນຂອງພະນັກງານ ສະຫະພັນແມ່ຍິງ ແລະ ພະນັກງານແມ່ຍິງທີ່ນອນໃນຂະແຫນງການຕ່າງໆ ໄດ້ເປັນຫລັກແຫລ່ງໃນ ການນຳພາຂະບວນການແມ່ຍິງກ້າວຂຶ້ນ .

3. ຍ້ອນແສງສະຫວ່າງມະຕິກອງປະຊຸມໃຫຍ່ຄັ້ງທີ III , ທີ IV ຂອງພັກປະຊາຊົນປະຕິວັດລາວ ຄຳໂອວາດຂອງຜູ້ນຳຕໍ່ກອງ ປະຊຸມໃຫຍ່ຄັ້ງທີ I ຂອງແມ່ຍິງລາວທົ່ວປະເທດ ແລະ ບັນດາຂໍ້ກຳນົດກົດຫມາຍ ຂອງລັດ ໄດ້ເປັນບ່ອນອີງໃຫ້ແກ່ແມ່ຍິງພວກເຮົາ ເຄື່ອນໄຫວ ສູ້

ຊຶມ ກ້າວຂຶ້ນ .

໒./ <u>ຈຸດອ່ອນທີ່ຍັງຄົງຄ້າງ</u> :

- ຂະບວນການຂອງແມ່ຍິງ ເຖິງວ່າໄດ້ມີຄວາມກ້າວໜ້າກໍ່ຕາມແມ່ນ ມີແຕ່ຢູ່ທາງເທິງ, ສ່ວນຂັ້ນຮາກຖານຊົນນະບົດ ຍັງບໍ່ສະໝ່ຳສະເໝີ , ເປັນບາງຄັ້ງຄາວ ບໍ່ຮອບດ້ານ ແລະ ບໍ່ເນື່ອງນິດລຽນຕິດ .

- ດ້ານການຈັດຕັ້ງຢູ່ທາງເທິງໄດ້ດີ ແຕ່ການຈັດຕັ້ງຂັ້ນຮາກຖານ ຍັງຕ້ອງໄດ້ສຸມໃສ່ແກ້ໄຂ ເພາະວ່າການຈັດຕັ້ງບໍ່ຕິດແທດກັບ ຂະບວນການ ແລະ ການເຄື່ອນໄຫວບໍ່ທັນຕິດແທດກັບ ໜ້າທີ່ການເມືອງ.ເວົ້າສະເພາະຢູ່ ເຂດພູດອຍ ແລະ ສອກຫຼີກຫ່າງໄກ ຈະຕ້ອງໄດ້ເອົາໃຈໃສ່ປັບປຸງໃໝ່ການ ຈັດຕັ້ງ ແລະ ມີການເຄື່ອນໄຫວຕາມພາລະບົດບາດຂອງອົງການແມ່ຍິງ .

- ການເຕົ້າໂຮມຄວາມສາມັກຄີແມ່ຍິງ ບັນດາເຜົ່າ ບັນດາຊັ້ນຄົນ ຍັງບໍ່ກວ້າງຂວາງ ມັນຈຳກັດການເຕົ້າໂຮມກຳລັງແຮງສັງລວມ ຂອງສັງຄົມ ລາວ, ຈາກນັ້ນຂະບວນການ ຂອງແມ່ຍິງຈຶ່ງບໍ່ແຂງແຮງ.

- ແບບແຜນວິທີເຮັດວຽກໜັກ ໄປແຕ່ດ້ານຄຳສັ່ງ, ຫ່າງເຫີນຈາກ ຕົວຈິງ, ຈາກນັ້ນມັນເປັນການຈຳກັດຂັດຂວາງ ຂະບວນການເຄື່ອນໄຫວ ຂອງແມ່ຍິງ .

* <u>ສາຍເຫດອ່ອນໃນຕົວ</u> :

+ ມະຕິກອງປະຊຸມໃຫຍ່ຄັ້ງທີ I ຂອງແມ່ຍິງລາວ ທົ່ວປະເທດ ວາງອອກສຸດທີ່ຖືກຕ້ອງ, ແຕ່ການຈັດຕັ້ງປະຕິບັດ ມີບາງດ້ານຍັງ ບໍ່ທັນດີ, ເປັນຕົ້ນແມ່ນ ຂະບວນການກໍ່ສ້າງ 3 ດີ 2 ໜ້າທີ່ ບໍ່ມີການສະຫຼຸບຖອດ ຖອນບົດຮຽນໃຫ້ບ່ອນອື່ນ ປະຕິບັດ, ແບບແຜນວິທີເຮັດວຽກ ຍັງຄອງເດີມ ເຮັດວຽກແບບລວມໆ ບໍ່ມີຈຸດສຸມ ສະເພາະໜ້າ ຍາວນານ, ດ້ານອ່ອນອັນ ນຶ່ ຈຸດໜັກແມ່ນ ຂັ້ນສູນກາງ.

+ ສຳລັບພະນັກງານຂັ້ນແຂວງ ແລະ ເມືອງຈຳນວນໜຶ່ງ ຂາດພະ

ນັກງານຕົວຈັກຫຼັກແຫຼ່ງ ການສັບຊ້ອນພະນັກງານຕາມໜ້າທີ່ການເມືອງ ຂອງກົມກອງທ້ອງຖິ່ນ ໄດ້ຍົກຍ້າຍ ພັດປ່ຽນ ພະນັກງານແມ່ຍິງ ໄປ ເຮັດວຽກໃໝ່ເລື້ອຍໆ ເຮັດໃຫ້ພະນັກງານແມ່ຍິງ ຂາດປະສົບການ ໃນ ການນຳພາ ຂະບວນການແມ່ຍິງ .

+ ພະນັກງານສະຫະພັນແມ່ຍິງຂັ້ນຮາກຖານ ຊົນນະບົດ ລະດັບ ກຳແໜ້ນແນວທາງນະໂຍບາຍ ຍັງອ່ອນ, ລະດັບການນຳພາການຈັດຕັ້ງ ປະຕິບັດໜ້າທີ່ການພາລະບົດບາດຂອງແມ່ຍິງ ຍັງອ່ອນຫຼາຍ .

* ສ<u>າຍເຫດອ່ອນນອກຕົວ</u>:

ເນື່ອງຈາກສະພາບເສດຖະກິດຂອງປະເທດເຮົາ ຍັງຕົກຢູ່ໃນ ທຳມະຊາດດ້ອຍພັດທະນາ ຄວາມຂັດແຍ່ງລະຫວ່າງກຳລັງການຜະລິດ ແລະຄວາມຮຽກຮ້ອງຕ້ອງການສູງ ສະນັ້ນ ຈຶ່ງບໍ່ຕອບສະໜອງຄວາມມຸ່ງມາດ ປາດຖະໜາຂອງປະຊາຊົນ ແລະ ແມ່ຍິງໄດ້ ດ້ານໜຶ່ງ ຄະນະພັກ ອຳນາດການປົກຄອງ ບາງທ້ອງຖິ່ນ ຍັງບໍ່ທັນກຳແໜ້ນແນວທາງນະໂຍບາຍກໍ່ສ້າງ ເສດຖະກິດສັງຄົມ ແລະ ກົນໄກຄຸ້ມຄອງເສດຖະກິດ ທີ່ພັກວາງອອກ ດັ່ງນັ້ນ ການຈັດຕັ້ງປະຕິບັດບໍ່ທັນດີ, ເຮັດໃຫ້ສະພາບເສດຖະກິດຝືດເຄືອງ ການເປັນຢູ່ ຂອງປະຊາຊົນ ແລະ ແມ່ຍິງຕົກຢູ່ໃນສະພາບ ທຸກຍາກຂາດເຂີນ .

+ ມະຕິຕ່າງໆ ຂອງສູນກາງພັກ ກໍ່ໄດ້ໃຫ້ຄວາມສຳຄັນ ກ່ຽວກັບ ແມ່ຍິງ ແຕ່ການປະຕິບັດນະໂຍບາຍຕ່າງໆ ທີ່ພັກ ໄດ້ກຳນົດຕໍ່ແມ່ຍິງ - ເດັກນ້ອຍລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ມີລະດັບແຕກຕ່າງກັນ, ມີບາງຂະແໜງການ ແລະ ທ້ອງຖິ່ນຍັງມີປາກົດການຈຳແນກຖືເບົາ ແມ່ຍິງ, ບໍ່ທັນເອົາໃຈໃສ່ສ້າງທຸກເງື່ອນໄຂໃຫ້ແມ່ຍິງໄດ້ເຄື່ອນໄຫວ ຕາມຄວາມ ສາມາດຂອງເຂົາເຈົ້າ, ອີກດ້ານໜຶ່ງ ການຍົກຍ້າຍພະນັກງານແມ່ຍິງ ໄປເຮັດວຽກງານອື່ນກໍ່ບໍ່ມີ ການປະສານສົມທົບກັບ ອົງການແມ່ຍິງ .

<u>III</u>.- <u>ບົດຮຽນທີ່ຖອດຖອນໄດ້ຈາກພົດຕິກຳຕົວຈິງ ໃນຂະບວນການ</u>

ເຄື່ອນໄຫວຂອງແມ່ຍິງພວກເຣົາ :

ບົດຣຽນທີ່ຫນຶ່ງ : ອິງໃສ່ສະພາບການຂອງສັງຄົມລາວ ໃນປະຈຸບັນ ບັນຫາໃຫຍ່ທີ່ສຸດແມ່ນ ມັນຣຽກຣ້ອງໃຫ້ມີການປັບປຸງຄວາມສາມັກຄີ ແມ່ຍິງບັນດາເຜົ່າ ແລະ ບັນດາຊັ້ນຄົນໃນລາວ ໃຫ້ແຫນ້ນແຟ້ນ ພ້ອມກັນນັ້ນ ຕ້ອງແກ້ໄຂແນວຄິດຄັບແຄບ ຂອງແມ່ຍິງ ເພື່ອເຕົ້າໂຮມກຳລັງແຮງ ຂອງແມ່ຍິງເຂົ້າໃນການຣັບໃຊ້ຫນ້າທີ່ການເມືອງໃນໄລຍະໃຫມ່ ແລະ ການປົດປ່ອຍແມ່ຍິງ .

ບົດຣຽນທີ່ສອງ : ການບຳລຸງກໍ່ສ້າງ ແລະ ເສີມຂະຫຍາຍບົດບາດພະນັກງານແມ່ຍິງ ເພື່ອເປັນຫຼັກແຫຼ່ງ ແກ່ນສານ ໃຫ້ແກ່ຂະບວນການແມ່ຍິງ, ຂະບວນການແມ່ຍິງ ຂະຫຍາຍຕົວເທົ່າໃດ ຖັນແຖວພະນັກງານແມ່ຍິງກໍ່ຍິ່ງຂະຫຍາຍຕົວເທົ່ານັ້ນ, ດັ່ງນັ້ນການສ້າງພະນັກງານແມ່ຍິງ ມີຄວາມຫມາຍສຳຄັນທີ່ສຸດຕໍ່ ຂະບວນການແມ່ຍິງ, ພ້ອມກັນນັ້ນ ຕ້ອງໄດ້ສ້າງແບບແຜນວິທີການເຄື່ອນໄຫວຂອງ ພະນັກງານແມ່ຍິງ ຕິດແຫນ້ນ ກັບ ຣາກຖານ ເພື່ອຊຸກຍູ້ຂະບວນການ ແລະ ການແກ້ໄຂບັນຫາຂອງແມ່ຍິງ ຕ້ອງສ້າງເງື່ອນໄຂຕົວຈິງໃຫ້ແກ່ ການປະຕິບັດສຳລັບແມ່ຍິງພວກເຣົາ ນັບທັງການ ເຄື່ອນໄຫວຣັບໃຊ້ຫນ້າທີ່ການເມືອງ, ວຽກບ້ານການເຣືອນ, ການພົວພັນ ລະຫວ່າງຜົວ ເມຍ, ການລ້ຽງ ແລະ ການສຶກສາອົບຣົມລູກຫຼານ ດ້ານສຸຂະພາບ ແລະ ການເປັນຢູ່ຂອງ ແມ່ຍິງພວກເຣົາ ອີກດ້ວຍ, ຈຸດຫມາຍຂອງການລົງຣາກຖານຕ້ອງເຣັດໃຫ້ ຣາກຖານມີການຫັນປ່ຽນໃນຫຼາຍດ້ານ .

ບົດຣຽນທີ່ສາມ : ຄະນະພັກ ແລະ ອຳນາດການປົກຄອງແຕ່ລະຂັ້ນຫາກຣູ້ຈັດຕັ້ງນຳພາ ແລະ ໃຫ້ການສຶກສາອົບຣົມກໍ່ສ້າງ ແລະ ນຳໃຊ້ແມ່ຍິງແນ່ນອນແມ່ຍິງຈະມີຄຸນປະໂຫຍດອັນໃຫຍ່ຫຼວງ ຕໍ່ສັງຄົມ, ພ້ອມກັນນັ້ນຕ້ອງມີການປະສານສົມທົບ ລະຫວ່າງສະຫະພັນແມ່ຍິງ ກັບ ບັນດາອົງການຈັດຕັ້ງມະຫາຊົນ ແລະ ຂະແຫນງການຕ່າງໆ ແມ່ນປັດໄຈຫນຶ່ງຕັດສິນການສ້າງ

ຂະບວນການແມ່ຍິງ ເພື່ອສຳເລັດພາລະກິດລວມ ແລະ ພາລະກິດປົດ ປ່ອຍແມ່ຍິງ.

<u>ບົດຮຽນ ທີ່ສີ່</u> : ຄວາມສາມັກຄີກັບແມ່ຍິງສາກົນ ເພື່ອຕ້ານໄພພິບັດແຫ່ງສົງຄາມນິວເຄຼຍ ເພື່ອຄວາມປອດໄພຂອງໂລກ, ເພື່ອສັນຕິພາບ ຄວາມສະເໝີພາບ ແລະ ການພັດທະນາ, ຮູ້ຈັກຍາດແຍ່ງເອົາການຊ່ວຍເຫຼືອ ຈາກບັນດາປະເທດ ເພື່ອນມິດໃນໂລກ ປະກອບສ່ວນເຂົ້າໃນ ການປົກປັກຮັກສາປະເທດຊາດ ກໍ່ສ້າງສັງຄົມນິຍົມ ຢູ່ປະເທດເຮົາ ໃຫ້ນັບມື້ໜັກແໜ້ນ ເຂັ້ມແຂງ.

ຮຽນ ບັນດາທ່ານ ແລະ ເອື້ອຍນ້ອງຜູ້ແທນ ກອງປະຊຸມ
ໃຫຍ່ ທີ່ຮັກແພງ !

ຜ່ານໄລຍະຕໍ່ສູ້ ປົກປັກຮັກສາປະເທດຊາດ ກໍ່ສ້າງລະບອບໃໝ່ ເປັນເວລາ 10 ກວ່າປີ ເອື້ອຍນ້ອງແມ່ຍິງລາວ ບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ໄດ້ສາມັກຄີເປັນກຸ່ມ ກ້ອນ ເດີນຕາມແນວທາງຂອງພັກ ພ້ອມກັນສູ້ຊົນຜ່ານຜ່າ ອຸບປະສັກນາໆ ປະການ ປະກອບສ່ວນເຂົ້າໃນ ພາລະກິດລວມຂອງຊາດ ໄດ້ມີຜົນງານອັນໃຫຍ່ຫຼວງຫຼາຍປະການ ແຕ່ໃນຕໍ່ໜ້າ ພວກເຮົາຍັງມີພາລະໜ້າທີ່ອັນໜັກໜ່ວງ ໃນພາລະກິດ ພັດທະນາເສດຖະກິດສັງຄົມ ຂອງປະເທດເຮົາ ເພື່ອຄວາມຢູ່ດີ ກິນດີ ຂອງປະຊາຊົນ ກໍ່ຄື ແມ່ຍິງລາວ ບັນດາເຜົ່າ ແລະ ລູກຫຼານຂອງພວກເຮົາ'.

# ພາກທີ III

## ທິດທາງການເຄື່ອນໄຫວ ຂອງຂະບວນການແມ່ຍິງແລະໜ້າທີ່ຂອງ ສະຫະພັນແມ່ຍິງແຕ່ນີ້ເຖິງກອງປະຊຸມໃຫຍ່ຄັ້ງທີ່ III

-----++++++-----

ຮຽນ ບັນດາທ່ານແຂກຜູ້ມີກຽດ, ເອື້ອຍນ້ອງທີ່ນັບຖື, ຮັກແພງ ທັງຫຼາຍ !

ເພື່ອວາງທິດທາງການເຄື່ອນໄຫວຂອງຂະບວນການແມ່ຍິງ ແລະໜ້າທີ່ ຂອງສະຫະພັນແມ່ຍິງໃຫ້ຖືກຕ້ອງສອດຄ່ອງນັ້ນ ກ່ອນອື່ນໝົດ ຕ້ອງອີງໃສ່ມະຕິກອງປະຊຸມໃຫຍ່ຄັ້ງທີ III ຂອງພັກປະຊາຊົນປະຕິວັດລາວເປັນຕົ້ນແມ່ນ ມະຕິ 5 - 6 ( ສະໄໝທີ III ) ຂອງສູນກາງພັກ ໃນການໄຈ້ແຍກຕີລາຄາ ສະພາວະຄວາມເປັນຈິງ ດ້ານເສດຖະກິດ - ສັງຄົມ ຂອງປະເທດເຮົາ ແລະ ສະພາບການສາກົນ ໃນປະຈຸບັນ .

### I.- ສະພາວະການລວມຂອງໂລກ ແລະ ຂອງປະເທດເຮົາ ໃນປະຈຸບັນ :

ໂລກຂອງພວກເຮົາໃນປະຈຸບັນ ພວມມີການຫັນປ່ຽນ ຢ່າງເລິກເຊິ່ງດ້ານເສດຖະກິດ-ວິທະຍາສາດ-ເຕັກນິກ ນຳໄປເຖິງການຫັນປ່ຽນດ້ານການເມືອງຢ່າງກວ້າງຂວາງ. ທ່າອ່ຽງຢູ່ຮ່ວມກັນໂດຍສັນຕິ, ຮ່ວມກັນ ຕໍ່ສູ້ຕ້ານໄພພິບັດຂອງສົງຄາມ ເພື່ອການດຳລົງຕົວ ແລະ ການຂະຫຍາຍຕົວຂອງສັງຄົມມະນຸດ ໄດ້ກາຍເປັນກົດເກນພາວະວິໄສ, ເປັນຈຸດໝາຍ ຍຸດທະ

ສາດຂອງການປະຕິວັດໂລກ, ໃນຕໍ່ໜ້ານີ້ ການຕໍ່ສູ້ຊຸນຊຸ່ມ ອັນຂ້ຽວຂາດ ໃນທ່າມກາງການຢູ່ຮ່ວມກັນ ໂດຍສັນຕິນັ້ນ ກໍ່ຍັງແມ່ນ ທ່າອ່ຽງອັນຕົ້ນຕໍຂອງໂລກ. ໃນໄລຍະມໍ່ໆ ມານີ້ ໄດ້ມີຫຼາຍເຫດການທີ່ສຳຄັນ ທີ່ເປັນການ ປັບປຸງສັນຕິພາບ ແລະ ຄວາມເຂົ້າອົກ ເຂົ້າໃຈຊຶ່ງກັນ ແລະ ກັນ ລະຫວ່າງປະຊາຊາດໃນໂລກ ໄດ້ປາກົດຂຶ້ນ ແລະ ໄດ້ສ້າງຄວາມມຸ່ງຫວັງອັນ ໃຫຍ່ຫຼວງໃຫ້ແກ່ການແກ້ໄຂສາກົນ ແລະ ບັນຫາໃນຂົງເຂດດ້ວຍວິທີການ ເມືອງໃນອາຊີອາຄະເນກໍ່ໄດ້ມີປາກົດການໃນທ່າອ່ຽງ ໃນທາງບວກ ແລະ ສ້າງສັນ ຊຶ່ງໄດ້ສະແດງອອກໃນການພົບປະ ບໍ່ເປັນທາງການທີ່ ຈາກາຕາເມືອງຫຼວງຂອງ ອິນໂດເນເຊຍ ທີ່ຫາກໍ່ອັດລົງວັນທີ 26 ກໍລະກົດ ແລ້ວນີ້. ຜູ້ເຂົ້າຮ່ວມທຸກຄົນໄດ້ເຫັນດີຕໍ່ ຄວາມຕ້ອງການແກ້ໄຂບັນຫາ ກຳປູເຈຍ ດ້ວຍວິທີການເມືອງ ແລະ ການສ້າງອາຊີອາຄະເນ ໃຫ້ເປັນເຂດ ສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມື .

ໃນ 12 ປີຜ່ານມາ ພາຍໃຕ້ການນຳພາອັນປີຊາ ສາມາດຂອງພັກ, ປະເທດຊາດຂອງພວກເຮົາ ໄດ້ຮັບການພັດທະນາ ເຕີບໃຫຍ່ໃນຫຼາຍດ້ານ: ໃນການປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດ ສັງຄົມນິຍົມ .

ແຕ່ເຖິງຢ່າງໃດກໍ່ຕາມ ປະເທດພວກເຮົາກໍ່ຍັງແມ່ນໜຶ່ງໃນ ບັນດາປະເທດທີ່ດ້ອຍພັດທະນາທີ່ສຸດ ໃນໂລກ. ພັກນຳພາປະເທດຊາດເຮົາກ້າວຂຶ້ນ ສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານທຶນນິຍົມ ແມ່ນເລີ່ມຈາກພື້ນຖານເສດຖະກິດ ການຜະລິດນ້ອຍ ເຕັມໄປດ້ວຍທຳມະຊາດ, ກຸ່ມຕົນເອງພໍໃຜ ພໍລາວ, ລະດັບການສຶກສາຂອງປະຊາຊົນກໍ່ຄື ຂອງແມ່ຍິງຍັງຕ່ຳ, ພື້ນຖານວັດຖຸ - ເຕັກນິກສັງຄົມນິຍົມຍັງອ່ອນນ້ອຍ, ຊັບພະຍາກອນທຳມະຊາດຮັ່ງມີ ແຕ່ບໍ່ທັນໄດ້ຂຸດຄົ້ນ ແລະ ນຳໃຊ້, ລະດັບການຂະຫຍາຍຕົວຂອງກຳລັງການຜະລິດຍັງຕ່ຳ, ການແບ່ງງານສັງຄົມບໍ່ທັນຂະຫຍາຍ, ລະດັບ ວິທະຍາສາດ-ເຕັກນິກ ແລະ ຖັນແຖວພະນັກງານຍັງນ້ອຍ, ເສັ້ນທາງ ຄົມນາ

ຄົນມີຄວາມຫຍຸ້ງຍາກ, ການຈັດຕັ້ງ ປົກປັກຮັກສາ ສຸຂະພາບຂອງປະ ຊາຊົນກໍຄື ຂອງແມ່ຍິງ ແລະ ເດັກນ້ອຍ ຍັງບໍ່ທັນໄດ້ດີ .

ເພື່ອແກ້ໄຂສະພາວະຄວາມເປັນຈິງ ທາງດ້ານເສດຖະກິດ - ສັງຄົມ ທີ່ກ່າວມານັ້ນ ກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ ແລະ ມະຕິຕ່າງໆ ຂອງສູນກາງ ກໍໄດ້ກຳນົດທິດທາງ ແລະ ໜ້າທີ່ຕົ້ນຕໍ ທາງດ້ານເສດຖະກິດ - ສັງຄົມໃນສະໄໝຂ້າມຜ່ານຂຶ້ນ ສູ່ສັງຄົມນິຍົມ ຂອງ ປະເທດເຮົາ ຢ່າງຖືກຕ້ອງ ສອດຄ່ອງ ກັບ ສະພາບພາຍໃນ ແລະ ສາກົນ.

ໃນປະຈຸບັນນີ້ ພວກເຮົາພວມບຸກບືນປະຕິບັດນະໂຍບາຍ ໂຄງປະກອບເສດຖະກິດໃໝ່ແມ່ນ ການຫັນປ່ຽນຈາກເສດຖະກິດທຳມະຊາດ ໄປສູ່ເສດ-ຖະກິດການຜະລິດສິນຄ້າຕາມທິດ ສັງຄົມນິຍົມ, ອອກແຮງດັດແປງ ກົນໄກຄຸ້ມຄອງເສດຖະກິດເກົ່າລວມສູນ ອາດຍາສິດເກື້ອກູນ ສ້າງກົນໄກຄຸ້ມຄອງໃໝ່ ທີ່ສອດຄ່ອງກັບ ກົດເກນພາວະວິໄສ ໃນສະພາບເງື່ອນໄຂຕົວຈິງຂອງປະເທດເຮົາ ແນໃສ່ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເປີດກວ້າງການຜະລິດ ແລະ ຈໍລະຈອນສິນຄ້າຢ່າງເສລີ ຖືກກົດໝາຍ. ພ້ອມກັນນັ້ນ ກໍເປີດກວ້າງການພົວພັນເສດຖະກິດ ກັບ ຕ່າງປະເທດ, ເສີມຂະຫຍາຍທຸກຄວາມອາດສາມາດບົ່ມຊ້ອນຢູ່ ພາຍໃນປະເທດ ແລະ ຍາດແຍ່ງເອົາການຮ່ວມມືຊ່ວຍເຫຼືອຂອງສາກົນ ເພື່ອສ້າງເສດຖະກິດ ຂອງປະເທດເຮົາ ໃຫ້ນັບມື້ ນັບຂະຫຍາຍຕົວ .

ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ເພື່ອສົ່ງເສີມຈຸດດີ , ແກ້ໄຂຈຸດອ່ອນ ແລະ ບົກພ່ອງ ໃນຊຸມປີທີ່ຜ່ານມາ ຮຽກຮ້ອງໃຫ້ແມ່ຍິງລາວ ທຸກຖ້ວນໜ້າ ຕ້ອງສູ້ຊົນຫັນປ່ຽນຈິນຕະນາການເປັນຕົ້ນແມ່ນ ຈິນຕະນາການດ້ານເສດຖະກິດຂອງພັກ, ອອກແຮງບຸກບືນສ້າງຂະບວນການໃຫ້ມີການເຄື່ອນໄຫວ ປະຕິວັດຮັບໃຊ້ໜ້າທີ່ການເມືອງຂອງພັກຢ່າງຕັ້ງໜ້າ, ປະກອບສ່ວນເຂົ້າໃນພາລະກິດ ປົກປັກ

ຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມໃຫ້ປາກົດຜົນເປັນຈິງ ເທື່ອລະກ້າວ; ເປັນການປະກອບສ່ວນໂດຍກົງ ໃນການປົກປັກຮັກສາ **ສິດຜົນປະ**ໂຫຍດອັນພື້ນຖານທີ່ສຸດ ຂອງແມ່ຍິງ ແລະ ເດັກນ້ອຍລາວພວກເຮົາ, ກ້າວຂັ້ນປົດປ່ອຍ ແມ່ຍິງຢ່າງແທ້ຈິງ .

ສະນັ້ນ ກອງປະຊຸມໃຫຍ່ຂອງພວກເຮົາຄັ້ງນີ້ ຈຶ່ງໄດ້ກຳນົດທິດ ທາງ ໜ້າທີ່ລວມ ແລະ ໜ້າທີ່ ລະອຽດດັ່ງຕໍ່ໄປນີ້ :

## II. ໜ້າທີ່ລວມ ແລະ ໜ້າທີ່ລະອຽດຂອງສະຫະພັນແມ່ຍິງ ແລະ ແມ່ຍິງລາວ ໃນຊຸມປີຕໍ່ໜ້າ :

### 1. ໜ້າທີ່ ລວມ:

ກອງປະຊຸມໃຫຍ່ຄັ້ງທີ III ຂອງພັກໄດ້ກຳນົດວ່າ: " ໄປພ້ອມກັບ ການຫັນປ່ຽນ ປະຕິວັດຈາກສັງຄົມເມືອງຂຶ້ນ ແລະ ສັກດີນາ ໄປສູ່ການກໍ່ສ້າງລະບອບສັງຄົມໃຫມ່ ແມ່ຍິງຂອງປະເທດເຮົາ ກໍ່ໄດ້ຮັບການປົດປ່ອຍອອກຈາກແອກແຫ່ງການກົດຂີ່ ຂູດຮີດ ແຕ່ວ່າຍັງມີຮ່ອງຮອຍເສດເຫຼືອຕ່າງໆຂອງສັງຄົມເກົ່າ, ຍ້ອນຮີດຄອງປະເພນີ ອັນຫຼ້າຫຼັງ ຍັງໜັກໜ່ວງຢູ່ ໃນຈິດໃຈຂອງສັງຄົມເຮົາ, ສະນັ້ນການປົດປ່ອຍແມ່ຍິງຢ່າງເຖິງຖອງ ປະຕິບັດຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ຈຶ່ງເປັນບັນຫາທີ່ຈະຕ້ອງ ໄດ້ສືບຕໍ່ແກ້ໄຂ ໃນນັ້ນ ສະຫະພັນແມ່ຍິງດຳລົງບົດບາດ ສຳຄັນ, ດ້ານໜຶ່ງພັກແລະ ລັດ ເຮົາກໍ່ພະຍາຍາມສ້າງບັນດາເງື່ອນໄຂ ອັນອຳນວຍໃຫ້ແກ່ ການປົດປ່ອຍແມ່ຍິງ ຢ່າງແທ້ຈິງ ... "

ເພື່ອເຮັດໃຫ້ມະຕິ ດັ່ງກ່າວປາກົດຜົນເປັນຈິງນັ້ນ ໜ້າທີ່ລວມ ຂອງສະຫະພັນແມ່ຍິງ ແຕ່ນີ້ຫາກອງປະຊຸມໃຫຍ່ຄັ້ງທີ III ແມ່ນ: ອອກແຮງເຕົ້າໂຮມຄວາມສາມັກຄີແມ່ຍິງລາວ ບັນດາເຜົ່າ ແລະ ຊຸມຊົນຕ່າງໆ ໃນສັງຄົມຢ່າງກວ້າງຂວາງ, ສຶກສາອົບຮົມ ປຸກລະດົມຂົນຂວາຍໃຫ້ ປະກອບສ່ວນປະຕິບັດ 2 ໜ້າທີ່ ຍຸດທະສາດຂອງພັກຄື **ປົກປັກຮັກສາປະເທດ**

ຊາດ ແລະ ກໍ່ສ້າງ ສັງຄົມນິຍົມ ບົນພື້ນຖານຄຳຂວັນ 3 ດີ 2 ໜ້າທີ່ ປະກອບສ່ວນຢ່າງຫ້າວຫັນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ແຕ່ນີ້ເຖິງປີ 2000 . ຕັ້ງໜ້າປັບປຸງການຈັດຕັ້ງຂັ້ນຕ່າງໆ ຂອງສະຫະພັນແມ່ຍິງໃຫ້ໜັກແໜ້ນ ເຂັ້ມແຂງ ກະທັດລັດ ເບົາບາງ ແຕ່ມີປະສິດທິພາບ , ເປີດກວ້າງຂະບວນການແຂ່ງຂັນ 3 ດີ 2 ໜ້າທີ່ ( ພົນລະເມືອງດີ, ສ້າງຄອບຄົວແບບໃໝ່ດີ, ສາມັກຄີດີ ) ເພື່ອປະກອບສ່ວນປະຕິບັດ ໜ້າ ທີ່ປົກປັກຮັກສາປະເທດຊາດ, ກໍ່ສ້າງປະເທດຊາດ ສັງຄົມນິຍົມ ແລະ ຄວາມສະເໝີພາບ . ຕິດຕາມຊຸກຍູ້ ປະຕິບັດນະໂຍບາຍຂໍ້ກຳນົດ ກົດໝາຍ ທີ່ພົວພັນເຖິງແມ່ຍິງ ແລະ ເດັກນ້ອຍ, ເຂົ້າຮ່ວມຂະບວນການຂອງ ແມ່ຍິງສາກົນຕໍ່ສູ້ ເພື່ອສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ການຮ່ວມມື .

2. ໜ້າທີ່ລະອຽດ :

ເພື່ອປະຕິບັດທິດທາງ ໜ້າທີ່ລວມ ດັ່ງກ່າວນັ້ນ ໃນຊຸມປີຕໍ່ໜ້ານີ້ ພວກເຮົາຕ້ອງສຸມໃສ່ ວຽກງານໃຫຍ່ຕົ້ນຕໍດັ່ງລຸ່ມນີ້ :

ກ./ ເພີ່ມທະວີວຽກງານໂຄສະນາສຶກສາອົບຮົມ ກໍ່ສ້າງແມ່ຍິງລາວໃຫ້ມີສັງຄົມນິຍົມ, ປຸກລະດົມແມ່ຍິງ ອອກແຮງ ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ /(/ ມະຕິ 5 - 6 ( ສະໄໝທີ /(/ ) ຂອງ ສູນກາງພັກ ໃຫ້ປາກົດເປັນຈິງ :

1. ວຽກງານໂຄສະນາສຶກສາອົບຮົມການເມືອງແນວຄິດ :

ໂດຍເລີ່ມຈາກຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງ ໄລຍະໃໝ່ ແລະ ການຫັນປ່ຽນຈິນຕະນາການ, ວຽກງານສຶກສາອົບຮົມການເມືອງແນວຄິດ ຍິ່ງມີຄວາມສຳຄັນ ພວກເຮົາ ຕ້ອງຖືເອົາວຽກນີ້ເປັນ ວຽກທີ່ຈະຕ້ອງດຳເນີນເປັນປະຈຳ .

ໃນໄລຍະໃໝ່ນີ້ແມ່ນ ເລັ່ງໃສ່ສ້າງເອື້ອຍນ້ອງເປັນພົນລະເມືອງ ດີ,

ສ້າງຄອບຄົວແບບໃຫມ່ດີ, ສາມັກຄີດີ, ມີຄວາມເຊື່ອຫມັ້ນຕໍ່ ການນຳພາ ຂອງພັກ ແລະ ຕັ້ງຫນ້າປະຕິບັດນະໂຍບາຍ ແລະ ແຜນການຕ່າງໆ ຂອງ ພັກ - ລັດ ໄດ້ເປັນຢ່າງດີ, ອອກແຮງພັນຂະຫຍາຍມະຕິຂອງກອງປະຊຸມ ໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ II ໃຫ້ປາກົດເປັນຈິງ .

ຢາກເຮັດໄດ້ດີແນວນັ້ນ ສະຫະພັນແມ່ຍິງຕ້ອງ :

- ສຶກສາອົບຮົມໃຫ້ແມ່ຍິງບັນດາເຜົ່າ, ໃນທຸກຊຸມຊົນ ຮັບຮູ້ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ ເປັນຕົ້ນແມ່ນ ເນື້ອໃນຈິດໃຈຂອງມະຕິ 5 ສະໄຫມທີ III ຂອງສູນກາງພັກ ກ່ຽວກັບແນວທາງນະໂຍບາຍ ພັດທະນາເສດຖະກິດ - ສັງຄົມໃຫ້ເຂົ້າໃຈແຈ້ງ ອັນນັ້ນແມ່ນພາລະ ຫນ້າທີ່ ແລະ ທັງແມ່ນຜົນປະໂຫຍດຂອງແມ່ຍິງລາວ.

ດັ່ງນັ້ນ ການປະຕິບັດແນວທາງນະໂຍບາຍດັ່ງກ່າວນັ້ນແມ່ນ ຕ້ອງເລີ່ມ ຈາກຄວາມຕື່ນຕົວເປັນເຈົ້າການ ແລະ ຫົວຄິດປະດິດສ້າງ, ກ້າຄິດ, ກ້າ ເຮັດ, ຮ່ວມມືສະຫນິດແຫນ້ນ ກັບແນວລາວສ້າງຊາດ ແລະ ອົງການ ມະ ຫາຊົນອື່ນໆ ເສີມຂະຫຍາຍສິດເປັນເຈົ້າຂອງແມ່ຍິງ, ອອກແຮງຜ່ານຜ່າ ທຸກຄວາມຫຍຸ້ງຍາກ ອຸປະສັກ ເພື່ອປະຕິບັດມະຕິດັ່ງກ່າວນັ້ນ ໃຫ້ໄດ້ ເປັນ ຢ່າງດີ .

- ຕັ້ງຫນ້າສຶກສາອົບຮົມພະນັກງານ, ສະມາຊິກ ຂອງສະຫະພັນ ແມ່ ຍິງໃຫ້ຊາບຊຶ້ງຕື່ມອີກ ກ່ຽວກັບທິດທາງພາລະບົດບາດຂອງອົງການຕົນ ໃນລະ ບົບອຳນາດປະຊາທິປະໄຕ ປະຊາຊົນ ມີພາລະບົດບາດ ສຶກສາອົບຮົມ, ປຸກ ລະດົມແມ່ຍິງເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງ ພັກ ຂອງລັດ ແລະ ທິດທາງວຽກງານຂອງ ສະຫະພັນແມ່ຍິງໃຫ້ປາກົດເປັນ ຈິງ ເປັນຕົວແທນແຫ່ງສິດຜົນປະໂຫຍດອັນແທ້ຈິງ ຂອງແມ່ຍິງ ແລະ ເດັກ ນ້ອຍ ສ່ອງແສງຄວາມມຸ່ງມາດປາດຖະຫນາ ແລະ ຄວາມອັດຂອງຫມອງໃຈ ຂອງ ແມ່ຍິງລາວຂຶ້ນໃຫ້ພັກ - ລັດ ແລະ ຄະນະສະຫະພັນແມ່ຍິງຂັ້ນເທິງ ໄດ້

24/VII
ห้ามจำหน่าย

ທັນ ເວລາ .

- ອອກແຮງເສີມຂະຫຍາຍມູນເຊື້ອຕໍ່ສູ້ ພິລະອາດຫານ, ດຸໝັ່ນຂະຫຍັນພຽນໃນການອອກແຮງງານ, ມີຄວາມສາມັກຄີຮັກແພງຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງແມ່ຍິງລາວບັນດາເຜົ່າ ໃນແຕ່ລະໄລຍະ ປະຫວັດສາດ ທີ່ຜ່ານມາກໍດີ ໃນຂະບວນການແຂ່ງຂັນ 3 ດີ 2 ໜ້າທີ່ ດ້ວຍຈິດໃຈ ແລະ ເນື້ອໃນປ່ຽນແປງໃໝ່ ແທດເໝາະ ກັບ ສະພາບ ແລະເງື່ອນໄຂຕົວຈິງ ຂອງແມ່ຍິງໃຫ້ພະນັກງານ, ສະມາຊິກຂອງ ສະຫະພັນແມ່ຍິງກໍດີເອື້ອຍນ້ອງທົ່ວໄປຮັບຮູ້ , ເຂົ້າໃຈຢ່າງຖືກຕ້ອງ ເລິກເຊິ່ງ, ກວ້າງຂວາງແລະ ທົ່ວເຖິງໃນທຸກຊຸ້ມຊົນເປັນຕົ້ນແມ່ນ ເຂດຊົນນະບົດ, ເຂດພູດອຍ, ຫ່າງໄກສອກຫຼີກ ແລະ ອີງໃສ່ເນື້ອໃນດັ່ງກ່າວນັ້ນ ເພື່ອເປັນມາດຖານໃຫ້ແມ່ຍິງເຝິກຝົນຕົນເອງ, ແນໃສ່ກໍ່ສ້າງແມ່ຍິງລາວໃໝ່ ສັງຄົມນິຍົມ ພຽບພ້ອມໄປດ້ວຍຄຸນສົມບັດ ແລະ ຄວາມສາມາດ. ພ້ອມກັນນັ້ນ ກໍຕ້ອງເຜີຍແຜ່ເນື້ອໃນ 3 ດີ 2 ໜ້າທີ່ ໃຫ້ເພດຊາຍ ກ່ອນອື່ນແມ່ນ ພະນັກງານເພດຊາຍຮັບຮູ້ນຳ ເພື່ອສ້າງເງື່ອນໄຂຊ່ວຍຊູ ໃຫ້ແມ່ຍິງພວກເຮົາປະຕິບັດໜ້າທີ່ພົນລະເມືອງດີ, ພ້ອມກັບພວກເຮົາ ສ້າງຄອບຄົວແບບໃໝ່ດີ,ເປັນການປະກອບສ່ວນສ້າງວັດທະນະທຳໃໝ່, ສ້າງຄົນໃໝ່ ສັງຄົມນິຍົມ ເທື່ອລະກ້າວ .

ໃນຊຸມປີຕໍ່ໜ້ານີ້ ຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ຕ້ອງອອກແຮງສືບຕໍ່ ປຸກລະດົມກໍ່ສ້າງ ແລະ ຊຸກຍູ້ຂະບວນການແຂ່ງຂັນ 3 ດີ 2 ໜ້າທີ່, ບຳລຸງລ້ຽງ ຂະບວນການ, ເລືອກເຟັ້ນຜູ້ດີເດັ່ນ ເພື່ອບຳລຸງກໍ່ສ້າງເອົາໃຈໃສ່ ສ້າງບ່ອນທົດລອງ ເພື່ອຖອດຖອນບົດຮຽນໃຫ້ແຫ່ງຕ່າງໆ ຂະຫຍາຍຂະບວນການໃຫ້ກວ້າງຂວາງ, ມີການເຄື່ອນໄຫວດ້ວຍຫຼາຍຮູບການມີເນື້ອໃນອຸດົມຮັ່ງມີ , ສ້າງບັນຍາກາດ ແຂ່ງຂັນຢ່າງຟົດຟື້ນ ເນື່ອງນິດລຽນຕິດ .

- ເອົາໃຈໃສ່ບຳລຸງຄວາມຮູ້ ອັນເປັນພື້ນຖານ ທີ່ຈຳເປັນໃຫ້ ເອື້ອຍ ນ້ອງ ຄັດຈອນເອົາເອກະສານທີ່ຈຳເປັນ ແລະ ເຫມາະສົມ ກັບ ສະ ພາບ ຕົວຈິງຂອງທ້ອງຖິ່ນ , ແນໃສ່ບຳລຸງຄວາມຮູ້ພື້ນຖານໃຫ້ພະນັກງານ ແມ່ຍິງ ຮາກຖານ ແລະ ເມືອງ, ຮູ້ນຳພາເຄື່ອນໄຫວວຽກງານແມ່ຍິງ ໃນ ສະ ພາບການເງື່ອນໄຂ ແລະ ຫນ້າທີ່ການເມືອງໄລຍະໃຫມ່ໄດ້ດີ .

- ຄະນະສະຫະພັນແມ່ຍິງຂັ້ນສູນກາງ ແລະ ຂັ້ນແຂວງ ເອົາໃຈ ໃສ່ ປັບປຸງລະບົບສື່ຂ່າວ ຂອງແມ່ຍິງໃຫ້ມີການເຄື່ອນໄຫວດີ ສາມາດເກັບ ກຳ ຂ່າວໃຫ້ຊັດເຈນ ແລະ ທັນເວລາ, ພ້ອມນັ້ນກໍນຳໃຊ້ພາຫະນະ ສື່ມວນຊົນ ຂອງສູນກາງ ແລະ ທ້ອງຖິ່ນ ເພື່ອໂຄສະນາເຜີຍແຜ່ ການເຄື່ອນໄຫວ ຕ່າງໆ ຂອງແມ່ຍິງ. ເອົາໃຈໃສ່ປັບປຸງວິທະຍຸ ແລະ ຫນັງສືພິມແມ່ຍິງ ລາວ ຊຶ່ງແມ່ນ ກະບອກສຽງໂຄສະນາ ສຶກສາອົບຮົມຕົ້ນຕໍຂອງ ສະຫະພັນ ແມ່ຍິງໃຫ້ມີເນື້ອໃນອຸດົມຮ່ວມ ແລະ ຖືກທິດທາງ. ນອກນັ້ນຍັງຕ້ອງ ສ້າງ ນັກປາຖະກະຖາ ແມ່ຍິງຕາມຈຳນວນຫນຶ່ງ ເພື່ອຮັບໃຊ້ຫນ້າທີ່ດັ່ງກ່າວ ນັ້ນ ໃຫ້ດີກວ່າເກົ່າ .

- ຄຽງຄູ່ກັບ ການດຳເນີນວຽກງານໂຄສະນາສຶກສາອົບຮົມແນວທາງ ນະໂຍບາຍ ມະຕິຄຳສັ່ງຂອງພັກ - ລັດ, ອົບຮົມດ້ານທິດສະດີການເມືອງ ແລະ ຮຽນວຽກງານສະຫະພັນແມ່ຍິງແລ້ວ ບັນຫາສຳຄັນທີ່ຈຳເປັນຫນຶ່ງ ອີກ ແມ່ນ ຕ້ອງກາຊອກຫາ ຈຸດອ່ອນ ແລະ ຂໍ້ຂາດຕົກບົກພ່ອງທາງດ້ານ ແນວ ຄິດ ແລະ ການກະທຳທີ່ບໍ່ຖືກຕ້ອງ ສອດຄ່ອງກັບ ຈິນຕະນາການໃຫມ່ຢ່າງ ເປັນປະຈຳ ໂດຍຜ່ານການດຳເນີນຊີວິດ ຂອງແມ່ຍິງ ເພື່ອຫາວິທີແກ້ໄຂ ເຊັ່ນ: ແນວຄິດຄອງເດີມ, ກົນຈັກແຂງກະດ້າງ , ແນວຄິດຕີຕົວຕ່ຳ, ບໍ່ ກ້າຫານ, ບໍ່ເປັນເຈົ້າການ, ເອື່ອຍອ່ອງ, ແນວຄິດຂີ້ຄ້ານມັກງ່າຍ ຄ້ານ ຄົ້ນຄວ້າຮ່ຳຮຽນ, ແນວຄິດຄັບແຄບ, ເຊື່ອຖືງົມງວາຍ ແລະ ແບບແຜນ ເຣັດວຽກແບບອາດຍາສິດ, ບໍ່ລິຫານເກືອກູນ ... ບັນຫາດັ່ງກ່າວນັ້ນ

ເປັນອຸປະສັກ ຂັດຂວາງການກ້າວຂຶ້ນ ຂອງແມ່ຍິງເຮົາ ບໍ່ແມ່ນໜ້ອຍ.

ເພື່ອເຮັດໃຫ້ວຽກງານໂຄສະນາສຶກສາອົບຮົມການເມືອງແນວຄິດ ມີຄຸນນະພາບ ຄະນະສະຫະພັນແມ່ຍິງທຸກຂັ້ນ ໂດຍສະເພາະແມ່ນ ຂັ້ນ ຮາກຖານຕ້ອງກຳໄດ້ສະພາບຄວາມນຶກຄິດ ຈິດໃຈ, ຄວາມມຸ່ງມາດປາດຖະໜາ ແລະ ລະດັບຂອງເອື້ອຍນ້ອງ ເພື່ອສ້າງແຜນການບຳລຸງກໍ່ສ້າງ ແລະ ດັດແປງ ເນື້ອໃນສຶກສາອົບຮົມໃຫ້ແທດເໝາະ ກັບ ແຕ່ລະເປົ້າໝາຍ ແລະ ດຳເນີນໄປຢ່າງເນື່ອງນິດລຽນຕິດ ແຕ່ຂັ້ນຮາກຖານຂຶ້ນມາ, ໝູນໃຊ້ຫຼາຍຮູບ ຫຼາຍວິທີການ ທີ່ມີຊີວິດ ຊີວາ , ຕ້ານແນວຄິດລອກແບບ ຄອງເດີມ ກົນຈັກຫ່າງເຫີນ ຕົວຈິງ .

ຂ./ ວຽກງານປຸກລະດົມຂົນຂວາຍ ແລະ ຈັດຕັ້ງໃຫ້ແມ່ຍິງປະກອບສ່ວນປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງ ສັງຄົມນິຍົມ.

- ແມ່ຍິງລາວມີຈຳນວນພົນລະເມືອງກວ່າເຄິ່ງໜຶ່ງ ແມ່ນກຳລັງແຮງງານຜະລິດ ທີ່ສຳຄັນ ສະນັ້ນຄະນະສະຫະພັນແມ່ຍິງທຸກຂັ້ນ ຕ້ອງ ປຸກລະດົມເອື້ອຍນ້ອງເຂົ້າຮ່ວມການປະຕິບັດ ທິດທາງໜ້າທີ່ຕົ້ນຕໍ ໃນການຂະຫຍາຍເສດຖະກິດ ສັງຄົມ ທີ່ແຜນການ 5 ປີ ແຫ່ງລັດ ຄັ້ງ ທີ II ( 1986 - 1990 ) ໄດ້ກຳນົດເປັນຕົ້ນແມ່ນ ເຂົ້າຮ່ວມການ ປະຕິບັດ 6 ໂຄງການຄື :

1. ເຂົ້າຮ່ວມໂຄງການອາຫານ ແລະ ທັນຍາຫານ :

- ປຸກລະດົມ ໃຫ້ແມ່ຍິງຕື່ນຕົວຫ້າວຫັນສູ້ຊົນ ປະກອບສ່ວນ ປະຕິບັດຕົວເລກຄາດໝາຍ ໃນການຜະລິດທັນຍາຫານ ໄລ່ສະເລ່ຍ ຜູ້ໜຶ່ງໃຫ້ໄດ້ 450 ກິໂລ/ປີ ( 1990 ) ພ້ອມກັນນັ້ນ ກໍ່ສູ້ຊົນເຮັດນາໃຫ້ໝົດ ເນື້ອທີ່ທີ່ມີແລ້ວ ແລະ ຂະຫຍາຍເນື້ອທີ່ປູກຝັງຕື່ມ ເພື່ອປູກພືດສຳຮອງ ທີ່ມີ ທາດແປ້ງ, ບ່ອນມີເງື່ອນໄຂກໍ່ເຮັດນາ 2 ລະດູ , ເອົາໃຈໃສ່ນຳໃຊ້ບັນດາວິທີການເຕັກນິກ ຂອງການກະເສດສຸມ ແບບງ່າຍດາຍເຊັ່ນ: ເລືອກແນວ

ປູກ, ປູກເຂົ້າຈ້າວ , ເອົາໃຈໃສ່ຂອດກຽມດິນ, ຕົກກ້າ ປັກດຳໃຫ້ທັນລະດູການ, ໃສ່ຝຸ່ນ, ຮັກສານ້ຳໃຫ້ພຽງພໍ ແລະ ອື່ນໆ ... ປະກອບສ່ວນສ້າງຊົນລະປະທານ ອ່າງເກັບນ້ຳ ... ເພື່ອຮັບໃຊ້ໃຫ້ການ ປູກຝັງລ້ຽງສັດ .

- ຂະຫຍາຍການລ້ຽງສັດເປັນຕົ້ນແມ່ນ ຄວາຍ, ງົວ, ໝູ, ປາ ແລະ ສັດປີກທຸກປະເພດ ຮັບປະກັນມີອາຫານກິນພຽງພໍ ກັບຄວາມຕ້ອງການ ແລະ ໃຫ້ມີສ່ວນເຫຼືອໄວ້ ເປັນສິນຄ້າຂາອອກ ໂດຍຖືເອົາການລ້ຽງສັດໃນແຕ່ລະຄອບຄົວເປັນສຳຄັນ .

- ຕ້ອງຫັນມາເຂົ້າຮ່ວມການປູກຕົ້ນໄມ້ ອຸດສາຫະກຳ, ຕົ້ນໄມ້ກິນໝາກ ແລະ ຕົ້ນໄມ້ທີ່ເປັນຢາ ເພື່ອເປັນສິນຄ້າ ແລະ ເປັນວັດຖຸດິບ ປ້ອນ ອຸດສາຫະກຳ .

ເຮັດໄດ້ຄືແນວນັ້ນ ພວກເຮົາຈຶ່ງສາມາດແກ້ໄຂ ທັນຍາຫານ ແລະ ອາຫານໄດ້ຢ່າງໜັກແໜ້ນ, ລາຍຮັບຂອງປະຊາຊົນກໍ່ ຈະເພີ່ມຂຶ້ນ, ຊີວິດການເປັນຢູ່ ຈະໄດ້ຮັບການປັບປຸງ .

2. <u>ເຂົ້າຮ່ວມໂຄງການຈຳກັດ ແລະ ກ້າວໄປເຖິງຢຸດຕິການຖາງປ່າເຮັດໄຮ່ ປົກປັກຮັກສາ ສິ່ງແວດລ້ອມ</u> :

ຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ມີໜ້າທີ່ສຶກສາອົບຮົມໃຫ້ ປະຊາຊົນ ແລະ ເອື້ອຍນ້ອງແມ່ຍິງເຂົ້າໃຈແຈ້ງ ກ່ຽວກັບ ນະໂຍບາຍດັ່ງກ່າວ, ເຫັນໄດ້ຄວາມໝາຍຍຸດທະສາດສຳຄັນ ຂອງປ່າໄມ້, ໜ້າທີ່ປົກປັກຮັກສາປ່າ-ໄມ້ , ປົກປັກຮັກສາຊັບພະຍາກອນອັນລ້ຳຄ່າຂອງຊາດ ເຊິ່ງແມ່ນ ຜົນປະໂຫຍດຕົວຈິງ ຂອງປະຊາຊົນກໍຄື ແມ່ຍິງພວກເຮົາ. ດັ່ງນັ້ນ ພວກເຮົາຕ້ອງເປັນເຈົ້າການລະດົມອ້າຍ ເອື້ອຍ ນ້ອງ ລູກ ຜົວ, ພໍ່ແມ່ຂອງ ຕົນ ຢຸດຕິການຈູດປ່າຊະຊາຍ ແລະ ຈຳກັດການຖາງປ່າເຮັດໄຮ່ ຫັນການທຳມາຫາກິນແບບຄົງທີ່, ສ້າງຊີວິດການເປັນຢູ່ສະຫງົບປົກກະຕິເທື່ອລະກ້າວ .

3. ເອົາໃຈໃສ່ປຸກລະດົມປະຊາຊົນກໍ່ ແມ່ຍິງໃຫ້ຟື້ນຟູ ແລະ ສົ່ງເສີມວິຊາຊີບ ຫັດຖະກຳຕ່າງໆ ທີ່ເປັນທ່າແຮງ ເປັນມູນເຊື້ອ ຂອງທ້ອງຖິ່ນ ເຊັ່ນ : ຊ່າງຕີເຫຼັກ , ຊ່າງໄມ້, ຊ່າງປັ້ນຫມໍ້ ແລະການ ຕ່ຳຫູກທໍໄຫມ, ເສີມຂະຫຍາຍສີໄມ້ລາຍມື ອັນປານີດ ຄອງແຄວ ມີລັກສະ ນະຊາດ ຂອງເອື້ອຍນ້ອງໃຫ້ນັບມື້ ນັບຂະຫຍາຍຕົວ , ມີການຈັດຕັ້ງ ດ້ວຍ ຮູບການສະຫະກອນ,ເອກະເທດ ຫຼື ຮູບການຫຸ້ນສ່ວນ ແນໃສ່ຜະລິດ ສິນຄ້າ ໃຊ້ສອຍໃຫ້ຫຼາຍຂຶ້ນ ຕອບສະຫນອງກັບ ຄວາມຕ້ອງການຂອງທ້ອງຖິ່ນ ກໍ່ ຄື ພາຍໃນປະເທດກ້າວໄປເຖິງ ສິນຄ້າຂາອອກ ຈຳນວນຫນຶ່ງ .

- ເອື້ອຍນ້ອງທີ່ສັງກັດຢູ່ຕາມໂຮງຈັກ ໂຮງງານ ເອົາໃຈໃສ່ ເສີມ ຂະຫຍາຍສິດເປັນເຈົ້າ ແລະ ຄວາມຮັບຜິດຊອບຂອງຕົນ ເຂົ້າໃນການ ປະ ຕິບັດແຜນການຜະລິດຢ່າງມີຫົວຄິດປະດິດສ້າງ, ນຳໃຊ້ເຕັກນິກ ວິທະຍາ ສາດ ເຂົ້າໃນການຜະລິດ, ຍົກປະສິດທິພາບຂອງງານໃຫ້ນັບມື້ນັບສູງຂື້ນ, ມີນ້ຳໃຈ ປົກປັກຮັກສາວັດຖຸ ສິ່ງຂອງສ່ວນລວມ, ເຂົ້າຮ່ວມການກໍ່ສ້າງກົນ ໄກຄຸ້ມຄອງເສດຖະກິດໃຫມ່ ມີການໄລ່ລຽງທຸລະກິດ ສັງຄົມນິຍົມ.

- ຄະນະສະຫະພັນແມ່ຍິງສູນກາງ ຕ້ອງສຸມໃສ່ປັບປຸງສູນຝຶກອົບຮົມຫັດ ຖະກຳ ຕ່ຳແຜ່ນແມ່ຍິງລາວ ໃນທຸກດ້ານ ໃຫ້ສາມາດດຳເນີນພາລະບົດບາດ ຝຶກອົບຮົມວິຊາຕ່ຳແຜ່ນ, ຕັດຫຍິບ ແລະ ທຳການຜະລິດໃຫ້ນັບມື້ ດີ ຂຶ້ນ, ສ້າງເງື່ອນໄຂທັນເປັນທຸລະກິດ ເທື່ອລະກ້າວ ແລະ ຂະຫຍາຍສາຂາ ຂອງ ສູນອອກຕື່ມ ຢູ່ບາງແຂວງ .

- ໂຄສະນາ ສຶກສາອົບຮົມ ແລະ ປຸກລະດົມໃຫ້ເອື້ອຍນ້ອງ ສ້າງ ເສດຖະກິດຄອບຄົວ ຢ່າງມີແຜນການ ຕາມຄວາມສາມາດຕົວຈິງ ກ້າວ ໄປ ເຖິງຜະລິດເປັນສິນຄ້າ ເທື່ອລະກ້າວ, ປະຕິບັດການຊື້ - ຂາຍເສລີ ແຕ່ ຖືກກົດຫມາຍ ຢ່າງແທ້ຈິງ .

4. ເຂົ້າຮ່ວມການກໍ່ສ້າງລະບົບບໍລິການ, ເສັ້ນທາງ ຄົມມະນາຄົມ

<u>ຂົນສົ່ງ ຕິດຕໍ່</u> ສື່ສານມີຄວາມໝາຍສຳຄັນ ບໍ່ພຽງແຕ່ເປັນບັນຫາເສດຖະກິດເທົ່ານັ້ນ ມັນຍັງມີຄວາມໝາຍທາງດ້ານການເມືອງ , ການທະຫານ ແລະ ວັດທະນະທຳສັງຄົມອີກດ້ວຍ. ສະນັ້ນ ສະຫະພັນແມ່ຍິງ ແລະເອື້ອຍນ້ອງແມ່ຍິງລາວ ບັນດາເຜົ່າ ຕ້ອງເຊື່ອມຊຶມແນວທາງຂອງພັກທີ່ວ່າ ການຄົມມະນາຄົມຂົນສົ່ງ ເປັນປາຍແຫຼມ ຂອງການຫັນເສດຖະກິດທຳມະຊາດ ໄປສູ່ເສດຖະກິດຜະລິດສິນຄ້າ, ເຂົ້າຮ່ວມການກໍ່ສ້າງເສັ້ນທາງ ລະຫວ່າງບ້ານຕໍ່ ບ້ານ, ເມືອງຕໍ່ເມືອງ ຢູ່ຊົນນະບົດ, ທັງເຂົ້າຮ່ວມປົກປັກຮັກສາ ແລະປົວແປງເສັ້ນທາງຫຼວງ ຮັບປະກັນໃຫ້ການຄົມມະນາຄົມທະລຸໂລ່ງ, ສົ່ງເສີມໃຫ້ປະຊາຊົນນຳໃຊ້ທຸກພາຫະນະຂົນສົ່ງແບບປະຖົມປະຖານ ແລະ ພາຫະນະດັດແປງທາງບົກກໍດີ ທາງນ້ຳ ເພື່ອປະກອບສ່ວນເຂົ້າ ໃນການເປີດກວ້າງການຈໍລະຈອນສິນຄ້າ, ນຳເອົາການຄ້າເຂົ້າສູ່ຊົນນະບົດ, ສູ່ເຂດພູດອຍດອຍຫຼາຍຮູບການ ເພື່ອກະຕຸກຊຸກຍູ້ ຄວາມຮຽກຮ້ອງຕ້ອງການ ແລະ ການແລກປ່ຽນສິນຄ້າ, ເອື້ອຍນ້ອງຕ້ອງປະກອບສ່ວນເຂົ້າໃນການຈັດຕັ້ງສະຫະກອນຊື້ - ຂາຍ, ສະຫະກອນສິນເຊື່ອ, ຮ້ານຄ້າຂອງລັດ ແລະ ດຳເນີນການບໍລິການ 2 ສົ້ນ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ດີ .

5. <u>ເຂົ້າຮ່ວມ ວຽກງານວັດທະນະທຳ - ສັງຄົມ</u>, ວຽກງານ ວັດທະນະທຳ ສັງຄົມແມ່ນ ວຽກໜຶ່ງ ທີ່ສຳຄັນໃນນະໂຍບາຍສັງຄົມ ຂອງ ພັກແນໃສ່ກໍ່ສ້າງວັດທະນະທຳໃໝ່ ແລະ ຄົນໃໝ່ສັງຄົມນິຍົມ ທັງເປັນການປະກອບສ່ວນຊຸກຍູ້ ໃຫ້ການຂະຫຍາຍເສດຖະກິດອີກດ້ວຍ . ສະນັ້ນສະຫະພັນແມ່ຍິງຂັ້ນຕ່າງໆ ຕ້ອງເປັນແບບຢ່າງ ແລະ ຕັ້ງໜ້າປຸກລະດົມ ປະຊາຊົນກໍ່ຄື ແມ່ຍິງບັນດາເຜົ່າ ໃນທົ່ວປະເທດ. ເຂົ້າຮ່ວມການປະຕິຮູບ ການສຶກສາ ເລັ່ງໃສ່ລົບລ້າງການກີກໜັງສື ແລະ ຕັ້ງໜ້າບຳລຸງວັດທະນະທຳເພື່ອ ຍົກລະດັບໃຫ້ສູງຂຶ້ນ. ໃນ 5 ປີຕໍ່ໜ້ານີ້ ຄະນະສະຫະພັນແມ່ຍິງຂັ້ນ

ສູນກາງ , ຂັ້ນແຂວງໃຫ້ຈົບຊັ້ນມັດທະຍົມ ແລະ ກ້າວຂຶ້ນຈົບອຸດົມ ໃຫ້ໄດ້ 60% .

- ຄະນະສະຫະພັນແມ່ຍິງຂັ້ນເມືອງໃຫ້ຈົບຊັ້ນປະຖົມ ແລະ ກ້າວ ຂຶ້ນຈົບຊັ້ນມັດທະຍົມ 60% , ຄະນະແມ່ຍິງຂັ້ນຮາກຖານຕ້ອງຈົບຊັ້ນປະຖົມແລະ ກ້າວຂຶ້ນ ຈົບມັດທະຍົມ 50 % .

- ປຸກລະດົມ ແລະ ຊຸກຍູ້ເອື້ອຍນ້ອງໃນທ້ອງຖິ່ນ ສົມທົບກັບ ອຳນາດການປົກຄອງ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ປົວແປງ ໂຮງຮຽນ, ລະດົມລູກຫຼານໃນໄວຮຽນເຂົ້າຮ່ຳຮຽນໃຫ້ນັບມື້ນັບຫຼາຍຂຶ້ນ ພ້ອມກັນນັ້ນ ກໍ່ເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງຄູອາຈານ ໂດຍສະເພາະແມ່ນ ນາງລ້ຽງເດັກ ແລະ ນາງຄູອານຸບານ, ສ້າງເງື່ອນໄຂໃຫ້ເຂົາເຈົ້າເຮັດໜ້າທີ່ສິດສອນເປັນຢ່າງດີ .

ເອື້ອຍນ້ອງທີ່ຢູ່ ໃນຖັນແຖວຄູ ອາຈານສອນ ຕ້ອງເອົາໃຈໃສ່ ເຮັດໜ້າທີ່ສິດສອນດີ, ເຝິກຝົນຕົນເອງ ໃຫ້ສົມກຽດວ່າ ເປັນຄົນຂອງພັກຢ່າງແທ້ຈິງ. ສຳລັບຖັນແຖວນັກຮຽນຍິງ ກໍ່ໃຫ້ເອົາໃຈໃສ່ຮ່ຳຮຽນດີ ຮຽນເກັ່ງ ບຸກບືນຮຽນສຳເລັດ ຂັ້ນອຸດົມໃຫ້ນັບມື້ນັບຫຼາຍ ກຽມທຸກເງື່ອນໄຂ ເພື່ອກາຍເປັນຜູ້ອອກແຮງງານທີ່ດີຂອງຊາດ .

- ລະດົມເອື້ອຍນ້ອງແມ່ຍິງລາວບັນດາເຜົ່າ ເຄື່ອນໄຫວວັດທະນະທຳສິລະປະວັນນະຄະດີ ທີ່ສ່ອງແສງເຖິງ ລັກສະນະຊາດ ລັກສະນະມະຫາຊົນ ແລະ ກ້າວໜ້າຢູ່ ຮາກຖານໃຫ້ກວ້າງຂວາງ, ຮັບໃຊ້ການຜະລິດ ຮັບໃຊ້ໜ້າທີ່ການເມືອງຂອງພັກ ເຮັດໃຫ້ຊີວິດການເປັນຢູ່ດ້ານຈິດໃຈຂອງ ປະຊາຊົນກໍຄື ຂອງແມ່ຍິງພວກເຮົາມີຄວາມເບີກບານມ່ວນຊື່ນ; ສ້າງແບບແຜນດຳລົງຊີວິດແບບງ່າຍດາຍ , ສີວິໄລ, ສົດໃສ, ມີຄວາມສາມັກຄີຮັກແພງ ແລະ ເຄົາລົບນັບຖືເຊິ່ງກັນ ແລະ ກັນ, ພ້ອມກັນປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳອັນດີງາມ ເຊິ່ງແມ່ນມໍລະດົກອັນລ້ຳຄ່າຂອງຊາດເຮົາ.

- ຄະນະສະຫະພັນແມ່ຍິງທຸກຂັ້ນ ຕ້ອງປຸກລະດົມປະຊາຊົນ ແລະ ເອື້ອຍນ້ອງທຸກຄົນ ເອົາໃຈໃສ່ປະຕິບັດ ຫລັກການອະນາໄມ ກັນພະຍາດ ປົກປັກຮັກສາ ສິ່ງແວດລ້ອມຢ່າງເປັນປະຈຳ ແລະ ກາຍເປັນຄວາມຊິນເຄີຍ ຂອງໝົດທຸກຄົນ ເທື່ອລະກ້າວເປັນຕົ້ນແມ່ນ ການປະຕິບັດອະນາໄມ 3 ສະອາດ. ປະກອບວັດຖຸປັດໃຈໃນການປັບປຸງກໍ່ສ້າງ ໂຮງໝໍ. ນຳໃຊ້ຢາ ພື້ນເມືອງ ສົມທົບກັບ ຢາສາກົນເຂົ້າໃນການປິ່ນປົວ, ອີກດ້ານໜຶ່ງ ສະມາຊິກສະຫະພັນແມ່ຍິງ ທຸກຄົນ ຕ້ອງຕື່ນຕົວໄປໂຮງໝໍ ເພື່ອ ກວດສຸຂະພາບ ແລະ ປິ່ນປົວພະຍາດ ເປັນຕົ້ນແມ່ນພະຍາດແມ່ຍິງ , ໄປກວດທ້ອງ, ເກີດລູກ, ຕັດສິນໃຈລົບລ້າງຮີດຄອງເກົ່າ ຫຼ້າຫລັງ ທີ່ເປັນ ອັນຕະລາຍເຖິງຊີວິດ ຂອງແມ່ຍິງ ແລະ ເດັກນ້ອຍ , ເອົາໃຈໃສ່ ປະຕິບັດ ແຜນການສັກຢາກັນພະຍາດໃຫ້ເດັກ ຢ່າງຄົບຖ້ວນ ທັງໝົດ ເພື່ອປົກປັກຮັກສາສຸຂະພາບໃຫ້ແມ່ຍິງ ແລະ ເດັກນ້ອຍ, ຫລຸດຜ່ອນການຕາຍຂອງ ແມ່ມານ ແລະ ເດັກອ່ອນ ລົງອີກກ້າວໜຶ່ງ ປະກອບສ່ວນ ໃນການເພີ່ມພົນລະເມືອງລາວ .

6. ປຸກລະດົມແມ່ຍິງເຂົ້າຮ່ວມການປະຕິບັດໂຄງການ ປ້ອງກັນຊາດ ປ້ອງກັນຄວາມສະຫງົບ , ປັບປຸງລະບົບອຳນາດປະຊາທິປະໄຕ ປະຊາຊົນ ພາຍໃຕ້ການນຳພາຂອງພັກໃຫ້ເຂັ້ມແຂງ ໜັກແໜ້ນ :

ໃນສະພາບການຂອງໂລກຍັງຜັນແປໄປຢ່າງສັບສົນ, ຢູ່ພາກພື້ນ ອາຊີອາຄະເນ ຈັກກະພັດນິຍົມ ແລະ ບັນດາອິດທິກຳລັງປະຕິການຍັງສືບຕໍ່ ສົມຮູ້ຮ່ວມຄິດກັນ ມ້າງເພທຳລາຍການປະຕິວັດຂອງປະເທດເຮົາ ສະນັ້ນ ມັນຈຶ່ງຮຽກຮ້ອງໃຫ້ພວກເຮົາຕ້ອງເຊີດຊູ ສະຕິລະວັງຕົວໃນທຸກຂົງເຂດ ການເຄື່ອນໄຫວ ເພື່ອສະກັດກັ້ນ ແລະ ທັບມ້າງກົນອຸບາຍ ມ້າງເພ ຕ່າງໆ ຂອງພວກເຂົາ .

- ຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ພ້ອມດ້ວຍສະມາຊິກແມ່ຍິງທຸກຄົນ

ຕ້ອງຊາບຊຶມແນວທາງປ້ອງກັນຊາດ ປ້ອງກັນຄວາມສະຫງົບ ໃນໄລຍະໃຫມ່ຂອງພັກ , ອອກແຮງສຶກສາອົບຮົມໃຫ້ປະຊາຊົນກໍ່ຄື ເອື້ອຍນ້ອງ ແມ່ຍິງຮັບຮູ້ແຈ້ງຫນ້າທີ່ປົກປັກຮັກສາປະເທດຊາດ ໃນນັ້ນແມ່ນ ເນື້ອໃນຮອບດ້ານ , ແມ່ນການປົກປັກຮັກສາເອກະລາດ , ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ , ປົກປັກຮັກສາແນວທາງ, ແຜນນະໂຍບາຍຂອງ ພັກ ແລະ ລັດ; ປົກປັກຮັກສາຄວາມສາມັກຄີ ເປັນເອກະພາບແຫ່ງຊາດ, ປົກປັກຮັກສາຊີວິດ, ຊັບສົມບັດ ແລະ ການອອກແຮງງານສ້າງສາບ້ານເມືອງໃນສັນຕິພາບຂອງປະຊາຊົນກໍ່ຄື ແມ່ຍິງບັນດາເຜົ່າ, ເອື້ອຍນ້ອງຈົ່ງເຂົ້າຮ່ວມວຽກງານປັບປຸງການປ້ອງກັນຊາດ ປ້ອງກັນຄວາມສະຫງົບຢູ່ ຮາກຖານໃຫ້ຫນັກແຫນ້ນ ປະກອບສ່ວນ ເວນຍາມ ຮັກສາຄວາມສະຫງົບໃນ ທ້ອງຖິ່ນໃຫ້ດີ .

+ ອອກແຮງປຸກລະດົມລູກຫລານຊາວຫນຸ່ມໃຫ້ຕື່ນຕົວ ສະຫມັກໃຈ ເຂົ້າເປັນທະຫານ, ຕຳຫລວດ ແລະ ຮັບໃຊ້ໃນຖັນແຖວກຳລັງປະກອບອາວຸດ ໃຫ້ໄດ້ຕາມລະດັບຄາດຫມາຍ .

+ ອອກແຮງປຸກລະດົມທຸກຊັ້ນຄົນ , ທຸກຊົນຊາດ ຊົນເຜົ່າໃນສັງຄົມພ້ອມກັນ ເຮັດວຽກງານແນວຫລັງ , ອຸ້ມຊູ ຊ່ວຍເຫລືອແນວຫນ້າ , ເບິ່ງແຍງຄອບຄົວຂອງພະນັກງານທະຫານ ທີ່ເສັຽສະລະ ຊີວິດ , ເສັຍອົງຄະ ແລະ ຖືກບາດເຈັບ , ຄອບຄົວຂອງຜູ້ທີ່ພ້ອມເຮັດຫນ້າທີ່ຢູ່ຊາຍແດນ ເຂດຫ່າງໄກ , ເຮັດໃຫ້ກຳລັງທີ່ພ້ອມເຮັດຫນ້າທີ່ຢູ່ແນວຫນ້າ ມີຄວາມສະຫງົບອຸ່ນອ.ຽນໃຈ ຕໍ່ ພາລະຫນ້າທີ່ອັນສັກກາລະບູຊາ ຂອງຕົນ :

+ ເອົາໃຈໃສ່ເບິ່ງແຍງຊ່ວຍເຫລືອນັກຮົບ ແລະ ກຳມະກອນ ສາກົນທີ່ພ້ອມເຮັດຫນ້າທີ່ສາກົນ ຢູ່ໃນທ້ອງຖິ່ນຂອງຕົນເປັນຢ່າງດີ .

ຄ./ <u>ອອກແຮງປົກປັກຮັກສາສິດຜົນປະໂຫຍດຂອງແມ່ຍິງ- ເດັກນ້ອຍ ແລະ ເອົາໃຈໃສ່ກໍ່ສ້າງ ຄອບຄົວວັດທະນະທຳໃຫມ່ , ສ້າງຄົນໃຫມ່ ສັງ</u>

ຄົມນິຍົມ :

ເພື່ອປະຕິບັດຕາມນະໂຍບາຍທີ່ພັກ - ລັດໄດ້ມີຕໍ່ແມ່ຍິງ ແລະ ເດັກນ້ອຍ , ເພື່ອສິດຜົນປະໂຫຍດອັນຊອບທຳ ຂອງແມ່ຍິງໃນການເຂົ້າຮ່ວມທຸກການເຄື່ອນໄຫວຂອງສັງຄົມ , ເປັນເຈົ້າປະເທດຊາດ ເປັນເຈົ້າຊາຕາກຳຂອງຕົນກ້າວຂຶ້ນ ປະຕິບັດຄວາມສະເໝີພາບລະຫວ່າງຍິງ - ຊາຍ ໃນທຸກດ້ານ ເທື່ອລະກ້າວ ສະຫະພັນແມ່ຍິງຕ້ອງເຮັດວຽກງານຕົ້ນຕໍດັ່ງລຸ່ມນີ້ :

1. ອອກແຮງປົກປັກຮັກສາສິດຜົນປະໂຫຍດຂອງແມ່ຍິງແລະເດັກນ້ອຍ

- ຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ຕ້ອງຄົ້ນຄວ້າກຳແໜ້ນ ບັນດານະໂຍບາຍຂອງພັກ ແລະ ຂໍ້ກຳນົດກົດໝາຍຕ່າງໆ ຂອງລັດ ທີ່ພົວພັນເຖິງແມ່ຍິງ ແລະ ເດັກນ້ອຍ ເພື່ອຕິດຕາມກວດກາຊຸກຍູ້ ແລະ ເປັນເຈົ້າການສົມທົບກັບ ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງເປັນຈິງເຊັ່ນ : ນະໂຍບາຍພັກຜ່ອນເກີດລູກ , ເກີດລູກແຝດ, ນະໂຍບາຍແຮງງານ ແລະປະກັນໄພ, ນະໂຍບາຍກໍ່ສ້າງພະນັກງານຍິງ ການເລື່ອນຊັ້ນ ບັນຈຸໜ້າທີ່ໃຫ້ພະນັກງານຍິງ ແລະ ອື່ນໆ ...

ຄະນະສະຫະພັນແມ່ຍິງຂັ້ນຮາກຖານຕ້ອງເປັນເຈົ້າການສົມທົບ ກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂບັນຫາຫຍຸ້ງຍາກ ສັບສົນຕ່າງໆ ທີ່ເກີດຂຶ້ນໃນຄອບຄົວຂອງເອື້ອຍນ້ອງໃນຂອບເຂດຕົນຮັບຜິດຊອບ ເປັນຕົ້ນແມ່ນ ບັນຫາຄວາມຮັກ, ຄວາມບໍລິສຸດຈິງໃຈຕໍ່ກັນ, ການຜິດຂ້ອງຕ້ອງຖຽງ, ການປະຮ້າງ ແລະ ອື່ນໆ ... ຮັບປະກັນແກ້ໄຂບັນຫາຕ່າງໆ ນັ້ນ ມີຄວາມຍຸດຕິທຳ ແລະ ສະເໝີພາບ ທັງເປັນການສຶກສາອົບຮົມ ແລະ ເປັນ ບົດຮຽນຊີວິດໃຫ້ເຂົ້າເຈົ້າອີກດ້ວຍ .

ສະຫະພັນແມ່ຍິງສູນກາງ ຈະສືບຕໍ່ຄົ້ນຄວ້າສ້າງຮ່າງກົດໝາຍ ຕ່າງໆທີ່ພົວພັນເຖິງແມ່ຍິງ ແລະ ເດັກນ້ອຍເປັນຕົ້ນແມ່ນ ສົມທົບກັບ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ນຳສະເໜີບັນດານະໂຍບາຍ ແລະ ກົດ

ໝາຍທີ່ພົວພັນໂດຍກົງຕໍ່ແມ່ຍິງ ເຊັ່ນ : ນະໂຍບາຍເກີດລູກຫ່າງ ເພື່ອປົກປັກຮັກສາສຸຂະພາບຂອງແມ່ ແລະ ເດັກ, ກົດໝາຍສາງຄອບຄົວແລະອື່ນໆ ແນໃສ່ຮັກສາສຸຂະພາບໃຫ້ຜູ້ເປັນແມ່ ແລະ ຄວາມເຕີບໃຫຍ່ຂອງເດັກ, ຮັບປະກັນຄວາມສຸກ ຄວາມສະເໝີພາບ ໃນຄອບຄົວ ໃນ ສັງຄົມ ແລະ ຄວາມເປັນທຳໃຫ້ແມ່ຍິງ ແລະ ເດັກນ້ອຍ .

- ຄະນະສະຫະພັນທຸກຂັ້ນ ຈົ່ງເອົາໃຈໃສ່ເບິ່ງແຍງເອື້ອຍນ້ອງທີ່ອອກພັກຜ່ອນກິນເບັ້ຍບຳນານຢູ່ໃນທ້ອງຖິ່ນ ກົມກອງຂອງຕົນ ແລະ ເກັບກຳ ຈຳນວນເດັກກຳພ້າ ກຳພອຍ ແລະ ເດັກທີ່ຖືກພໍ່ແມ່ປະຖິ້ມ ເພື່ອມີການຈັດຕັ້ງເບິ່ງແຍງ ແລະ ສຶກສາອົບຮົມ .

- ສົມທົບກັບ ພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນ ອຳນາດການ ປົກຄອງ , ແນວໂຮມ , ສຶກສາ ສາທາລະນະສຸກ , ອົງການຈັດຕັ້ງ ຊາວໜຸ່ມ , ກຳມະບານ ... ເພື່ອການປັບປຸງກໍ່ສ້າງຂະຫຍາຍ ໂຮງຮຽນອານຸບານ, ເຮືອນຝາກເດັກລົງສູ່ຮາກຖານ ການພະລິດ ຕາມທິດທາງ ຂອງພັກທີ່ວ່າ : "ລັດ ແລະ ປະຊາຊົນ ພ້ອມກັນເຮັດ" ໃຫ້ໄດ້ດີ , ສົມທົບກັບ ຄະນະຊາວໜຸ່ມ ເພື່ອອົບຮົມກໍ່ສ້າງ ອານຸຊົນ ເຍົາວະຊົນ ແລະ ຍິງໜຸ່ມໃຫ້ເຕີບໃຫຍ່ ແລະ ກາວໜ້າ, ຄະນະສະຫະພັນແມ່ຍິງຂັ້ນ ຕ່າງໆເອົາໃຈໃສ່ສົມທົບ ກັບ ສາທາລະນະສຸກ ປັບປຸງການຈັດຕັ້ງ ປະຕິບັດວຽກງານປົກປັກຮັກສາສຸຂະພາບຂອງແມ່ ແລະ ເດັກ ໃຫ້ການເຄື່ອນໄຫວດີຂຶ້ນກວ່າເກົ່າ.

- ລະດົມສົ່ງເສີມ ແລະ ສູ້ຊົນໃຫ້ເອື້ອຍນ້ອງໄດ້ບຳລຸງຮ່ຳຮຽນ ຍົກລະດັບການສຶກສາ, ທິດສະດີ ວິຊາສະເພາະ, ວິທະຍາສາດ - ເຕັກນິກໃຫ້ສູງຂຶ້ນ ສາມາດປະກອບສ່ວນເຂົ້າໃນການຄຸ້ມຄອງ ເສດຖະກິດ, ຄຸ້ມຄອງສັງຄົມໃຫ້ນັບມື້ ນັບຫຼາຍ .

ສືບຕໍ່ ເປີດຊຸດອົບຮົມວິຊາຊີບ , ເຜີຍແຜ່ຄວາມຮູ້ ພື້ນຖານໃນການ

ຮັກສາສຸຂະພາບຂອງແມ່ຍິງ , ເດັກນ້ອຍ ແລະ ວິທີລ້ຽງດູສຶກສອນລູກເຕົ້າຕາມວິທະຍາສາດເທື່ອລະກ້າວ ໃຫ້ເອື້ອຍນ້ອງຮັບຮູ້ ຢ່າງກວ້າງຂວາງເປັນຕົ້ນແມ່ນ ເອື້ອຍນ້ອງຢູ່ຊົນນະບົດເຂດເຜົ່າຊົນ ຫ່າງໄກສອກຫຼີກ.

- ສະຫະພັນແມ່ຍິງສູນກາງ ສືບຕໍ່ ຍາດແຍ່ງເອົາການຊ່ວຍເຫຼືອຈາກບັນດາປະເທດອ້າຍນ້ອງ ແລະ ອົງການຈັດຕັ້ງສາກົນຕ່າງໆ **ເພື່ອຜົນປະ**ໂຫຍດໃຫ້ແມ່ຍິງ ແລະ ເດັກນ້ອຍ , ຕິດຕາມຊຸກຍູ້ສະຫະພັນແມ່ຍິງຂັ້ນຕ່າງຕ່າງ ເປັນເຈົ້າການ ຈັດຕັ້ງນຳພາ ທຸກການເຄື່ອນໄຫວຂອງໂຄງ ການຊ່ວຍເຫຼືອຕ່າງໆ ນັ້ນໃຫ້ປາກົດຜົນເປັນຈິງຕາມຈຸດປະສົງ, ແນໃສ່ຫາວຽກເຮັດງານທຳ, ດັດແປງເຄື່ອງມື, ຫລຸດຜ່ອນແຮງງານໜັກ ແລະ ຍົກສະມັດຕະພາບຂອງງານສູງຂຶ້ນ , ປະກອບສ່ວນຮັກສາສຸຂະພາບໃຫ້ ເອື້ອຍນ້ອງ ທັງເປັນການຫາລາຍໄດ້ໃຫ້ຄອບຄົວ, ປັບປຸງຊີວິດການເປັນຢູ່ໃຫ້ນັບມື້ ນັບດີຂຶ້ນ .

2. <u>ເອົາໃຈໃສ່ແນະນຳໃຫ້ແມ່ຍິງ ເຮັດໜ້າທີ່ສ້າງຄອບຄົວແບບໃໝ່ດີ, ສ້າງສາມັກຄີ , ປະກອບສ່ວນສ້າງວັດທະນະທຳໃໝ່ , ສ້າງ ຄົນໃໝ່ ສັງຄົມນິຍົມ</u> :

ໄປພ້ອມໆ ກັບ ການປະຕິບັດໜ້າທີ່ເປັນພົນລະເມືອງດີແລ້ວ ເອື້ອຍນ້ອງພວກເຮົາຍັງຕ້ອງອອກແຮງ **ເຮັດໜ້າທີ່ ສ້າງຄອບຄົວແບບໃໝ່ດີ** , ສ້າງຄວາມສາມັກຄີ ປະກອບສ່ວນສ້າງວັດທະນະທຳໃໝ່ ສ້າງຄົນໃໝ່ສັງຄົມນິຍົມ .

* <u>ສ້າງຄອບຄົວແບບໃໝ່ດີ</u> : "ຄອບຄົວແມ່ນຈຸລັງຂອງສັງຄົມ ", ການສ້າງຄອບຄົວແບບໃໝ່ແມ່ນ ຄວາມຮັບຜິດຊອບຂອງໝົດສັງຄົມ ແຕ່ໃນນັ້ນແມ່ຍິງພວກເຮົາມີຄວາມສາມາດ ແລະ **ມີ**ບົດບາດສຳຄັນ .

ໃນສະພາບຈຸດພິເສດທາງດ້ານເສດຖະກິດ - ສັງຄົມ **ຂອງປະເທດ**ເຮົາໃນປະຈຸບັນຍັງຕໍ່າ , ຮີດຄອງປະເພນີອັນຫຼາກຫຼາຍ ແລະ ຮ່ອງຮອຍເສດ

ເຫຼືອຂອງລະບອບສັກດີນາ ລ່າເມືອງຂຶ້ນແບບເກົ່າ ແລະ ໃຫມ່ປະໄວ້ ຍັງຫນັກຫນ່ວງໃນແນວຄິດ ຂອງສັງຄົມ , ບັນຫາຄອບຄົວ ແລະ ການສ້າງຄອບຄົວແບບໃຫມ່ ຍັງພົບຄວາມຫຍຸ້ງຍາກສັບສົນ , ສະນັ້ນ ພວກເຮົາ ສະເຫນີໃຫ້ພັກ - ລັດຈົ່ງມອບໃຫ້ອົງການ ສິດອຳນາດໃດ ຫນຶ່ງ ຮັບຜິດຊອບ ແລະ ເປັນເຈົ້າການສົມທົບ ກັບ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ວາງທິດທາງແຜນການລະອຽດ ກ່ຽວກັບບັນຫາຄອບຄົວ, ວາງມາດຕະຖານສ້າງຄອບຄົວແບບໃຫມ່ ແລະ ຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ,ສະຫະພັນແມ່ຍິງລາວພວກເຮົາ ຂໍປະກອບສ່ວນເຂົ້າໃນວຽກງານນີ້ຢ່າງຕັ້ງຫນ້າ

- ໃນຂອບເຂດພາລະບົດບາດຂອງຕົນ ສະຫະພັນແມ່ຍິງ ພວກ ເຮົາຕ້ອງເຮັດບາງວຽກຕົ້ນຕໍດັ່ງນີ້ :

- ເອື້ອຍນ້ອງແມ່ຍິງພວກເຮົາ ນອກຈາກທີ່ເຮັດຫນ້າທີ່ຂອງ ພົນລະເມືອງດີແລ້ວ ພວກເຮົາຕ້ອງເປັນເຈົ້າການສົມທົບ ກັບ ຜູ້ເປັນຜົວ ເພື່ອພ້ອມກັນກໍ່ສ້າງຄອບຄົວໃຫ້ກາຍເປັນຄອບຄົວແບບໃຫມ່ ມີຄວາມຮັກແພງ ຖືກຕ້ອງປອງດອງກັນ , ບໍລິສຸດຕໍ່ກັນ ( ຜົວດຽວ ເມຍດຽວ ) ມີ ຄວາມສະເຫມີພາບ , ຊ່ວຍເຫຼືອກໍ່ສ້າງກັນ ພ້ອມກັນກ້າວຫນ້າ, ພ້ອມກັນ ເປັນແບບຢ່າງ ແລະ ສຶກສາອົບຮົມລູກເຕົ້າ ໃຫ້ກາຍເປັນຄົນຮູ້ຜູ້ດີ, ຮູ້ຈັກຕັ້ງຊີວິດການເປັນຢູ່ດີ ສອດຄ່ອງ ກັບ ແນວທາງນະໂຍບາຍຂອງພັກ ແລະ ລັດ ເຮົາ .

ແມ່ຍິງພວກເຮົາສູ້ຊົນລົບລ້າງຮ່ອງຮອຍເສດເຫຼືອ ຂອງລະບອບສັງຄົມເກົ່າ ເປັນຕົ້ນແມ່ນ ການແຕ່ງດອງຂອງແມ່ຍິງ ໃນອາຍຸບໍ່ທັນ ເຕັມກະສຽນ ( ລຸ່ມ 18 ປີ ) ການເປັນເມຍນ້ອຍ ເມຍລັບ ທີ່ບໍ່ຖືກກົດຫມາຍ ,ການການຫຼິ້ນການຟຸມເຟືອຍ ແລະ ການທຸບຕີ ແຕະຕ້ອງເຖິງຮ່າງກາຍຢ່າງ ຜິດກົດຫມາຍ . ເພື່ອປົກປ້ອງເອົາຄວາມສຸກໃນຄອບຄົວ , ເພື່ອຄວາມ ສະເຫມີພາບ ແລະ ຄວາມເປັນທຳ ໃນສັງຄົມ .

- ຄະນະສະຫະພັນແມ່ຍິງຕ້ອງເອົາໃຈໃສ່ ສຶກສາອົບຮົມໃຫ້ ທຸກຄົນເຂົ້າໃຈວ່າ : ຜົວເມັຽແມ່ນ ຄູ່ຊີວິດ, ການກໍ່ສ້າງຄອບຄົວນຳກັນ ແມ່ນຈາກຄວາມຮັກ ມັກອັນແທ້ຈິງຂອງທັງສອງຝ່າຍ ສະນັ້ນຜູ້ເປັນຜົວ ແລະ ເມັຽຕ້ອງຮັບຮູ້ ແລະ ເຂົ້າໃຈແຈ້ງຄວາມຮັບຜິດຊອບຂອງຕົນຕໍ່ກັນ ແລະ ຕໍ່ຄອບຄົວ. ຕ້ອງສ້າງທັດສະນະກ່ຽວກັບຄວາມຮັກ ມັກ ແລະ ການ ແຕ່ງດອງແຕ່ຍັງເປັນໂສດໃຫ້ຖືກຕ້ອງ ແລະ ຈິງໃຈຕໍ່ກັນ .

- ແມ່ຍິງພວກເຮົາ ຕ້ອງເຮັດໜ້າທີ່ຂອງຜູ້ໃຫ້ກຳເນີດ , ໃຫ້ຄວາມຮັກ ແລະ ເບິ່ງແຍງລ້ຽງດູ ສຶກສາອົບຮົມລູກເຕົ້າ . ການໃຫ້ກຳເນີດກໍ່ລ້ວນແຮງງານໃນອະນາຄົດມີຄວາມໝາຍສຳຄັນທີ່ສຸດ ສະນັ້ນ ຈຶ່ງຕ້ອງເອົາໃຈໃສ່ປົກປັກຮັກສາສຸຂະພາບ ແລະ ແຮງງານແມ່ຍິງຢ່າງເປັນປະຈຳ.

+ ເອົາໃຈໃສ່ເບິ່ງແຍງລ້ຽງດູສັ່ງສອນລູກເຕົ້າ ໃຫ້ເຕີບໃຫຍ່ ແຂງແຮງ, ມີວິຊາສະເພາະມີຄຸນສົມບັດດີ ກາຍເປັນຮຸ່ນຄົນສືບທອດພາລະກິດປະຕິວັດໃນອະນາຄົດ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ .

ຢາກເຮັດໜ້າທີ່ດັ່ງກ່າວໄດ້ດີ ເອື້ອຍນ້ອງຕ້ອງເອົາໃຈໃສ່ ຊອກຮູ້ຮ່ຳຮຽນບົດຮຽນພື້ນຖານ ທີ່ມີວິທະຍາສາດໃນການຮັກສາອະນາໄມ ກັນພະຍາດ , ການເກີດລູກ, ລ້ຽງດູສັ່ງສອນ ລູກເຕົ້າ, ເອົາໃຈໃສ່ປັບປຸງ ຕົນເອງໃຫ້ເປັນແບບຢ່າງອັນດີງາມໃຫ້ລູກ , ສ້າງເງື່ອນໄຂດີທີ່ສຸດ ເພື່ອເຮັດຫຼອນໜ້າທີ່ ຂອງຜູ້ເປັນແມ່ ທີ່ດີຂອງລູກ .

ເອື້ອຍນ້ອງພວກເຮົາ ຈຶ່ງເອົາໃຈໃສ່ປັບປຸງຍົກລະດັບຄວາມຮູ້ ຄວາມສາມາດດ້ານການສຶກສາ ການເມືອງ ແລະ ວິຊາສະເພາະຂອງຕົນ ໃຫ້ສູງຂຶ້ນ ສາມາດເປັນເຈົ້າຕົນເອງ ແລະ ເປັນເຈົ້າຄອບຄົວໄດ້ . ພ້ອມກັນນັ້ນກໍ່ຕ້ອງເອົາໃຈໃສ່ປັບປຸງຕົວເອງໃນໜ້າທີ່ເປັນແມ່ບ້ານ ການເຮືອນທີ່ດີ, ມີຄວາມບໍລິສຸດຈິງໃຈ, ດຸໝັ່ນພາກພຽນ , ສຸພາບຮຽບຮ້ອຍ ສົມເປັນ ແມ່

ຍິງ 3 ດີ 2 ໜ້າທີ່ , ປະກອບສ່ວນສ້າງວັດທະນະທຳໃໝ່ , ສ້າງ ຄົນໃໝ່ ສັງຄົມນິຍົມຢ່າງຕັ້ງໜ້າ .

* <u>ສ້າງຄວາມສາມັກຄີ</u> :

ສາມັກຄີ ແມ່ນມູນເຊື້ອອັນດີງາມຂອງຊາດລາວເຮົາ. ສຸພາສິດ ສອນວ່າ : "ໄມ້ລຳດຽວລ້ອມຮົ້ວບໍ່ໄດ້ , ໄຜ່ບໍ່ພ້ອມເມືອງບານບໍ່ເຮືອງ " ; "ສາມັກຄີພາໃຫ້ເຮົາຢູ່ ແຕກໝູ່ພາໃຫ້ເຮົາຕາຍ". ພຶດຕິກຳຕົວຈິງ ໄດ້ຢັ້ງຢືນໃຫ້ເຫັນແລ້ວວ່າ: ເຖິງວ່າພົນລະເມືອງລາວມີພຽງແຕ່ 3 ລ້ານກໍ່ຕາມ ແຕ່ຍ້ອນມີຄວາມສາມັກຄີປວງຊົນທັງຊາດ ເປັນຈິດໜຶ່ງໃຈດຽວເປັນປຶກແຜ່ນແໜ້ນໜາ ໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ປະຊາຊົນລາວພວກເຮົາ ຈຶ່ງສາມາດຕີເອົາຊະນະ ຈັກກະພັດໃຫຍ່ 2 ໂຕ ,ຍາດເອົາເອກະລາດ, ເອກະພາບ , ປະຊາທິປະໄຕ ແລະ ກໍ່ສ້າງປະເທດຊາດ ສັງຄົມນິຍົມ ຄືທຸກວັນນີ້ .

ສະນັ້ນ ເພື່ອເສີມຂະຫຍາຍມູນເຊື້ອດັ່ງກ່າວນັ້ນ ແມ່ຍິງພວກເຮົາ ຈຶ່ງພ້ອມກັນອອກແຮງ ເພີ່ມທະວີປັບປຸງຄວາມສາມັກຄີພາຍໃນ ການຈັດຕັ້ງ , ສາມັກຄີຊາດ ແລະ ສາມັກຄີສາກົນໃຫ້ແໜ້ນແຟ້ນ .

- ກ່ອນອື່ນແມ່ນ ສ້າງຄວາມສາມັກຄີຮັກແພງ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ພາຍໃນການຈັດຕັ້ງສະຫະພັນແມ່ຍິງດ້ວຍຄວາມຈິງໃຈ , ພ້ອມກັນປັບປຸງອົງການຈັດຕັ້ງໃຫ້ເຕີບໃຫຍ່ເຂັ້ມແຂງ, ເປັນເອກະພາບທາງດ້ານແນວຄິດ , ການຈັດຕັ້ງ ແລະ ການກະທຳຕົວຈິງ , ເປັນໃຈກາງແຫ່ງ ຄວາມສາມັກຄີແມ່ຍິງບັນດາເຜົ່າ, ບັນດາຊັ້ນຄົນໃນສັງຄົມ , ເປັນຕົວແທນແຫ່ງສິດຜົນປະໂຫຍດອັນແທ້ຈິງຂອງແມ່ຍິງລາວ .

- ສ້າງຄວາມສາມັກຄີແມ່ຍິງ ແລະ ປະຊາຊົນລາວ ບັນດາເຜົ່າ ໃນທຸກຊັ້ນຄົນໃຫ້ກວ້າງຂວາງ, ແໜ້ນແກ່ນ , ຮັກແພງ ຕຸ້ມທໍ່ກັນ ເບິ່ງແຍງຊ່ວຍເຫຼືອກັນ ຢ່າງແທ້ຈິງ, ຕາມແນວຄິດບັງບຽດ ສຽດສີ, ເວົ້າຖອຍທານ

ຂອັນກັນ , ແນວຄິດລັບແຄບ ເຫັນແກ່ຕົວ ແລະ ອື່ນໆ ...

- ສ້າງຄວາມສາມັກຄີສາກົນດີ, ເພີ່ມທະວີມິດຕະພາບ ແລະ ການຮ່ວມມືຮອບດ້ານ ກັບ ແມ່ຍິງບັນດາປະເທດ ສັງຄົມນິຍົມອ້າຍນ້ອງ ເປັນຕົ້ນແມ່ນ ກັບ ແມ່ຍິງຫວຽດນາມ, ກຳປູເຈຍ ແລະ ແມ່ຍິງໂຊວຽດ ເພີ່ມທະວີມິດຕະພາບ ແລະ ການຮ່ວມມືກັບປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຕ່າງໆ , ສະໜັບສະໜູນຂະບວນການຕໍ່ສູ້ຂອງແມ່ຍິງ ບັນດາປະຊາຊາດທີ່ກ້າວໜ້າໃນໂລກ ເພື່ອສັນຕິພາບ , ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ການຮ່ວມມື .

ງ./ <u>ວຽກງານພົວພັນການຕ່າງປະເທດ</u> :

ປະຕິບັດຕາມແນວທາງການຕ່າງປະເທດຂອງພັກປະຊາຊົນ ປະຕິວັດລາວໄດ້ວາງອອກໃນກອງປະຊຸມໃຫຍ່ຄັ້ງທີ່ III ນັ້ນ ພວກເຮົາຢືນຢັນວ່າ ການເພີ່ມທະວີ ແລະ ປັບປຸງຄວາມສາມັກຄີແບບສູ້ຮົບຢ່າງບໍ່ຢຸດຢັ້ງ , ການເປີດກວ້າງການຮ່ວມມືຮອບດ້ານ ກັບ ຫວຽດນາມ , ກຳປູເຈຍ ກັບ ສະຫະພາບໂຊວຽດ ແລະ ບັນດາປະເທດອ້າຍນ້ອງ ໃນວົງຄະນະຍາດ ສັງຄົມນິຍົມນັ້ນ ເປັນແນວທາງການຕ່າງປະເທດ ອັນສະເໝີຕົ້ນ ສະເໝີປາຍຂອງພັກ ແລະ ລັດເຮົາ ເພາະສະນັ້ນແມ່ຍິງລາວພວກເຮົາ ຈະເພີ່ມທະວີຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ກັບ ແມ່ຍິງຫວຽດນາມ ແລະ ກຳປູເຈຍ ຕາມຈິດຕະນາການໃໝ່ໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ , ປະກອບສ່ວນຍາດເອົາໄຊຊະນະໃນພາລະກິດ ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ ຂອງທັງ 3 ປະເທດ; ເພີ່ມທະວີຄວາມສາມັກຄີ ມິດຕະພາບອັນຍິ່ງໃຫຍ່ ແລະ ການຮ່ວມມືຮອບດ້ານ ກັບ ແມ່ຍິງໂຊວຽດ ແລະ ບັນດາປະເທດສັງຄົມນິຍົມ ອ້າຍນ້ອງອື່ນໆ ນັ້ນມັນເປັນປັດໃຈອັນໜຶ່ງ ທີ່ສຳຄັນ ປະກອບສ່ວນເຂົ້າໃນໄຊຊະນະຂອງປະຊາຊົນເຮົາ ໃນໄລຍະປະຕິວັດສະເພາະໜ້າ ແລະ ຍາວນານ , ພວກເຮົາ

ສະຫນັບສະຫນູນຢ່າງແຂງແຮງບັນດາຂໍ້ລິເລີ່ມ ອັນສຳຄັນຂອງ ສະຫະພາບໂຊວຽດ ແນໃສ່ຢຸດຕິການຊວງຊິງປະກອບອາວຸດ , ລຶບລ້າງ ໄພອັນຕະລາຍແຫ່ງສົງຄາມນິວເຄລຽຣ ເພື່ອສັນຕິພາບ ແລະ ຄວາມປອດໄພຂອງບັນດາປະຊາຊາດ , ເພີ່ມທະວີການພົວພັນມິດຕະພາບ ແລະ ການຮ່ວມມື ກັບບັນດາປະເທດບໍ່ຮ່ວມກຸ່ມໃນການຕໍ່ສູ້ ຕ້ານຈັກກະພັດນິຍົມ ແລະ ອິດທິກຳລັງປະຕິການສາກົນ , ຕ້ານລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃຫມ່ ,ຕ້ານການຊວງຊິງປະກອບອາວຸດ ເພື່ອສັນຕິພາບ, ຄວາມປອດໄພສາກົນ ແລະ ການພັດທະນາ , ເພື່ອລະບຽບເສດຖະກິດສາກົນໃຫມ່ ທີ່ຖືກຕ້ອງ ແລະຍຸດຕິທຳ .

ຕັ້ງຫນ້າເຂົ້າຮ່ວມການເຄື່ອນໄຫວຂອງສະຫະພັນແມ່ຍິງປະຊາທິປະໄຕສາກົນ , ສະຫນັບສະຫນູນຢ່າງແຂງແຮງ ການຕໍ່ສູ້ຂອງແມ່ຍິງ ແລະ ປະຊາຊົນອາຊີ , ອາຟະລິກກາ ແລະ ອາເມລິກາລາຕິນ ຕ້ານການແຊກແຊງ ແລະ ຮຸກຮານ, ນະໂຍບາຍລ່າເມືອງຂຶ້ນແບບເກົ່າ ແລະ ໃຫມ່ຂອງ ລັດທິ ຈັກກະພັດ ຕ້ານລັດທິຈຳແນກເຊື້ອຊາດຜິວພັນ , ລັດທິອາປາກທາຍ ເພື່ອຄວາມເປັນເອກະລາດ ແຫ່ງຊາດ . ແມ່ຍິງລາວພວກເຮົາເດັດດ່ຽວສະຫນັບສະຫນູນການຕໍ່ສູ້ຂອງຂະບວນແມ່ຍິງ , ກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານໃນບັນດາປະເທດທຶນນິຍົມ ແລະ ອົງການຈັດຕັ້ງ ແມ່ຍິງທີ່ກ້າວຫນ້າໃນໂລກ ເພື່ອສັນຕິພາບ , ປະຊາທິປະໄຕ , ເພື່ອສິດແຫ່ງການດຳລົງຊີວິດ ແລະ ຄວາມກ້າວຫນ້າທາງສັງຄົມ .

ໃນຖານະທີ່ເປັນຜູ້ໄດ້ຜ່ານຜ່າ ຄວາມຫຍຸ້ງຍາກ ອຸປະສັກ ແລະການເສັຽສະລະໃນການຕໍ່ສູ້ ຕ້ານຈັກກະພັດຮຸກຮານ ໃນຫຼາຍສິບປີຜ່ານມາ ແມ່ຍິງລາວຮູ້ດີສົງຄາມ, ສົງຄາມແມ່ນ ຄວາມຫາຍຍະນະ ສະນັ້ນແມ່ຍິງແລະປະຊາຊົນລາວພວກເຮົາ ບໍ່ມີຄວາມປາດຖະຫນາໃດທີ່ສູງສົ່ງກວ່າ ແລະແຮງກ້າກວ່າຄວາມມີຊີວິດ ຢູ່ໃນສັນຕິພາບ ເພື່ອສ້າງສາປະເທດຊາດ

ເພື່ອຄວາມຢູ່ເຢັນເປັນສຸກ ຂອງປະຊາຊົນ, ຂອງແມ່ຍິງ ແລະ ເດັກນ້ອຍ.

ພວກເຮົາຂໍສະແດງຄວາມສະໜັບສະໜູນ ແລະ ເປັນເອກະສັນ ກັບ ນະໂຍບາຍຂອງພັກປະຊາຊົນປະຕິວັດລາວ ແລະ ລັດຖະບານ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ທີ່ຖືເອົາການຕໍ່ສູ້ ເພື່ອ ປົກປັກຮັກສາສັນຕິພາບຢູ່ໃນອາຊີ ອາຄະເນ, ອາຊີ - ປາຊີຟິກ ເປັນໜ້າທີ່ສຳຄັນຍິ່ງເປັນຕົ້ນແມ່ນ ສະໜັບສະໜູນຢ່າງສຸດອົກສຸດໃຈ ຂໍ້ສະເໜີ 7 ຂໍ້ ຂອງ ລັດຖະບານ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ທີ່ກອງປະຊຸມຈາກາຕາ ວ່າດ້ວຍບັນດາຫຼັກການສ້າງຕັ້ງເຂດແຫ່ງສັນຕິພາບ , ມິດຕະພາບ ແລະ ການຮ່ວມມືໃນຂົງເຂດອາຊີ ອາຄະເນ . ພວກເຮົາສະໜັບສະໜູນ ຢ່າງເຕັມປ່ຽມຂໍ້ສະເໜີ 7 ຂໍ້ ທີ່ມີລັກສະນະສ້າງສັນ ແລະ ຕົວຈິງ ສະແດງເຖິງຫຼັກໝັ້ນຂອງ ສາທາລະນະລັດປະຊາຊົນ ກຳປູເຈຍ ອາຍນອງ .

ແມ່ຍິງລາວພວກເຮົາ ພ້ອມແລ້ວຈະຮ່ວມມື ກັບ ແມ່ຍິງບັນດາປະເທດອາຊຽນ ແລະ ບັນດາປະເທດອື່ນໆ ໃນພາກພື້ນ ເພື່ອຜົນປະໂຫຍດລວມຂອງແມ່ຍິງ ແລະ ເພື່ອສັນຕິພາບ , ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ , ປະກອບສ່ວນເຂົ້າໃນພາລະກິດ ສັນຕິພາບຢູ່ອາຊີ ປາຊີຟິກ ແລະ ໃນໂລກ .

ພວກເຮົາມີຄວາມຫວັງຢາກຂະຫຍາຍ ແລະ ເພີ່ມທະວີ ການພົວພັນຮ່ວມມືກັບ ແມ່ຍິງໄທ ເພື່ອປະກອບສ່ວນໃນການເຮັດໃຫ້ມິດຕະພາບ ແລະ ຄວາມເຂົ້າອົກເຂົ້າໃຈຊຶ່ງກັນ ແລະ ກັນລະຫວ່າງປະຊາຊົນສອງຊາດລາວ-ໄທ ຖານບ້ານພີ່ເມືອງນ້ອງ ບ້ານໃກ້ເຮືອນຄຽງ, ເຮັດໃຫ້ຊາຍແດນ ເປັນຊາຍແດນມິດຕະພາບ ແລະ ແມ່ນ້ຳຂອງ ແຫ່ງສັນຕິພາບລະຫວ່າງ 2 ປະເທດ ບົນພື້ນຖານຖະແຫຼງການຮ່ວມ ລາວ - ໄທ 2 ສະບັບ ທີ່ລັດຖະບານ 2 ປະເທດໄດ້ເຊັນກັນໃນປີ 1979. ແຕ່ເປັນໜ້າເສຍດາຍທີ່ເຫັນວ່າ ບັນຫາເກີດຂຶ້ນຢູ່ຕາແສງນາບໍ່ນ້ອຍ ເມືອງບໍ່ແຕນຂອງລາວ ແລະ ເມືອງ ຊາດ

ຕະການຂອງໄທ ກໍ່ຍັງບໍ່ທັນໄດ້ຮັບການແກ້ໄຂ, ພວກເຮົາຫວັງວ່າ ລັດຖະບານລາຊະອານາຈັກໄທ ຈະສືບຕໍ່ ປຶກສາຫາລື ກັບ ລັດຖະບານ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເພື່ອແກ້ໄຂບັນຫາທີ່ຍັງຄ້າງຄາ ໃນບໍລິເວນ ດັ່ງກ່າວໃຫ້ລຸລ່ວງໄປ , ຖືກຕ້ອງຕາມສັນຍາຝະລັ່ງ - ສະຫຍາມ ປີ 1907 ໂດຍໄວ, ເພື່ອຜົນປະໂຫຍດຂອງແມ່ຍິງ ແລະ ປະຊາຊົນ ສອງຊາດ ລາວ - ໄທ .

III.- ປັບປຸງບູລະນະກົງຈັກການຈັດຕັ້ງ ແລະ ກໍ່ສ້າງພະນັກງານທີ່ເຮັດວຽກແມ່ຍິງໃຫ້ຫນັກແຫນ້ນ , ສາມາດຮັບໃຊ້ຫນ້າທີ່ການເມືອງໃນໄລຍະໃຫມ່ຂອງພັກໃຫ້ປາກົດຜົນເປັນຈິງ :

ເພື່ອເຮັດຫຼອນບັນດາທິດທາງຫນ້າທີ່ລວມທີ່ໄດ້ກ່າວມາຂ້າງເທິງ ນັ້ນ, ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ປັບປຸງບູລະນະການຈັດຕັ້ງສະຫະພັນ ແມ່ຍິງທຸກຂັ້ນ ນັບແຕ່ສູນກາງລົງຮອດພື້ນຖານໃຫ້ຫນັກແຫນ້ນເຂັ້ມແຂງ ມີ ການເຄື່ອນໄຫວວຽກງານຢ່າງເບື່ອງມິດລຽນຕິດ ແລະ ມີປະສິດທິຜົນດີກວ່າເກົ່າ, ໃນຂຸມປີຕໍ່ຫນ້ານີ້ ພວກເຮົາຕ້ອງເຮັດບັນດາວຽກລະອຽດດັ່ງນີ້ :

1. ຕັ້ງຫນ້າປັບປຸງກົງຈັກການຈັດຕັ້ງຂັ້ນຕ່າງໆ ຂອງສະຫະພັນແມ່ຍິງໃຫ້ກະທັດລັດເບົາບາງ ແຕ່ເຂັ້ມແຂງ ແລະ ມີປະສິດທິພາບ :

-ກ່ອນອື່ນຫມົດຕ້ອງເລັ່ງໃສ່ປັບປຸງການຈັດຕັ້ງແມ່ຍິງຂັ້ນຮາກຖານ ຂັ້ນເມືອງ(ຂັ້ນບ້ານ, ສະຫະກອນ, ໂຮງຈັກ ໂຮງງານ, ໂຮງຮຽນ, ໂຮງຫມໍ, ກົມກອງການຜະລິດ ... ) ຕ້ອງເອົາໃຈໃສ່ເປັນພິເສດ ເຂດຍຸດທະສາດ, ເຂດເຜົ່າຊົນ :

+ ເອົາໃຈໃສ່ປັບປຸງຄະນະສະຫະພັນແມ່ຍິງຂັ້ນຮາກຖານຂັ້ນເມືອງໃຫ້ເປັນຕົວແທນແຫ່ງສິດຜົນປະໂຫຍດຂອງແມ່ຍິງລາວ ບັນດາເຜົ່າ ສາມາດເຕົ້າໂຮມຄວາມສາມັກຄີ ແລະ ເປັນເອກະພາບທາງດ້ານການເມືອງແນວຄິດ ແລະ ການກະທຳ, ມີຄວາມສາມາດຈັດຕັ້ງເຄື່ອນໄຫວວຽກງານ ໂດຍ

ຕິດແທ້ນ ກັບ ຂະບວນການຕົວຈິງ ຂອງກົມກອງ ທ້ອງຖິ່ນ ໃຫ້ໄດ້ດີ. ຮູ້ປະສານສົມທົບແໜ້ນ ກັບ ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆ ຕັ້ງໜ້າຍາດແຍ່ງການຊີ້ນຳ ນຳພາຂອງຄະນະພັກ ແລະ ອຳນາດການປົກຄອງທ້ອງຖິ່ນຢ່າງເປັນປະຈຳ ເພື່ອນຳພາແມ່ຍິງປະຕິບັດແນວທາງ, ແຜນນະໂຍບາຍ- ນະໂຍບາຍຂອງພັກ - ລັດ ແລະ ມະຕິຕ່າງໆ ຂອງຂັ້ນເທິງໃຫ້ປາກົດເປັນຈິງ. ຢາກເຮັດໄດ້ແນວນັ້ນພວກເຮົາຕ້ອງເລັ່ງໃສ່ ປັບປຸງບູລະນະການຈັດຕັ້ງແມ່ຍິງ ຂັ້ນເມືອງໃຫ້ມີຄວາມສາມາດນຳພາ ຮອບດ້ານ ແລະ ຊີ້ນຳຮາກຖານໄດ້ .

+ ເອົາໃຈໃສ່ຈັດຕັ້ງ ແລະ ຊີ້ນຳ ນຳພາໜ່ວຍແມ່ຍິງ ໃນຂອບເຂດຂອງຕົນຮັບຜິດຊອບ ເຊິ່ງແມ່ນການຈັດຕັ້ງປະກອບດ້ວຍເອື້ອຍນ້ອງ ບັນດາເຜົ່າໃນທຸກຊັ້ນຄົນເຂົ້າຮ່ວມການເຄື່ອນໄຫວ ວຽກງານຕ່າງໆ ທີ່ມີຜົນປະໂຫຍດໃນການດຳລົງຊີວິດດ້ານຈິດໃຈ ແລະ ດ້ານການເປັນຢູ່ຂອງ ຄອບຄົວ ປະຕິບັດຄຳຂວັນ 3 ດີ 2 ໜ້າທີ່ຂອງແມ່ຍິງໃຫ້ໄດ້ດີ .

- ສຳລັບຄະນະສະຫະພັນແມ່ຍິງຂັ້ນແຂວງ, ກຳແພງນະຄອນ, ກະຊວງ ແລະ ອົງການທຽບເທົ່າແມ່ນ ຕ້ອງຕັ້ງໜ້າຍົກລະດັບຄວາມຮູ້ ເພື່ອສາມາດເປັນເຈົ້າການນຳພາ ຈັດຕັ້ງປະຕິບັດທຸກວຽກງານໄດ້ດີ ຮູ້ນຳເອົາທິດທາງ ແຜນນະໂຍບາຍຂອງຂັ້ນເທິງ ຫັນມາເປັນວຽກລະອຽດ , ແທດເໝາະ ກັບ ສະພາບ ແລະ ເງື່ອນໄຂຕົວຈິງຂອງທ້ອງຖິ່ນ ກົມກອງ. ກາຫານສູ້ຊົນຍົກບັນຫາທີ່ກ່ຽວຂ້ອງ ເຖິງແມ່ຍິງ ສະເໜີເພື່ອຂໍຄຳເຫັນແນະນຳ ແລະ ແກ້ໄຂຈາກຂັ້ນນຳ; ໃກ້ຊິດຕິດແທດຮາກຖານ ກຳໄດ້ຄວາມຄິດຂອງໝອງໃຈ, ຄວາມມຸ່ງມາດປາດຖະໜາຂອງເອື້ອຍນ້ອງ ແລະ ປະຊາຊົນ ເພື່ອສ່ອງແສງໃຫ້ຂັ້ນເທິງ, ປະຕິບັດລະບອບລາຍງານຕາມສາຍຕັ້ງໃຫ້ ປົກກະຕິ .

- ຄະນະສະຫະພັນແມ່ຍິງຂັ້ນສູນກາງ ຕ້ອງຍົກລະດັບຄວາມສາມາດ

ຄົ້ນຄວ້າເຊື່ອມຊຶມແນວທາງ - ແຜນນະໂຍບາຍຂອງພັກ - ລັດ ແລະ ຫັນເປັນອັນລະອຽດ ໂດຍສົມທົບ ກັບ ວຽກງານຂອງແມ່ຍິງໃຫ້ໄດ້ດີ, ຊີ້ນຳຈັດຕັ້ງປະຕິບັດ ແລະ ສະຫລູບຖອດຖອນບົດຮຽນນຳສະເໜີໃຫ້ ພັກ-ລັດ ແລະ ສ່ອງແສ່ງກ່ຽວກັບ ສະພາບການປະຕິບັດນະໂຍບາຍກໍ່ດີ ສະເໜີ ນະໂຍບາຍໃຫຍ່ຕ່າງໆ ກ່ຽວກັບແມ່ຍິງ, ເພີ່ມທະວີການສົມທົບພົວພັນແໜ້ນກັບອົງການຈັດຕັ້ງພັກ - ລັດ, ຂະແໜງການ ແລະ ອົງການຈັດຕັ້ງ ມະຫາຊົນ ດ້ວຍກັນ .

2. <u>ອອກແຮງກໍ່ສ້າງຄຸນແຖວພະນັກງານເຮັດວຽກແມ່ຍິງໃຫ້ສົມຄູ່ກັບໜ້າທີ່ການເມືອງໃໝ່ຂອງ ສະຫະພັນແມ່ຍິງ</u> :

ໃນໄລຍະຜ່ານມາ ພວກເຮົາຍັງຕົກຢູ່ໃນສະພາບຂາດແຄນ ພະນັກງານທີ່ເຮັດວຽກແມ່ຍິງ ແຕ່ສິ່ງສຳຄັນໜຶ່ງ ທີ່ມີລັກສະນະຕັດສິນແມ່ນໜ້າທີ່ການເມືອງໃນໄລຍະໃໝ່ ຂອງສະຫະພັນແມ່ຍິງ ມັນຮຽກຮ້ອງໃຫ້ພະນັກງານແມ່ຍິງ ພວກເຮົາຕ້ອງມີທັງປະລິມານ ແລະ ຄຸນນະພາບ, ມີນ້ຳໃຈຮັບຜິດຊອບສູງ , ມີມານະຈິດອັນເລິກເຊິ່ງໃນວຽກງານແມ່ຍິງ ເພື່ອພາລະກິດປົດປ່ອຍແມ່ຍິງ ຢ່າງແທ້ຈິງ. ສະນັ້ນ ໃນປີຕໍ່ໜ້າ ພວກເຮົາຕ້ອງ ເລັ່ງລັດ ເຮັດໜ້າທີ່ນີ້ ຢ່າງເອົາຈິງ ເອົາຈັງແທ້ .

- ສະຫະພັນແມ່ຍິງຂັ້ນຕ່າງໆ ອີງໃສ່ 3 ມາດຖານຂອງພະນັກງານໃນໄລຍະໃໝ່ ທີ່ກອງປະຊຸມໃຫຍ່ຄັ້ງທີ III ຂອງພັກວາງອອກ ໂດຍສົມທົບແໜ້ນ ກັບ ຂະບວນການແຂ່ງຂັນ 3 ດີ 2 ໜ້າທີ່ ຂອງແມ່ຍິງເພື່ອເປັນການເຝິກຝົນຕົນເອງ ສ້າງເງື່ອນໄຂສູ້ຊົນໃຫ້ກາຍເປັນສະມາຊິກພັກ , ປະກອບເຂົ້າຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ແລະ ສືບຕໍ່ບຳລຸງກໍ່ສ້າງໃຫ້ກາຍເປັນພະນັກງານສືບທອດ, ພະນັກງານຫລັກແຫລ່ງ .

- ມີແຜນການເລືອກເຟັ້ນເອົາພະນັກງານທີ່ດີ, ພະນັກງານເຜົ່າຊົນ ພະນັກງານໜຸ່ມນ້ອຍ ມີອະນາຄົດ ແລະ ໄດ້ຜ່ານວຽກງານຕົວຈິງ ອັນແນ່

ນອນ ເພື່ອສົ່ງໄປກໍ່ສ້າງຮອບດ້ານ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດໃຫ້ໄດ້ ...

- ເອົາໃຈໃສ່ບໍາລຸງກໍ່ສ້າງພະນັກງານ ກັບທີ່ ຕາມທິດທາງ ທັງເຮັດທັງຮຽນ, ຮຽນໃນວຽກງານຕົວຈິງ. ພອມກັນນັ້ນກໍ່ສັບຊ້ອນຜັດປ່ຽນກັນໄປຮຽນບໍາລຸງ ຍົກລະດັບການສຶກສາ, ທິດສະດີການເມືອງ ແລະ ຮຽນວິທະຍາສາດ- ເຕັກນິກ ອີກດ້ວຍ ເພື່ອຍົກລະດັບຄວາມຮູ້ ອັນພື້ນຖານ ໃຫ້ເອື້ອຍນ້ອງສາມາດເຮັດສໍາເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ .

- ອອກແຮງໂຄສະນາ ສຶກສາອົບຮົມໃຫ້ມະຫາຊົນແມ່ຍິງຮັບຮູ້ເຂົ້າໃຈຕໍ່ການຈັດຕັ້ງ ສະຫະພັນແມ່ຍິງ. ພວກເຮົາຍິນດີຮັບເອົາເອື້ອຍນ້ອງ ແມ່ຍິງບັນດາເຜົ່າທີ່ມີສັນຊາດລາວ, ອາຍຸ 16 ປີຂຶ້ນໄປ, ເຫັນດີເຫັນພ້ອມປະຕິບັດຕາມກົດລະບຽບ ແລະ ຫາວຫັນສະໝັກໃຈເຄື່ອນໄຫວວຽກງານ ຂອງສະຫະພັນແມ່ຍິງເຂົ້າຢູ່ໃນການຈັດຕັ້ງຂອງຕົນ ຢ່າງກວ້າງຂວາງ ແຕ່ນີ້ເຖິງກອງປະຊຸມໃຫຍ່ຄັ້ງທີ III ໃຫ້ໄດ້ 50% ຂອງມະຫາຊົນແມ່ຍິງ ໃນປະຈຸບັນ, ເປີດກວ້າງຕາໜ່າງການຈັດຕັ້ງ ໂດຍສະເພາະແມ່ນ ເລັ່ງ ໃສ່ເຂດຍຸດທະສາດ, ເຂດເຜົ່າຊົນ,.. ກ້າວໄປເຖິງລົບລ້າງບ້ານຂາວໃຫ້ໄດ້ 50% ຂອງຈໍານວນບ້ານຂາວໃນປະຈຸບັນ.

3. <u>ຫັນປ່ຽນຮູບການເຄື່ອນໄຫວ ແລະ ດັດແປງແບບແຜນ ວິທີເຮັດວຽກ ຂອງສະຫະພັນແມ່ຍິງ</u> :

- ຄະນະສະຫະພັນແມ່ຍິງທຸກຂັ້ນຕ້ອງຫັນເອົາທຸກການເຄື່ອນໄຫວຂອງແມ່ຍິງໄປຮັບໃຊ້ໜ້າທີ່ການເມືອງຂອງພັກ. ພວກເຮົາບໍ່ອາດຮັກສາ ຮູບການເຄື່ອນໄຫວທີ່ມີລັກສະນະລວມໆ ງ່າຍດາຍ ແລະ ມີລັກສະນະສະເພາະຂອງແມ່ຍິງດີ ໃນສະໄໝສົງຄາມອີກແລ້ວ , ດຽວນີ້ສະຫະພັນແມ່ຍິງທຸກຂັ້ນຕ້ອງຫັນປ່ຽນການເຄື່ອນໄຫວຂອງຕົນໃຫ້ຕິດແໜ້ນກັບ ບັນດາຈຸດໝາຍເສດຖະກິດ - ສັງຄົມ ຂອງພັກ - ລັດ,ແບບວິທີເຄື່ອນໄຫວ ຕ້ອງກວ້າງຂວາງ

ເຂົ້າສູ່ແມ່ຍິງບັນດາເຜົ່າ ທຸກຊັ້ນຄົນໃນສັງຄົມ, ປະກອບສ່ວນ ສ້າງກິດຈະການຕ່າງໆ ເພື່ອຜົນປະໂຫຍດທາງເສດຖະກິດ ສັງຄົມຂອງຊາດ ໃນນັ້ນກໍ່ແມ່ນ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍລາວພວກເຮົາ ເປັນຕົ້ນແມ່ນ ການກໍ່ສ້າງເສັ້ນທາງ, ສ້າງຊົນລະປະທານ, ສ້າງໂຮງຮຽນ, ໂຮງໝໍ, ບ່ອນຝາກເດັກ, ໂຮງຮຽນອານຸບານກ້າວຂຶ້ນ ປະກອບອາຊີບ, ຫລຸດຜ່ອນການອອກແຮງງານໜັກດ້ວຍການດັດແປງເຄື່ອງມືນຳໃຊ້ ເຕັກນິກ ທີ່ເໝາະສົມ ພ້ອມທັງປົກປັກຮັກສາສຸຂະພາບໃຫ້ແມ່ຍິງ - ເດັກນ້ອຍໃຫ້ນັບມື້ນັບຂະຫຍາຍກວ້າງຂວາງ ແລະ ມີປະສິດທິຜົນສູງຂຶ້ນ .

ຮູບການເຄື່ອນໄຫວນັ້ນ ຈະຕ້ອງໄດ້ດຳເນີນໄປຢ່າງເນື່ອງນິດລຽນຕິດ ແລະ ເປັນຂະບວນຟົດຟື້ນ ສາມາດບັນລຸ ຜົນຕົວຈິງ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການກໍ່ສ້າງພື້ນຖານວັດຖຸ - ເຕັກນິກໃຫ້ ລະບອບສັງຄົມນິຍົມເທື່ອລະກ້າວ .

- ຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ຕ້ອງເອົາໃຈໃສ່ດັດແປງ ແບບແຜນ ວິທີເຮັດວຽກດີ ຈະເປັນປັດໃຈໜຶ່ງ ທີ່ສຳຄັນ ເພື່ອສົ່ງເສີມຄວາມສັກສິດ ຂອງການຈັດຕັ້ງປະຕິບັດ, ມັນຍັງແມ່ນມູນພາກໜຶ່ງ ທີ່ປະກອບສ້າງເປັນຄຸນສົມບັດ ແລະ ຄວາມສາມາດ ຂອງແຕ່ລະຄົນອີກດ້ວຍ, ສະນັ້ນ ຄະນະສະຫະພັນແມ່ຍິງຂັ້ນຕ່າງໆ ຕ້ອງສູ້ຊົນກຳຈັດປັດເປົ່າ ແລະ ລົບລ້າງແບບແຜນເຮັດວຽກແບບອາດຍາສິດ ບໍລິຫານເກືອກູນ, ຫ່າງເຫີນມະຫາຊົນ , ເຮັດວຽກແບບກວມລວມ, ຮັກສາເດີມ, ອັດຕະວິໄສ, ເຮັດວຽກບໍ່ມີແຜນການ, ບໍ່ມີການກວດກາຊຸກຍູ້, ມັກແຕ່ຮູບການ ແລະ ອື່ນໆ . ເພື່ອນຳໃຊ້ແບບແຜນວິທີເຮັດວຽກໃໝ່ແມ່ນ : ການເວົ້າ ແລະ ການກະທຳໄປພ້ອມກັນ, ລົງເລິກຕິດແທດກັບຕົວຈິງ ແລະ ອີງໃສ່ມະຫາຊົນ, ກຳໄດ້ສະພາບການຕົວຈິງ ເພື່ອວາງແຜນການປະຕິບັດຖືກຕ້ອງ, ກ້າຄິດ - ກ້າເຮັດ - ເຮັດວຽກມີຈຸດສຸມ - ເຮັດວຽກໃດມີຜົນຕົວຈິງວຽກນັ້ນ, ເອົາໃຈ

ໃສ່ນຳພາເປັນໝູ່ຄະນະ ບຸກຄົນຮັບຜິດຊອບຕາມຫລັກການລວມສູນ ປະຊາທິປະໄຕ. ເອົາໃຈໃສ່ຕິດຕາມການຈັດຕັ້ງປະຕິບັດຕົວຈິງ, ມີການສະຫລຸບສັງລວມ ແລະ ຖອດຖອນບົດຮຽນ .

– ຕອງເພີ່ມທະວີວຽກງານກວດກາ. ດັ່ງທ່ານເລນິນ ໄດ້ຊີ້ບອກວ່າ " ຖ້າບໍ່ມີການກວດກາກໍ່ໝາຍເຖິງວ່າ ບໍ່ມີການນຳພານັ້ນເອງ ". ການເພີ່ມທະວີວຽກງານກວດກາແມ່ນ ເພື່ອເສີມຂະຫຍາຍສິ່ງດີ, ດັດແປງແກ້ໄຂ ສິ່ງທີ່ຜິດພາດໃຫ້ທັນການ. ຕອງດຳເນີນການກວດກາ ແຕ່ເທິງລົງລຸ່ມ ແລະ ແຕ່ລຸ່ມຂຶ້ນເທິງ ເຊິ່ງມີເປົ້າໝາຍ ເພື່ອປະຕິບັດແນວທາງນະໂຍບາຍຂອງ ພັກ – ລັດ ແລະ ວຽກງານຂອງສະຫະພັນແມ່ຍິງໃຫ້ ປາກົດຜົນເປັນຈິງ .

## ພາກທີ່ III

### ບັນດາວິທີການເພື່ອຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ່ II

ເພື່ອໃຫ້ທິດທາງໜ້າທີ່ຂອງສະຫະພັນແມ່ຍິງລາວ ໃນໄລຍະໃໝ່ຂອງການປະຕິວັດ ໄດ້ຮັບການຈັດຕັ້ງ ປະຕິບັດໃຫ້ເກີດດອກອອກຜົນຕົວຈິງ ຄະນະສະຫະພັນແມ່ຍິງຂັ້ນ ຕ່າງໆ ຕອງ :

1. ເອົາໃຈໃສ່ປັບປຸງການຈັດຕັ້ງໃຫ້ໜັກແໜ້ນ ເປັນຕົ້ນແມ່ນ ຫົວໜ້າ ແລະ ຮອງເປັນເຈົ້າການ, ມີຄວາມສາມາດຄົ້ນຄວ້າເຊື່ອມຊຶມ ທິດທາງໜ້າທີ່ດັ່ງກ່າວແລ້ວ ວາງເປັນແຜນການ ວຽກງານລະອຽດ, ແທດເໝາະກັບສະພາບຄວາມເປັນຈິງ ຕິດແໜ້ນ ກັບ ໜ້າທີ່ການເມືອງ ຂອງທ້ອງຖິ່ນ ແລະ ຄວາມສາມາດປະຕິບັດ ໃນນັ້ນຕອງເລັ່ງໃສ່ປະຕິບັດ ວຽກງານທີ່ເປັນຈຸດໜັກ ແລະ ຕົ້ນຕໍ ຂອງຕົນ .

2. ຄະນະສະຫະພັນແມ່ຍິງທຸກຂັ້ນຕ້ອງສ້າງແຜນການ ແລະ ຫັນລົງຮາກຖານຢ່າງແທ້ຈິງ, ຕ້ອງສ້າງທັດສະນະໃກ້ຊິດຕິດແທດ ກັບ ມະຫາຊົນ ຟັງຄວາມຄິດ ຄວາມເຫັນຂອງຂັ້ນລຸ່ມ ແລະ ຂອງມະຫາຊົນ ເພື່ອແກ້ໄຂບັນຫາຕ່າງໆ ທີ່ເຂົາເຈົ້າຂັດຂ້ອງຫມອງໃຈໃຫ້ທັນການ, ພ້ອມກັນນັ້ນກໍ່ຈະເປັນເງື່ອນໄຂດີທີ່ສຸດ ໃຫ້ການເກັບກຳສະພາບການຕົວຈິງຂອງທ້ອງຖິ່ນແລ້ວ ມີທີ່ການຊີ້ນຳ ນຳພາ, ຈັດຕັ້ງປະຕິບັດທຸກວຽກງານໄດ້ຮັບຜົນດີ, ພ້ອມກັນນັ້ນກໍ່ຕ້ອງ ເອົາໃຈໃສ່ສ້າງຈຸດທົດລອງຮອບດ້ານ ຫຼື ສ້າງດ້ານດຽວ ໂດຍອີງໃສ່ສະພາບເງື່ອນໄຂຕົວຈິງຂອງ ທ້ອງຖິ່ນ ກົມກອງ ແຕ່ຕ້ອງເລືອກເອົາຜູ້ທີ່ ມີຄວາມສາມາດ ມີບົດຮຽນຕົວຈິງ ໄປຮັບຜິດຊອບນຳພາໂດຍກົງ.

3. ຕ້ອງປະສານສົມທົບເປັນຢ່າງດີ ກັບ ການຈັດຕັ້ງຕ່າງໆ ເປັນຕົ້ນແມ່ນ ຕ້ອງຍາດແຍ່ງເອົາການຊີ້ນຳ - ນຳພາຂອງຄະນະພັກ ແລະ ອຳນາດການປົກຄອງເປັນປະຈຳ, ພ້ອມນັ້ນກໍ່ສົມທົບແຫນ້ນແລະ ອົງການຈັດຕັ້ງມະຫາຊົນ ແລະ ຂະແຫນງການຕ່າງໆ ເພື່ອຍາດເອົາການສະຫນັບສະຫນູນຮ່ວມມືຈາກອົງການດັ່ງກ່າວ, ທັງຕ້ອງຮູ້ປຸກລະດົມ ແລະ ນຳໃຊ້ກຳລັງແຮງສັງລວມຂອງອົງການແມ່ຍິງ ເພື່ອປະຕິບັດສຳເລັດຫນ້າທີ່ເປັນຢ່າງດີ .

4. ການຈັດຕັ້ງປະຕິບັດວຽກງານຕ້ອງມີການຕິດຕາມ, ກວດກາຊຸກຍູ້ ມີການສະຫລູບ ຕີລາຄາ ແລະ ຖອດຖອນບົດຮຽນດ້ານດີ- ດ້ານອ່ອນ, ແຕ່ລະໄລຍະ ຕ້ອງສ້າງເປັນຂະບວນການຟົດຟື້ນ ເນື່ອງນິດລຽນຕິດ. ເອົາໃຈໃສ່ກໍ່ສ້າງໃຫ້ໄດ້ພະນັກງານທີ່ດີເດັ່ນ ຈາກຂະບວນການ ແລະ ໄປຄຽງຄູ່ກັນນັ້ນ ກໍ່ຕ້ອງປັບປຸງການຈັດຕັ້ງໄປພ້ອມໆ ກັນ.

ເອື້ອຍນ້ອງ ທີ່ຮັກແພງທັງຫຼາຍ !

ໃນປະຈຸບັນນີ້ ພວກເຮົາພວມຢືນຕໍ່ຫນ້າສະພາບການ ຫນ້າທີ່ອັນໃຫຍ່ຫຼວງ ແລະ ຫນັກຫນ່ວງທີ່ສຸດ, ພວກເຮົາຕ້ອງຕັດສິນໃຈຜ່ານຜ່າທຸກຄວາມ

ຫຍຸ້ງຍາກ, ຄຽງບ່າ ຄຽງໄຫລ່ ກັບເພດຊາຍ ກ້າວຂຶ້ນປະຕິບັດມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີ່ III ຂອງພັກ, ມະຕິ 5 - 6 ( ສະໄໝທີ່ III ) ຂອງສູນກາງພັກ ແລະ ແຜນການ 5 ປີແຫ່ງລັດ ຄັ້ງທີ່ II ກໍຄື ມະຕິຂອງກອງປະຊຸມໃຫຍ່ ແມ່ຍິງຄັ້ງນີ້ ສຳເລັດຜົນຢ່າງມີໄຊ .

ແມ່ຍິງລາວ ບັນດາເຜົ່າ ມີຄວາມເຊື່ອໝັ້ນຢ່າງຕາຍໃຈ ຕໍ່ການ ນຳພາອັນປີຊາສາມາດ ສະຫຼາດສ່ອງໃສຂອງພັກ ປະຊາຊົນປະຕິວັດລາວ ອັນມີສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ເຄົາລົບຮັກ ເປັນຜູ້ ນຳໜ້າ ແລະ ຕ້ອຍມານະຈິດປະຕິວັດອັນເປັນມູນເຊື້ອຂອງຕົນ, ແມ່ຍິງລາວພວກເຮົາ ຈົ່ງບຸກບືນກ້າວຂຶ້ນ ເຮັດຫຼອນພາລະໜ້າທີ່ຂອງຕົນ, ປະກອບສ່ວນຢ່າງສົມກຽດເຂົ້າໃນການປະຕິບັດ 2 ໜ້າທີ່ຍຸດທະສາດຄື : ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ ເພື່ອ ຄວາມສົມບູນພູນສຸກຂອງປະຊາຊົນລາວ ບັນດາເຜົ່າ, ເພື່ອຄວາມກ້າວໜ້າ ແລະ ສິດສະເໝີພາບ ຂອງແມ່ຍິງລາວບັນດາເຜົ່າ ກ້າວຂຶ້ນປົດປ່ອຍແມ່ຍິງຢ່າງແທ້ຈິງ ແລະເພື່ອ ອະນາຄົດ ອັນສົດໃສຂອງລູກຫຼານພວກເຮົາ .



* ຫລານນ້ອຽເຍົາວະຊົນທັນວາຂຶ້ນອ່ານສານອວຽພອນກອງປະຊຸມໃຫຍ່ແມ່ຍິງ
ລາວທົ່ວປະເທດຄັ້ງທີ II



* ຫຼານນ້ອຍເຍົາວະຊົນເຂົ້າອວຍພອນກອງປະຊຸມໃຫຍ່ຂອງຜູ້ເປັນແມ່.

# ສານອວຍພອນ
## ກອງປະຊຸມໃຫຍ່ຄັ້ງທີ II ຂອງເຍົາວະຊົນທັນວາ

* ມື້ນີ້ ພວກລູກສຸດມ່ວນແມ້ໆ ແລະ ມີກຽດອັນສູງ
ທີ່ໄດ້ເປັນຕົວແທນ ໃຫ້ແກ່ເຍົາວະຊົນນ້ອຍ
ມາອວຍພອນໄຊໃຫ້ ກອງປະຊຸມຄັ້ງຍິ່ງໃຫຍ່
ທີ່ໄດ້ໄຂເອກອາງ ຜົນງານເອສະຫງາງາມນີ້ແລ້ວ

* ກອງປະຊຸມຄັ້ງນີ້ ແມ່ນຂີດໝາຍໃຫຍ່ໄຊງາມ
ມັນເປັນການທວນຄືນ ວຽກງານທີ່ວາງໄວ້
ຢູ່ໃນກອງປະຊຸມຄັ້ງ ປະຫວັດການປີແປດສີ່( 1984)
ມາເຖິງກອງປະຊຸມເທື່ອນີ້ ຜົນງານກ້າວກ່ວາເດີມ

* ຍອນພວກແມ ແລະ ປ້າ ພ້ອມພ່ຳຊຸມນາສາວ
ໄດ້ພາກັນບຸກບືນ ສ້າງຜົນງານເອົາໄວ້
ເພື່ອເອົາມາປະດັບໃຫ້ ກອງປະຊຸມຍິ່ງອີກຄັ້ງໃໝ່
ທີ່ຈະບັນທຶກໄວ້ ເປັນທາງໃຫ້ສືບເດີນ

* ແມ່ເອີຍ! ເຖິງວຽກງານແມ່ຫຍຸ້ງ ໃຫ້ແມ່ສືບຕໍ່ທົນໄປ
ຖ້າວ່າ ຕັດສິນໃຈ ແນ່ນອນຕ້ອງເດີນໄດ້
ເພາະວ່າພັກໄດ້ໄຂທາງໃຫ້ ປວງຊົນໄດ້ຕາມໄຕ່
ແສງສະຫວ່າງໄດ້ສ່ອງແຈ້ງ ເຍືອງຍູ້ສົ່ງລາວ ນີ້ແລ້ວ

* ແມ່ເອີຍ! ຂໍໃຫ້ແມ່ແລະນ້າ ຈົ່ງເຕັມປຽມສາມດີ
ໜ້າທີ່ການທັງສອງ ຈົ່ງໝັ້ນປອງພຽນສູ້
ສ່ວນວ່າຈິດໃຈນັ້ນ ຂາວນວນ ແລະ ຜຸດຜ່ອງ

ສາມັກຄີ ພີ່ນ້ອງ

* ສຳຫຼັບພວກລູກນີ້
ຮ່ຳຮຽນດີ, ລະບຽບດີ
ທັງຈະເຝິກຝົນໃຫ້
ສີ່ ປະການຮອບຮູ້
* ອັນວາຮຽນຮູ້ນັ້ນ

ຮູ້ຮັກທ່ານຜູ້ນຳ
ຮູ້ຈັກເສຍ ຮູ້ຈັກໄດ້
ຜິດແລະຖືກກໍ່ໃຫ້ຈຳແນກໄດ້
* ດຽວນີ້ ລູກໜຸ່ມນ້ອຍ
ໃຫ້ແມ່ວາງໃຈສາ
ຄວາມສຸກສັນຈະມື້ນ
ພວກລູກ ຂໍຮັບໃຊ້
* ໃນໂອກາດສຸດທ້າຍ
ໃຫ້ຜູ້ແທນທັງໝົດ
ຂໍໃຫ້ພອນໄຊກາ
ເພື່ອນຳພົງເຜົ່າເຊື້ອ

ສາກົນກ້ວາງແລະເຜົ່າລາວ
ນີ້ທອນ

ຈະບຸກເບີກ ສາມດີ
ແລະ ສາມັກຄີໃຫ້ດີພ້ອມ
ຕົນເອງເປັນແບບຢ່າງ
ຈະໝາຍສູ່ໃຫ້ເກີດຜົນແມ່ເອີຍ
ແມ່ນຮູ້ຮັກຊາດແລະຮັກ ພໍ່ແມ່
ປະຊາຊົນ
ແລະຮູ້ອອກແຮງງານພ້ອມ
ໃຜເປັນສັດຕູ ແລະ ເປັນໝູ່
ຫຼັກໝັ້ນບໍ່ຫວັ່ນເຟືອນ ແມ່ເອີຍ
ອະນາຄົດຍັງໄກ
ອຸ່ນອ່ຽມຢ່າເຄືອງແຄ້ນ
ພາຍລຸ່ມ ເມື່ອລູກໃຫຍ່
ແທນເຊື້ອສືບສະກຸນ ນີ້ແລ້ວ
ພວກລູກອວຍພອນໄຊ
ຈົ່ງຊື່ນກາຍ ແລະ ໃຈພ້ອມ
ແຖມລາສີທ່ານ ສູງສົ່ງ
ລາວກາວຕະຫຼອດໄປ ນັ້ນທອນ.

24/vn
ຫ້າມຈຳໜ່າຍ



* ກອງປະຊຸມຄົບຄະນະຄັ້ງປະຖົມມະເລີກຂອງຄະນະບໍລິຫານງານສູນກາງ
ສະຫະພັນແມຍິງລາວຊຸດທີ່ II.



* ຄະນະປະຈຳສູນກາງສະຫະພັນແມ່ຍິງລາວຊຸດທີ່ II



* ທ່ານ ນາງບົວວອນ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ຂຶ້ນ
ລາຍງານຜົນການເລືອກຕັ້ງຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ
ຊຸດທີ່ II ຕໍ່ກອງປະຊຸມໃຫຍ່.

# ລາຍງານຜົນການເລືອກຕັ້ງຄະນະບໍລິຫານງານສູນກາງ
# ສະຫະພັນແມ່ຍິງລາວຊຸດທີ່ II

ຮຽນ : ຄະນະປະທານ ທີ່ນັບຖື !

ບັນດາສະຫາຍຜູ້ແທນ ແລະ ແຂກຜູ້ມີກຽດ !

ໄດ້ຮັບການມອບໝາຍຈາກຄະນະປະທານກອງປະຊຸມໃຫຍ່ ຂ້າພະເຈົ້າຂໍລາຍງານຜົນຂອງການເລືອກຕັ້ງ ຄະນະບໍລິຫານງານສູນກາງ ສະຫະພັນແມ່ຍິງລາວຊຸດທີ II. ກຳມະການໃນຄະນະບໍລິຫານງານຊຸດນີ້ ລວມມີ 37 ສະຫາຍ ປະກອບດ້ວຍພະນັກງານແມ່ຍິງບັນດາເຜົ່າໃນທຸກຊຸມຊົນຈຳນວນດັ່ງກ່າວມີຕົວແທນຂອງແມ່ຍິງອ້ອມຂ້າງສູນກາງ, ຕົວແທນແມ່ຍິງຢູ່ທ້ອງຖິ່ນ ຕົວແທນຂອງແມ່ຍິງຈາກກົມກອງການຜະລິດ, ໃນກຳລັງປະກອບອາວຸດ ບັນດາສະຫາຍເຫຼົ່ານີ້ ຜູ້ອາຍຸຕ່ຳສຸດ 29 ປີ, ສູງສຸດ 50 ປີ ອາຍຸ ສະເລ່ຍແມ່ນ 40 ເຊິ່ງແມ່ນພະນັກງານຜູ້ທີ່ໄດ້ຜ່ານວຽກງານແມ່ຍິງມາກ່ອນແລ້ວ, ທັງເປັນຜູ້ດີເດັ່ນຂຶ້ນໃນຂະບວນການຕົວຈິງ ໃນໄລຍະຜ່ານມາ , ເປັນຜູ້ທີ່ມີຄຸນງາມຄວາມດີ ແລະ ຖືກຕາມມາດຖານເງື່ອນໄຂທີ່ ກອງປະຊຸມໃຫຍ່ໄດ້ກຳນົດໄວ້.

ບັນດາສະຫາຍທີ່ໄດ້ຮັບການເລືອກຕັ້ງເປັນກຳມະການ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວຊຸດທີ II ມີລາຍຊື່ດັ່ງລຸ່ມນີ້ :

1.- ສະຫາຍ ນາງ ອ່ອນຈັນ ທຳມະວົງ

2.- -"- ດາວອນ ວົງສັກ

3.- -"- ເຂັມເພັດ ພົມເສນາ

4.- -"- ບົວອອນ

5.- -"- ບຸນເຫຼືອ ລໍວັນໄຊ

6.- -"- ທອງວັນ ສີພັນດອນ

7.- -"- ຄຳໝັ້ນ ຫາວົງລາດ

8.- -"- ບຸນຍາ ພິນສະຫວາດ

9.- -"- ພູທອນ ເພັດສະລາດ

10.- -"- ທອງຄຳ ວັນນະລັດສະໝີ

11.- -"- ສົມໝາຍ ວົງນະຄອນ

12.- -"- ແກູ່ນທີນ ຄັດສະຫວາງ

13.- -"- ແກວ ອິນຕະພົງ

14.- -"- ບົວພັນ ລີກາຍຢາ

15.- ສະຫາຍ ນາງ ສົມພັນ ແສງສຸລິໂຍ

16.- -"- ທອງພັນ ຈັນທະລານົນ

17.- -"- ຈັນທາ ວົງດາວັນ

18.- -"- ໄຕເພັດ ສີລາເພັດ

19.- -"- ໄມວົງ

20.- -"- ສີມົວ

21.- -"- ອິນຕາ ໄຊມູນຄຳ

22.- -"- ເຂ້ອງຄຳ

23.- -"- ສົມລິດ ວິໄລເສີນ

24.- -"- ໝູ້ອງ ແທ່ງສີສົມບັດ

25.- -"- ດຣ.ດູວງຈັນ ວັນທານຸວົງ

26.- -"- ນອຍ

27.- -"- ພັນສີ

28.- -"- ບຸນເພັງ ບົວລະພາ

29.- -"- ຢອງ

30.- -"- ບົວທອງ

31.- -"- ສີວໄລ ລາຊາຈັກ

32.- -"- ຄຳພັດ

33.- -"- ວິໄລວຽງ ພິມມະສອນ

34.- -"- ດວງຕາ

35.- -"- ຈັນດີ ປັນແກ້ວ

36.- -"- ບົວລອນ ວົງດາລາແສນ

37.- -"- ດຣ.ບຸນຍົງ ບຸບຜາ .

ຂ້າພະເຈົ້າຂໍລາຍງານຕໍ່ກອງປະຊຸມໃຫຍ່ດ້ວຍຄວາມປິຕິຊົມຊື່ນວ່າ ກອງປະຊຸມຄົບຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງລາວຄັ້ງທີ 1 (ສະໄໝທີ II) ໄດ້ເປັນເອກະສັນກັນເລືອກຕັ້ງເອົາສະຫາຍ ນາງ ອ່ອນຈັນ ທຳມະວົງ ເປັນປະທານສູນກາງສະຫະພັນແມ່ຍິງລາວ.

-ກອງປະຊຸມຄົບຄະນະໄດ້ເປັນເອກະສັນກັນເລືອກເອົາສະຫາຍ ນາງ ດາວອນ ວົງສັກ ເປັນຮອງປະທານ ສູນກາງສະຫະພັນແມ່ຍິງລາວ.

-ກອງປະຊຸມຄົບຄະນະໄດ້ເປັນເອກະສັນກັນເລືອກຕັ້ງເອົາຄະນະ ປະຈຳສູນກາງສະຫະພັນແມ່ຍິງລາວ ປະກອບດ້ວຍບັນດາສະຫາຍດັ່ງນີ້ :

1.- ສະຫາຍ ນາງ ອ່ອນຈັນ ທຳມະວົງ

2.- -"- ດາວອນ ວົງສັກ

3.- -"- ເຂັມເພັດ ພົມເສນາ

4.- -"- ບົວວອນ

5.- -"- ບຸນເຫຼືອ ລໍ່ວັນໄຊ .

- ການເລືອກຕັ້ງໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດ ເບີກບານ ມ່ວນຊື່ນ ຖືກຕ້ອງຕາມຫລັກການລວມສູນ ປະຊາທິປະໄຕ ແລະ ເປັນເອກະພາບຢ່າງສູງ .





* ທ່ານນາງ ດາວອນ ວົງສັກ ຮອງປະທານສະຫະພັນແມຍິງລາວ ຂຶ້ນອ່ານ
ມະຕິຕໍ່ກອງປະຊຸມໃຫຍ່.

# ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ II
# ຂອງສະຫະພັນ ແມ່ຍິງລາວ

-----++++++-----

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ່ II ຂອງສະຫະພັນແມ່ຍິງລາວໄດ້ໄຂຂຶ້ນ ຢູ່ນະຄອນຫຼວງວຽງຈັນ ແຕ່ວັນທີ 13 ເຖິງ ວັນທີ 14ຕຸລາ 1988, ມີຜູ້ແທນສົມບູນເຂົ້າຮ່ວມ 225 ຄົນ.

ພາຍຫຼັງໄດ້ຮັບຟັງ ແລະ ອະພິປາຍລາຍງານການເມືອງຂອງ ຄະນະສະຫະພັນແມ່ຍິງລາວ ກອງປະຊຸມໃຫຍ່ສະຫະພັນແມ່ຍິງລາວຄັ້ງທີ່ II ລົງມະຕິ :

1.) ກອງປະຊຸມໃຫຍ່ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ ສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ໄດ້ໃຫ້ຄຳໂອວາດ ຕັກເຕືອນອັນລ້ຳຄ່າໃຫ້ກອງປະຊຸມໃຫຍ່ຂອງພວກເຮົາ. ພວກເຮົາຖືເປັນຄຳສັ່ງ, ເປັນເຂັມຊີ້ທິດ ໃຫ້ທຸກການເຄື່ອນໄຫວຂອງຂະບວນແມ່ຍິງລາວ ບັນດາເຜົ່າ ໃນທົ່ວປະເທດ, ກອງປະຊຸມເປັນເອກະສັນກັນ ຕັດສິນໃຈປະຕິບັດຕາມຄຳ ໂອວາດຕັກເຕືອນດັ່ງກ່າວນັ້ນ ໃຫ້ປາກົດຜົນເປັນຈິງ .

2.) ກອງປະຊຸມໃຫຍ່ເປັນເອກະສັນຢ່າງສົມບູນກັບ ລາຍງານການເມືອງຂອງຄະນະບໍລິຫານງານ ສະຫະພັນແມ່ຍິງລາວທົ່ວປະເທດ, ລາຍງານການເມືອງດັ່ງກ່າວໄດ້ຕີລາຄາຢ່າງຖືກຕ້ອງ ແລະ ເລິກເຊິ່ງຂອງ ຂະບວນການເຄື່ອນໄຫວສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າທົ່ວປະເທດ, ຍົກໃຫ້ເຫັນຜົນງານ ແລະ ໄຊຊະນະ, ເຫັນແຈ້ງຈຸດອ່ອນ ຄົງ

ລ້າງ ເຊິ່ງຈະຕ້ອງພ້ອມກັນສູ້ຊົນ ຜ່ານຜ່າ, ແກ້ໄຂໃນຕໍ່ໜ້າ ແລະ ຖອດຖອນບົດຮຽນອັນປະເສີດໃນເບື້ອງຕົ້ນ ຂະບວນແມ່ຍິງລາວ ອັນເປັນການໄຂຊ່ອງທາງໃຫ້ແກ່ການເຄື່ອນໄຫວຂອງບັນດາອົງການຈັດຕັ້ງ ສະຫະພັນແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າ .

3.) ກອງປະຊຸມໃຫຍ່ໄດ້ເປັນເອກະສັນຢ່າງສົມບູນ ກ່ຽວກັບ. **ໜ້າທີ່** ລວມ ແລະ ໜ້າທີ່ສະເພາະໜ້າຂອງຂະບວນການແມ່ຍິງ **ໃນໄລຍະໃໝ່** ກອງປະຊຸມໃຫຍ່ມອບໃຫ້ ຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງລາວ ຊຸດທີ II, ຈັດຕັ້ງພັນຂະຫຍາຍມະຕິກອງປະຊຸມໃຫຍ່ໃນທົ່ວສະຫະພັນ ແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າ ໃນທົ່ວປະເທດ, ຈັດຕັ້ງຊີ້ນຳ ນຳພາ ການປະຕິບັດໜ້າທີ່, ໂດຍຜ່ານການເຄື່ອນໄຫວຕ່າງໆ ຄື: ການຜະລິດ, ການບໍລິການ, ການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ການ ຮ່ຳຮຽນເຝິກຝົນຕົນເອງ ຈາກນັ້ນ ເພື່ອເປີດກວ້າງ ແລະ ຊຸກຍູ້ຂະບວນການ ແຂ່ງຂັນ ປະຕິບັດຄຳຂວັນ 3 ດີ 2 ໜ້າທີ່ ໃຫ້ໄດ້ຮັບຜົນສຳເລັດ ຢ່າງ ງົດງາມ .

4.) ກອງປະຊຸມໃຫຍ່ເປັນເອກະສັນຢ່າງສົມບູນ ກ່ຽວກັບກົດລະບຽບ ຂອງສະຫະພັນແມ່ຍິງລາວ. ຖືເອົາກົດລະບຽບນີ້ ມີຜົນບັງຄັບ ປະຕິບັດເປັນ ທາງການ ນັບແຕ່ວັນທີ 15 ຕຸລາ 1988 ເປັນຕົ້ນໄປ, ກໍ່ສ້າງ ສະຫະພັນ ແມ່ຍິງລາວໃຫ້ເຕີບໃຫຍ່ເຂັ້ມແຂງ, ທົ່ວເຖິງເປັນເອກະພາບ ທາງດ້ານ ການເມືອງ ແນວຄິດ ແລະ ການຈັດຕັ້ງ .

5.) ກອງປະຊຸມໃຫຍ່ ຮຽກຮ້ອງມາຍັງພະນັກງານ ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າ ຢູ່ໃນທົ່ວປະເທດ ຈົ່ງພ້ອມກັນ ເສີມຂະຫຍາຍມູນເຊື້ອ ສາມັກຄີ, ມູນເຊື້ອຮັກຊາດ ແພງເຊື້ອ ປະກອບສ່ວນ ຢ່າງ ສົມກຽດເຂົ້າໃນການປະຕິບັດ 2 ໜ້າທີ່ ຍຸດທະສາດຂອງພັກຄື ປົກປັກຮັກສາ ປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມ, ຕັດສິນໃຈປະຕິບັດ ຄຳ

ຂວັນ 3 ດີ 2 ໜ້າທີ່ ໃຫ້ປາກົດຜົນເປັນຈິງ. ເພີ່ມທະວີ ຄວາມສາມັກຄີ ແລະ ຮ່ວມມືຮອບດ້ານ ກັບ ແມ່ຍິງຫວຽດນາມ, ກຳປູເຈຍ. ສາມັກຄີ ມິດຕະພາບ ແລະ ຮ່ວມມືຮອບດ້ານ ກັບ ແມ່ຍິງໂຊວຽດ, ບັນດາແມ່ຍິງ ປະເທດອາຍນອງ ແລະ ເພື່ອນມິດໃນໂລກ .





* ຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ໄດ້ເປັນເອກກະສັນກັນຜ່ານມະຕິຂອງກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ II

# ສູນທອນພົດ
## ກ່າວອັດກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດ
## ຄັ້ງທີ່ II

-----+++++-----

ຮຽນ ຄະນະປະທານ ທີ່ນັບຖື !

ບັນດາທ່ານຜູ້ແທນ ແລະ ແຂກຜູ້ມີກຽດທີ່ ນັບຖື !

ພາຍຫຼັງທີ່ໄດ້ດຳເນີນວຽກງານເປັນເວລາ 2 ວັນ ເຕັມດ້ວຍຈິດໃຈເຄັ່ງຮອນ ແລະ ຮັບຜິດຊອບສູງຂອງ ຜູ້ແທນທຸກຄົນ, ກອງປະຊຸມໃຫຍ່ ແມ່ຍິງລາວທົ່ວປະເທດຄັ້ງທີ່ II ໄດ້ສຳເລັດລົງຢ່າງສະຫງ່າງາມ.

ກອງປະຊຸມໃຫຍ່ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ແລະຖືເປັນກຽດຢ່າງສູງທີ່ໄດ້ຮັບຟັງຄຳໂອວາດຕັກເຕືອນອັນລ້ຳຄ່າຂອງສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ເຄົາລົບຮັກ, ພວກເຮົາຖືວ່າຄຳໂອວາດຕັກເຕືອນດັ່ງກ່າວນັ້ນເປັນເຂັມທິດ ເບື້ອງທາງໃຫ້ທຸກການເຄື່ອນໄຫວຂອງແມ່ຍິງລາວພວກເຮົາ. ກອງປະຊຸມໄດ້ໄຈແຍກ ຕີລາຄາຢ່າງຖືກຕ້ອງຕໍ່ ຂະບວນການ ແລະ ການ ປະກອບສ່ວນຂອງແມ່ຍິງເຂົ້າໃນພາລະກິດລວມຂອງຊາດ ໂດຍຜ່ານການເຄື່ອນໄຫວປະຕິບັດຄຳຂວັນ 3 ດີ 2 ຫນ້າທີ່ ຢ່າງເປັນຂະບວນຟົດຟື້ນກວ້າງຂວາງ ຊຶ່ງແມ່ນມະຕິຂອງກອງປະຊຸມໃຫຍ່ ແມ່ຍິງລາວທົ່ວປະເທດຄັ້ງທີ່ I ວາງອອກໄດ້ເປັນຢ່າງດີ. ພ້ອມກັນນັ້ນກອງປະຊຸມໃຫຍ່ກໍ່ໄດ້ສຳຫຼວດຖອດຖອນບົດຮຽນອັນປະເສີດຫຼາຍປະການ ຈາກພຶດຕິກຳຕົວຈິງໃນການຊີ້ນຳ ນຳພາ, ຈັດຕັ້ງປະຕິບັດ ແລະ ກໍ່ສ້າງປັບປຸງການຈັດຕັ້ງແບບແຜນວິທີເຮັດວຽກຂອງຄະນະສະຫະພັນແມ່ຍິງ ແຕ່ລະຂັ້ນອກດ້ວຍ

ກອງປະຊຸມໄດ້ວາງຫນ້າທີ່ລວມ ແລະ ຫນ້າທີ່ລະອຽດແຕ່ນີ້ເຖິງກອງປະຊຸມໃຫຍ່ຄັ້ງທີ III ແນໃສ່ເສີມຂະຫຍາຍບົດບາດຂອງສະຫະພັນ ແມ່ຍິງ ແລະ ຂະບວນການແມ່ຍິງລາວປະກອບສ່ວນຢ່າງຕັ້ງຫນ້າ ເຂົ້າໃນການປະຕິບັດຫນ້າທີ່ການເມືອງຂອງພັກ ໃນໄລຍະໃຫມ່ເປັນຕົ້ນແມ່ນ ການປະຕິບັດມະຕິ 5-6 ( ສະໄຫມທີ II ) ຂອງສູນກາງພັກ ແລະ ແຜນການ 5 ປີແຫ່ງລັດຄັ້ງທີ II ສໍາເລັດຜົນຢ່າງມີໄຊ .

ກອງປະຊຸມໃຫຍ່ຍັງໄດ້ເປັນເອກະສັນກັນ ຢ່າງສົມບູນ ຮັບຮອງເອົາກົດລະບຽບດັດແປງຂອງສະຫະພັນແມ່ຍິງລາວ ແນໃສ່ປັບປຸງອົງການ ສະຫະພັນແມ່ຍິງໃຫ້ເຂັ້ມແຂງ, ສົມເປັນຕົວແທນແຫ່ງສິດຜົນປະໂຫຍດຂອງ ແມ່ຍິງ ແລະ ເດັກນ້ອຍຢ່າງແທ້ຈິງ .

ກອງປະຊຸມໃຫຍ່ໄດ້ເລືອກຕັ້ງຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງຊຸດທີ II ຈໍານວນ 39 ສະຫາຍ ຊຶ່ງປະກອບດ້ວຍບັນດາ ສະຫາຍທີ່ດີເດັ່ນ ເປັນຕົວແທນທີ່ໄວ້ໃຈໄດ້ ຂອງແມ່ຍິງ ບັນດາເຜົ່າ ໃນ ທົ່ວປະເທດ.

ຜົນສໍາເລັດຂອງກອງປະຊຸມໃຫຍ່ຄັ້ງນີ້ແມ່ນ ຫມາກຜົນລວມຍອດ ແຫ່ງສະຕິປັນຍາ, ຄວາມຮູ້ ຄວາມສາມາດເປັນຫມູ່ຄະນະ ຊຶ່ງບັນດາຜູ້ແທນ ໄດ້ສຸມທຸກຄວາມພະຍາຍາມຄົ້ນຄວ້າ, ປະກອບຄໍາຄິດ ຄໍາເຫັນ ປະກອບເປັນເອກະສານທີ່ສົມບູນ, ເປັນຈຸດຫມາຍໃຫ້ການພັນຂະຫຍາຍຜົນສໍາເລັດ ຂອງກອງປະຊຸມໃຫຍ່ຄັ້ງນີ້ຢ່າງມີຈຸດສຸມ .

ກອງປະຊຸມໃຫຍ່ຂໍສະແດງຄວາມຮູ້ບຸນຄຸນ ຢ່າງເລິກເຊິ່ງຕໍ່ ສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ເຄົາລົບຮັກ, ຕໍ່ກົມການເມືອງ , ຄະນະເລຂາທິການສູນກາງພັກ ທີ່ໄດ້ເອົາໃຈໃສ່ຊີ້ນໍາ ນໍາພາສະຫະພັນແມ່ຍິງ ແລະ ຂະບວນການແມ່ຍິງລາວຕະຫຼອດມາ. ກອງປະຊຸມໃຫຍ່ຄັ້ງນີ້ ຂໍຢືນຢັນອີກເທື່ອຫນຶ່ງ ເຖິງຄວາມເຊື່ອຫມັ້ນຢ່າງຕາຍໃຈຕໍ່ ການນໍາພາອັນ ປີ

ຊາສາມາດຂອງພັກປະຊາຊົນປະຕິວັດລາວ, ແມ່ຍິງລາວພວກເຮົາຕັດສິນໃຈເດີນຕາມເສັ້ນທາງຂອງພັກຕະຫຼອດໄປ.

ກອງປະຊຸມໃຫຍ່ຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ ບັນດາຜູ້ແທນກອງປະຊຸມ, ທີ່ໄດ້ປະກອບສ່ວນເຂົ້າໃນການຄົ້ນຄວ້າເອກະສານ, ປະກອບຄຳຄິດ ຄຳເຫັນໃຫ້ແກ່ກອງປະຊຸມໃຫຍ່ ຢ່າງມີຜົນສັກສິດ ແລະ ດ້ວຍຄວາມເອົາໃຈໃສ່ .

ກອງປະຊຸມໃຫຍ່ຂໍຊົມເຊີຍສັນລະເສີນ ເອື້ອຍນ້ອງແມ່ຍິງທຸກທ້ອງຖິ່ນ, ທຸກຂົງເຂດວຽກງານໃນທົ່ວປະເທດ ທີ່ໄດ້ເປີດຂະບວນແຂ່ງຂັນ ຢ່າງຟົດຟື້ນ ສຳເລັດການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ I ຢ່າງມີໄຊ, ສ້າງຜົນງານໃຫຍ່ຫຼວງ ຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ II ຢ່າງສຸດອົກສຸດໃຈ .

ກອງປະຊຸມໃຫຍ່ ຂໍຂອບອົກຂອບໃຈ ແລະ ສັນລະເສີນພະນັກງານ , ພາລະກອນທຸກຂັ້ນ, ທຸກຂະແໜງການຕະຫຼອດເຖິງ ກົມກອງຕ່າງໆ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການກະກຽມ, ຮັບໃຊ້ ແລະ ຮັບ ປະກັນຄວາມປອດໄພ, ປະກອບສ່ວນສຳຄັນທີ່ສຸດ ເຂົ້າໃນຜົນສຳເລັດຂອງກອງປະຊຸມໃຫຍ່ຄັ້ງນີ້ ຢ່າງສຸດໃຈ .

ກອງປະຊຸມໃຫຍ່ຂໍສະແດງຄວາມ ຂອບໃຈຢ່າງຈິງໃຈຕໍ່ ອົງການ ຈັດຕັ້ງແມ່ຍິງປະຊາທິປະໄຕສາກົນ, ແມ່ຍິງບັນດາປະເທດສັງຄົມນິຍົມ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການຊ່ວຍເຫຼືອທັງ ວັດຖຸ ແລະ ຈິດໃຈໃຫ້ແກ່ກອງປະຊຸມ, ທັງໄດ້ແຕ່ງ ຄະນະຜູ້ແທນ ນຳເອົາໄມຕີຈິດມິດຕະພາບ ອັນດູດດື່ມ, ນ້ຳໃຈສາກົນອັນຜ່ອງໃສ, ຄວາມອວຍພອນອັນປະເສີດມາສູ່ ກອງປະຊຸມໃຫຍ່ຂອງພວກເຮົາ .

ຂໍສະແດງຄວາມຂອບອົກ ຂອບໃຈຢ່າງເລິກເຊິ່ງຕໍ່ ອົງການຈັດຕັ້ງແມ່ຍິງປະເທດຕ່າງໆ ທີ່ໄດ້ສົ່ງໂທລະເລກອວຍພອນ, ຝາກຂອງຂວັນມາຍັງ

ກອງປະຊຸມໃຫຍ່ຂອງພວກເຮົາໃນຄັ້ງນີ້.

ຂໍສະແດງຄວາມຂອບອົກ ຂອບໃຈຢ່າງຈິງໃຈຕໍ່ ແມ່ຍິງທີ່ຮັກຫອມ ສັນຕິພາບໃນໂລກ ທີ່ໄດ້ໃຫ້ການເປັນໃຈ ສະຫນັບສະຫນູນ ແລະ ໃຫ້ການຊ່ວຍເຫຼືອພາລະກິດພັດທະນາປະເທດຊາດຂອງແມ່ຍິງລາວຕະຫຼອດມາ .

ຮຽນ ບັນດາທ່ານ ແຂກຜູ້ມີກຽດ ,

ກອງປະຊຸມໃຫຍ່ຂອງພວກເຮົາຄັ້ງນີ້ ເປັນຂີດຫມາຍແຫ່ງ **ຄວາມ**ເຕີບໃຫຍ່ຂະຫຍາຍຕົວຂອງຂະບວນການແມ່ຍິງລາວເຮົາ, ເຖິງວ່າບົນເສັ້ນທາງກ້າວຂຶ້ນຂອງພວກເຮົາຍັງມີຄວາມຫຍຸ້ງຍາກຫຼາຍປະການກໍ່ຕາມ ແຕ່ແມ່ຍິງລາວພວກເຮົາມີຄວາມເຊື່ອຫມັ້ນ ຢ່າງຫນັກແຫນ້ນວ່າ: ພາຍໃຕ້ການນຳພາຂອງພັກ, ດ້ວຍມານະຈິດປະຕິວັດ ອັນເປັນມູນເຊື້ອຂອງຕົນ, ແມ່ຍິງລາວພວກເຮົາຂໍຕັດສິນໃຈຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ປາກົດຜົນເປັນຈິງ .

ຂ້າພະເຈົ້າຂໍອວຍໄຊໃຫ້ພອນແກ່ສະຫາຍ ເລຂາທິການໃຫຍ່ ໄກສອນ ພົມວິຫານ ບັນດາທ່ານຜູ້ນຳ ອື່ນໆ ຂອງພັກ ແລະ ລັດ, ແຂກຜູ້ມີກຽດທັງພາຍໃນ ແລະ ຕ່າງປະເທດ, ພ້ອມດ້ວຍຜູ້ແທນຂອງ ກອງປະຊຸມໃຫຍ່ທຸກຄົນ ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃຫມ່ໃນຫນ້າທີ່ ວຽກງານ ຂອງຕົນຢ່າງຈົບງາມ .

ໃນບັນຍາກາດອັນຄຶກຄື້ນນີ້, ຂ້າພະເຈົ້າຂໍປະກາດອັດກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ່ II ຢ່າງເປັນທາງການ .

* **ຂໍຂອບໃຈ** *

ข้อพิจารณา "Proposal draft"

* เพื่อรับรอง ลงชื่อแล้วส่งให้ Management and organisation

ใน ค.ณ.: เดินแผน ฯ.ศ.ก.

ความคิดประธาน แนะนำเอาไว้ใจกะแก่

* ที่ปรึกษาร่วม: ต้องบุญของเจ้า __บาญชา__

ก็ได้แล้ว.

"Study course in country"

(for: 10/15 person) x province.

ພິມທີ່ວິສະຫະກິດການພິມຈຳໜ່າຍສຶກສາ